ກະຊວງສຶກສາທິການ ແລະ ກິລາ

# ອຸປະສັກຕ່າງໆໃນການບັນລຸເປົ້າໝາຍ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ





## ບົດລາຍງານ

## ຜົນຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ກ່ຽວກັບການປະລະການຮຽນ ແລະ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃນຊັ້ນປະຖົມສຶກສາ

ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ

ເມສາ 2012

# ຄຳນຳ

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ໄດ້ກຳນົດເອົາການພັດທະນາຊັບພະຍາກອນມະນຸດ ເປັນໜຶ່ງໃນສີ່ບາດກ້າວບຸກທະລຸ ເພື່ອບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານເວົ້າລວມ, ເວົ້າສະເພາະແມ່ນເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDG) ພາຍໃນປີ 2015. ໝາຍຄວາມວ່າ ການສຶກສາແມ່ນເປັນພື້ນຖານຂອງສີ່ບາດກ້າວບຸກທະລຸຄື ຕ້ອງບຸກທະລຸຢ່າງແຂງແຮງດ້ານການພັດທະນາຊັບພະຍາກອນມະນຸດ.

ເພື່ອສຳເລັດເປົ້າໝາຍດັ່ງກ່າວມານັ້ນ ພວກເຮົາຕ້ອງຮັບປະກັນການບັນລຸເປົ້າໝາຍການສຶກສາຊັ້ນປະຖົມຢ່າງທົ່ວເຖິງ ແລະ ມີຄຸນນະພາບ ເພື່ອເປັນພື້ນຖານໃຫ້ແກ່ການສືບຕໍ່ຮ່ຳຮຽນໃນສາຍວິຊາການ, ນາຍຊ່າງເຕັກນິກ ຫຼື ວິຊາຊີບ ໃນອະນາຄົດ. ແຕ່ຜົນຂອງການພັດທະນາການສຶກສາຊັ້ນປະຖົມໃຫ້ທົ່ວເຖິງ ແລະ ມີຄຸນນະພາບນັ້ນ ຍັງບໍ່ໄປຕາມຄາດໝາຍທີ່ວາງອອກຄື ອັດຕາປະລະການຮຽນເພີ່ມຂຶ້ນ ແລະ ອັດຕາລອດເຫຼືອຮຽນຮອດ ປ.5 ມີແນວໂນ້ມຫຼຸດລົງຫຼຸບໃສ່ຊຸມປີທີ່ຜ່ານມາ, ຊຶ່ງເປັນສິ່ງທ້າທາຍໃຫ້ແກ່ການບັນລຸເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາຂອງຂະແໜງການສຶກສາພາຍໃນປີ 2015.

ຕໍ່ສະພາບບັນຫາດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ສ້າງທີມງານການສຳຫຼວດຂຶ້ນ ເພື່ອຊອກໃຫ້ເຫັນບັນດາປັດໄຈຕ່າງໆ ທີ່ເປັນສາເຫດຂອງການປະລະການຮຽນເພີ່ມຂຶ້ນ. ບົດລາຍງານສະບັບນີ້ ໄດ້ສະໜອງຂໍ້ມູນກ່ຽວກັບສອງສາເຫດຄື ສາເຫດທີ່ພົວພັນເຖິງການປະລະການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ສາເຫດຄວາມຫຍຸ້ງຍາກໃນການແຈກຢາຍປຶ້ມແບບຮຽນໃຫ້ແກ່ນັກຮຽນຊັ້ນປະຖົມສຶກສາ ເພື່ອຮັບປະກັນຄຸນນະພາບຂອງການສຶກສາ.

ຜົນຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນນີ້ ຍັງໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງເຖິງ ຄວາມຮັບຜິດຊອບຂອງຜູ້ບໍລິຫານການສຶກສາໃນຂັ້ນທ້ອງຖິ່ນ ແລະ ພໍ່ແມ່/ຜູ້ປົກຄອງເດັກ. ນອກຈາກນີ້ ຄວາມທຸກຍາກຂອງຄອບຄົວຍັງເປັນສິ່ງທ້າທ້າຍຕົ້ນຕໍ ຍ້ອນຄອບຄົວຂອງເດັກນັກຮຽນຍັງຂາດເຂີນປັດໄຈພື້ນຖານໃນການດຳລົງຊີວິດເຊັ່ນ: ດ້ານສະບຽງອາຫານ, ເຄື່ອງນຸ່ງຮົ່ມທີ່ຈຳເປັນ, ທີ່ຢູ່ອາໄສຖາວອນ, ຄວາມສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ ແລະ ອື່ນໆ ຊຶ່ງເປັນອຸປະສັກໃນການບັນລຸເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ.

ເພື່ອແກ້ໄຂບັນຫາອຸປະສັກດັ່ງກ່າວນັ້ນ ທຸກພາກສ່ວນທີ່ກ່ຽວຂ້ອງຈາກພາຍໃນ ແລະ ພາຍນອກຂອງຂະແໜງການສຶກສາ ຈະຕ້ອງເອົາໃຈໃສ່ແກ້ໄຂບັນຫາຂ້າງເທິງນັ້ນຢ່າງຈິງຈັງ ເນື່ອງຈາກວ່າມີພຽງແຕ່ຂະແໜງການສຶກສາເທົ່ານັ້ນກໍຈະບໍ່ສາມາດແກ້ໄຂບັນຫານັ້ນໄດ້ ຖ້າຫາກປາສະຈາກການຮ່ວມມືຢ່າງໃກ້ຊິດຈາກອົງການຈັດຕັ້ງຕ່າງໆຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ. ໃນນີ້, ສິ່ງສຳຄັນທີ່ສຸດແມ່ນຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນແຂວງ, ເມືອງ ແລະຄະນະພັດທະນາການສຶກສາຂັ້ນບ້ານໃຫ້ຫຼາຍຂຶ້ນຕື່ມ ເພື່ອເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການ ຊີ້ນຳນຳພາປະຊາຊົນບັນດາເຜົ່າ ຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດຕ່າງໆ

ໃນການແກ້ໄຂຄວາມທຸກຍາກຂອງພໍ່ແມ່/ຜູ້ປົກຄອງເດັກທີ່ຢູ່ໃນເຂດຫ່າງໄກສອກຫຼີກ ດ້ວຍການປັບປຸງເງື່ອນໄຂການດໍາລົງຊີວິດຂອງເຂົາເຈົ້າ ໃຫ້ເພີ່ມຄວາມຮັບຜິດຊອບສົ່ງລູກຫຼານຂອງຕົນທີ່ຢູ່ໃນໄວຮຽນຊັ້ນປະຖົມສຶກສາໄດ້ເຂົ້າຮຽນຢ່າງທົ່ວເຖິງ ແລະ ມີຄຸນນະພາບ.

ພ້ອມດຽວກັນນີ້ ກະຊວງສຶກສາທິການ ແລະ ກິລາ ກໍຕ້ອງເພີ່ມທະວີການກວດກາຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດດັ່ງກ່າວ ໃຫ້ເປັນລະບົບປົກກະຕິ ເພື່ອຮັບປະກັນການປະຕິບັດຄາດໝາຍຕ່າງໆໃຫ້ໄດ້ຕາມແຜນການທີ່ວາງໄວ້ ໃນແຕ່ລະໄລຍະ.

ລັດຖະມົນຕີວ່າການ

ກະຊວງສຶກສາທິການ ແລະ ກິລາ

ລີຕູ ບົວປາວ

**ຄຳສັບຫຍໍ້:**

| | |
|---|---|
| ກອປ | ກົມອະນຸບານ ແລະ ປະຖົມສຶກສາ |
| ຂພສສ | ຂອບພັດທະນາຂະແໜງການສຶກສາ |
| ຄພສບ | ຄະນະພັດທະນາການສຶກສາຂັ້ນບ້ານ |
| ສກຂ | ພະແນກສຶກສາທິການ ແລະ ກິລາແຂວງ |
| ສກມ | ຫ້ອງການສຶກສາທິການ ແລະ ກິລາເມືອງ |
| ສຕສ | ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ |
| ສຍວ | ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ |
| BEGP | Basic Education Girls Project |
| BSDP | Basic Education Sector Development |
| EQIP | Education Quality Improvement Project |
| KOICA | Korea International Cooperation Agency |
| (MDG 2&3) | Millennium Development Goal 2 & 3 |
| RAS | Rapid Assessment Survey |
| UPE | Universal Primary Education |

## ສາລະບານ


**ຄຳນຳ**...................................................................................................... i

**ຄຳສັບຫຍໍ້**.................................................................................................. iii

**ສາລະບານ**.................................................................................................. iv

**ບົດສັງລວມຫຍໍ້**.............................................................................................. 1

**ພາກທີ I: ການປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ**.............................................. 4

1. ປະຫວັດຄວາມເປັນມາຂອງການປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ.............................. 4

2. ການວິເຄາະຂໍ້ມູນໃນເບື້ອງຕົ້ນ.............................................................................. 5

3. ການທົບທວນວັນນະກຳທີ່ກ່ຽວຂ້ອງກັບການປະລະການຮຽນໃນຊັ້ນປະຖົມ.................................... 7

4. ຈຸດປະສົງຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການປະລະການຮຽນ................ 9

5. ວິທີວິທະຍາຂອງການສຳຫຼວດ ແລະ ການປະເມີນຜົນອັນຮີບດ່ວນກ່ຽວກັບການປະລະການຮຽນ.............. 9

6. ຜົນຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການປະລະການຮຽນ...................... 12

ກ. ສາເຫດພາຍໃນ........................................................................................ 12

ຂ. ສາເຫດພາຍນອກ...................................................................................... 17

ຄ. ນິຍາມການປະລະ ແລະ ການເກັບກຳຂໍ້ມູນ............................................................... 20

7. ແຜນປະຕິບັດງານກ່ຽວກັບການຫຼຸດຜ່ອນອັດຕາປະລະການຮຽນຊັ້ນປະຖົມສຶກສາ............................ 24

ກ. ສາເຫດພາຍໃນ........................................................................................ 24

ຂ. ສາເຫດພາຍນອກ...................................................................................... 25

ຄ. ນິຍາມການປະລະ ແລະ ການເກັບກຳຂໍ້ມູນ............................................................... 26

**ພາກທີ II: ການແຈກຢາຍປຶ້ມແບບຮຽນ ແລະ ຄູ່ມືຄູ**.......................................................... 28

1. ປະຫວັດຄວາມເປັນມາຂອງການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ............................................ 28

2. ຈຸດປະສົງຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ... 30

3. ວິທີວິທະຍາຂອງການສຳຫຼວດ ແລະ ປະເມີນຜົນແບບຮີບດ່ວນກ່ຽວກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ...... 30

4. ຜົນຂອງການສຳຫຼວດ ແລະ ປະເມີນຜົນແບບຮີບດ່ວນກ່ຽວກັບການແຈກຢາຍປື້ມແບບຮຽນ-ຄູ່ມືຄູ...............31

ກ. ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປື້ມແບບຮຽນ-ຄູ່ມືຄູ.............................31

ຂ. ຂະບວນການແຈກຢາຍປື້ມແບບຮຽນ-ຄູ່ມືຄູ.................................................................... 32

ຄ. ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ.........................33

ງ. ການເກັບຮັກສາປື້ມແບບຮຽນ-ຄູ່ມືຄູ..........................................................................34

ຈ. ການຄຸ້ມຄອງ ແລະ ການກວດກາຕິດຕາມການແຈກຢາຍປື້ມແບບຮຽນ-ຄູ່ມືຄູ.....................................35

5. ແຜນປະຕິບັດງານກ່ຽວກັບການແຈກຢາຍປື້ມແບບຮຽນ-ຄູ່ມືຄູ......................................................36

ກ. ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປື້ມແບບຮຽນ-ຄູ່ມືຄູ.............................36

ຂ. ຂະບວນຂອງການແຈກຢາຍປື້ມແບບຮຽນ-ຄູ່ມືຄູ..................................................................37

ຄ. ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ.........................37

ງ. ການເກັບຮັກສາປື້ມແບບຮຽນ-ຄູ່ມື...............................................................................38

ຈ. ການຄຸ້ມຄອງ ແລະ ການກວດກາຕິດຕາມການແຈກຢາຍປື້ມແບບຮຽນ-ຄູ່ມືຄູ.....................................38

ເອກະສານອ້າງອີງ.........................................................................................40

ເອກະສານຊ້ອນທ້າຍ......................................................................................42

# ບົດສັງລວມຫຍໍ້

ໃນທົດສະວັດທີ່ຜ່ານມາ ຂະແໜງການສຶກສາໄດ້ຮັບການປັບປຸງທາງດ້ານ ປະລິມານ ແລະ ຄຸນນະພາບ ແລະ ມີຜົນສໍາເລັດຢ່າງຕໍ່ເນື່ອງໃນຫຼາຍດ້ານ. ຄຽງຄູ່ກັບຜົນສໍາເລັດດັ່ງກ່າວ ກໍຍັງມີບາງດ້ານຍັງເປັນສິ່ງທ້າທາຍ ຊຶ່ງມັນໄດ້ສະແດງອອກໃນບົດລາຍງານທາງດ້ານສະຖິຕິການສຶກສາໃນສົກຮຽນ 2009/10-2010/11 ຜ່ານມານີ້ຄື: ອັດຕາການຮຽນຈົບຊັ້ນປະຖົມຫຼຸດລົງຢ່າງໜ້າເປັນຫ່ວງ ແລະ ອັດຕາປະລະການຮຽນຊັ້ນ ປ.1 ເພີ່ມຂຶ້ນຢ່າງຕໍ່ເນື່ອງ. ນອກຈາກນັ້ນ ຍັງມີບັນຫາການຂາດເຂີນປຶ້ມແບບຮຽນໃນຊັ້ນປະຖົມສຶກສາ, ເຖິງແມ່ນວ່າກະຊວງສຶກສາທິການ ແລະ ກິລາ ໄດ້ມີນະໂຍບາຍສະໜອງປຶ້ມແບບຮຽນໃຫ້ນັກຮຽນ 1 ຄົນ ຕໍ່ 1 ຊຸດ (ຂພສສ, ໜ້າ 55) ແລ້ວກໍຕາມ, ແຕ່ການຈັດຕັ້ງປະຕິບັດນະໂຍບາຍຕົວຈິງ ຍັງບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ໄດ້ກໍານົດໄວ້ .

ເປົ້າໝາຍທີ 2 ຂອງສະຫັດສະວັດດ້ານການພັດທະນາໄດ້ລະບຸໄວ້ວ່າ ຕ້ອງຮັບປະກັນໃຫ້ເດັກນ້ອຍລາວທຸກຄົນນັບທັງຊາຍ ແລະ ຍິງ ທີ່ໄດ້ເຂົ້າຮຽນຊັ້ນ ປ.1 ໃນສົກຮຽນ 2011/12 ຕ້ອງສືບຕໍ່ຮຽນຮອດຊັ້ນ ປ.5 ໄດ້ຕາມຄາດໝາຍ 95% ໃນປີ 2015 (ເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDG) ຢູ່ ສປປ ລາວ, 2004 : 25), ກໍຄືຮັບປະກັນວ່າ ເດັກນ້ອຍລາວທຸກຄົນຕ້ອງໄດ້ຮັບການສຶກສາຊັ້ນປະຖົມຢ່າງທົ່ວເຖິງ (UPE) ນັ້ນເອງ. ແຕ່ກົງກັນຂ້າມ ໃນສອງສົກຮຽນທີ່ຜ່ານມາຄວາມຄືບໜ້າເພື່ອບັນລຸຄາດໝາຍດັ່ງກ່າວນັ້ນເຫັນວ່າມີລັກສະນະຫຼຸດນ້ອຍຖອຍລົງ ແລະ ບໍ່ເປັນໄປຕາມຄາດໝາຍທີ່ວາງໄວ້. ດັ່ງນັ້ນ, ກົມອະນຸບານ ແລະ ປະຖົມສຶກສາ (ກອປ) ຈຶ່ງໄດ້ຮ່ວມມືກັບ ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ) ຈັດຕັ້ງ ແລະ ດໍາເນີນການສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນ (RAS) ຂຶ້ນໃນເດືອນກັນຍາ ປີ 2011. ຈຸດປະສົງຕົ້ນຕໍຂອງການວິໄຈໃນຄັ້ງນີ້ແມ່ນ ເພື່ອພ້ອມກັນຊອກໃຫ້ເຫັນບັນຫາ ແລະ ສາເຫດຂອງການປະລະການຮຽນ ແລະ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ສໍາລັບຊັ້ນປະຖົມສຶກສາໃນ ສປປ ລາວ ແລະ ເພື່ອກໍານົດວິທີການແກ້ໄຂຈຸດບົກຜ່ອງດັ່ງກ່າວນັ້ນ.

ພາຍໃຕ້ການຊີ້ນໍາຂອງສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ ທີມງານການສໍາຫຼວດ ແລະ ການປະເມີນແບບຮີບດ່ວນ ຈາກກະຊວງສຶກສາທິການ ແລະ ກິລາ ຈໍານວນ 4 ທີມງານ ໄດ້ລົງໄປເຮັດການສໍາຫຼວດພາກສະໜາມຢູ່ 20 ເມືອງ ພາຍໃນ 7 ແຂວງ ເປົ້າໝາຍຄື: ແຂວງຫຼວງນໍ້າທາ, ອຸດົມໄຊ, ວຽງຈັນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື. ວິທີສຸ່ມຕົວຢ່າງເປົ້າໝາຍ 20 ເມືອງດັ່ງກ່າວ ແມ່ນໄດ້ໃຊ້ວິທີການຄັດເລືອກແບບສະເພາະເຈາະຈົງເອົາ (Purposive Sampling) ບ່ອນທີ່ມີອັດຕາການປະລະການຮຽນສູງ ແລະ ອັດຕາລອດເຫຼືອຮອດ ປ.5 ຕໍ່າ ຈາກບົດລາຍງານສະຖິຕິການສຶກສາປະຈໍາສົກຮຽນ 2009/10-2010/11. ການສໍາຫຼວດຄັ້ງນີ້ ເປັນການວິໄຈທາງດ້ານຄຸນນະພາບ ໂດຍນໍາໃຊ້ເຄື່ອງມືການສໍາພາດແບບເຄິ່ງໂຄງສ້າງ ແລະ ເຄື່ອງມືການສັງເກດແບບກວດສອບຕາມລາຍງານ. ສໍາລັບວິທີການສໍາພາດ ໄດ້ນໍາໃຊ້ການສໍາພາດແບບຈັດເປັນກຸ່ມເຊັ່ນ: ກຸ່ມຜູ້ບໍລິຫານການສຶກສາ ຈາກພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ປະກອບມີຂະແໜງ

ການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ, ການສຶກສານອກໂຮງຮຽນ ແລະ ອົບຮົມວິຊາຊີບຂັ້ນພື້ນຖານ, ສະຖິຕິ-ແຜນການ ແລະ ຂະແໜງກວດກາ-ປະເມີນຜົນ ລວມທັງໝົດ 28 ຄົນ; ກຸ່ມຜູ້ບໍລິຫານການສຶກສາ ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ປະກອບມີ ໜ່ວຍງານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ, ການສຶກສານອກໂຮງຮຽນ ແລະ ອົບຮົມວິຊາຊີບຂັ້ນພື້ນຖານ, ສະຖິຕິ-ແຜນການ ແລະ ໜ່ວຍງານກວດກາ-ປະເມີນຜົນ ລວມທັງໝົດ 76 ຄົນ; ກຸ່ມຄູສອນຫ້ອງ ປ.1 ຫາ ປ.4 ຈຳນວນທັງໝົດ 259 ຄົນ; ກຸ່ມນັກຮຽນຫ້ອງ ປ.3 ຫາ ປ.5 ລວມທັງໝົດ 475 ຄົນ ແລະ ກຸ່ມຄະນະພັດທະນາການສຶກສາຂັ້ນບ້ານ ປະກອບດ້ວຍອຳນວຍການໂຮງຮຽນປະຖົມ, ຄະນະບ້ານ, ຄະນະພັກ, ສາມອົງການຈັດຕັ້ງມະຫາຊົນ ແລະ ສະມາຄົມພໍ່ແມ່ນັກຮຽນ ລວມທັງໝົດ 495 ຄົນ. ໂຄງສ້າງບົດລາຍງານສະບັບນີ້ ປະກອບດ້ວຍ II ພາກ ທີ່ກ່ຽວຂ້ອງກັບອຸປະສັກຕ່າງໆໃນການບັນລຸເປົ້າໝາຍ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ (MDG 2&3).

ພາກທີ I ຂອງບົດລາຍງານສະບັບນີ້ ໄດ້ນຳສະເໜີຜົນຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບ ການປະລະການຮຽນໃນຊັ້ນປະຖົມສຶກສາ, ບັນຫາຂອງການປະລະດັ່ງກ່າວແມ່ນເກີດມາຈາກ 2 ສາເຫດຫຼັກຄື: ສາເຫດພາຍໃນ ແລະ ສາເຫດພາຍນອກ. ສາເຫດພາຍໃນແມ່ນກ່ຽວຂ້ອງກັບ ຄວາມຮັບຜິດຊອບຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ, ການບັນຈຸຄູ ແລະ ການສິດສອນຂອງຄູ, ປັດໄຈກ່ຽວກັບເດັກ, ຄວາມຮັບຜິດຊອບຂອງຄະນະພັດທະນາການສຶກສາຂັ້ນບ້ານ, ຄວາມຮູ້ຄວາມສາມາດຂອງພະນັກງານທີ່ເຮັດວຽກສຶກສາໃນຂັ້ນທ້ອງຖິ່ນ, ທີ່ຕັ້ງ ແລະ ການສະໜອງອຸປະກອນໃຫ້ໂຮງຮຽນ. ສາເຫດພາຍນອກ ແມ່ນກ່ຽວຂ້ອງກັບຄວາມຮັບຜິດຊອບຂອງພໍ່ແມ່/ຜູ້ປົກຄອງເດັກ, ວິທີການຈັດຕັ້ງປະຕິບັດນະໂຍບາຍ, ຄວາມທຸກຍາກຂອງຄອບຄົວ ແລະ ໄພພິບັດທຳມະຊາດ. ນອກຈາກສອງສາເຫດຫຼັກນັ້ນແລ້ວ ຍັງໄດ້ເວົ້າເຖິງປັດໄຈການກຳນົດນິຍາມກ່ຽວກັບການປະລະ ແລະ ການເກັບກຳຂໍ້ມູນ ຊຶ່ງພາໃຫ້ຂໍ້ມູນສະຖິຕິກ່ຽວກັບການປະລະການຮຽນໃນຊັ້ນປະຖົມບໍ່ຊັດເຈນ ແລະ ມີຄວາມຄາດເຄື່ອນຈາກຄວາມເປັນຈິງ.

ພາກທີ II ແມ່ນໄດ້ລາຍງານຜົນຂອງການສຳຫຼວດ ແລະ ປະເມີນຜົນແບບຮີບດ່ວນ ກ່ຽວກັບການສະໜອງປື້ມແບບຮຽນ-ຄູ່ມືຄູ, ຊຶ່ງຜົນຂອງການປະເມີນໄດ້ຊີ້ບອກວ່າ ບັນຫາຂອງການແຈກຢາຍປື້ມແບບຮຽນ ແລະ ຄູ່ມືຄູບໍ່ພຽງພໍ ປະກອບມີ 5 ສາເຫດຫຼັກຄື: ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປື້ມແບບຮຽນ-ຄູ່ມືຄູ, ຂະບວນການແຈກຢາຍປື້ມແບບຮຽນ-ຄູ່ມືຄູ, ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານຂັ້ນທ້ອງຖິ່ນ, ການເກັບຮັກສາປື້ມແບບຮຽນ-ຄູ່ມືຄູ, ການຄຸ້ມຄອງ ແລະ ການກວດກາ-ຕິດຕາມການແຈກຢາຍປື້ມແບບຮຽນ-ຄູ່ມືຄູ.

ສະຫຼຸບລວມແລ້ວ ສາເຫດຫຼັກຂອງການປະລະການຮຽນໃນຊັ້ນຊັ້ນປະຖົມສຶກສາ ແລະ ການແຈກຢາຍປື້ມແບບຮຽນ-ຄູ່ມືຄູ ແມ່ນເກີດມາຈາກຄວາມຮັບຜິດຊອບຂອງຜູ້ບໍລິຫານການສຶກສາໃນລະດັບທ້ອງຖິ່ນ. ສຳລັບການປະລະການຮຽນນັ້ນ ສາເຫດຕົ້ນຕໍແມ່ນຄວາມຮັບຜິດຊອບຂອງຜູ້ຄຸ້ມຄອງວຽກງານການສຶກສາຂັ້ນທ້ອງຖິ່ນ (ຜູ້ບໍລິຫານການສຶກສາຂັ້ນເມືອງ, ອຳນວຍການໂຮງຮຽນປະຖົມ, ຄູ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ) ແລະ ພໍ່ແມ່/ຜູ້ປົກຄອງເດັກ. ສ່ວນວ່າການແຈກຢາຍປື້ມ

ແບບຮຽນ ແລະ ຄູ່ມືຄູບໍ່ພຽງພໍນັ້ນ ກໍຍັງແມ່ນສາເຫດມາຈາກຄວາມຮັບຜິດຊອບຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນໃນການຂຶ້ນແຜນຄວາມຕ້ອງການ, ການຄຸ້ມຄອງ ແລະ ການກວດກາ-ຕິດຕາມ.

ໃນບົດລາຍງານສະບັບນີ້ ຍັງໄດ້ສະເໜີບັນດາຂໍ້ແນະນຳຕ່າງໆ ເພື່ອເປັນບ່ອນອີງໃນການແກ້ໄຂບັນຫາການປະລະການຮຽນ ແລະ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃນຊັ້ນປະຖົມສຶກສາ ຊຶ່ງໄດ້ສະແດງໃຫ້ເຫັນເຖິງ ຄວາມພະຍາຍາມຢ່າງຕັ້ງໜ້າຂອງກະຊວງສຶກສາທິການ ແລະ ກິລາ ໃນການຊອກຫາທຸກວິທີການ ເພື່ອແກ້ໄຂອຸປະສັກຕ່າງໆທີ່ສົ່ງຜົນກະທົບຕໍ່ການພັດທະນາການສຶກສາກໍຄືສິ່ງກີດຂວາງຕ່າງໆ ໃນການບັນລຸເປົ້າໝາຍການສຶກສາຊັ້ນປະຖົມຢ່າງທົ່ວເຖິງໃນປີ 2015. ຖ້າປາສະຈາກການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ເພື່ອເປັນບ່ອນອີງໃນການແກ້ໄຂບັນຫາຕ່າງໆໃຫ້ທັນການ ໂດຍຜ່ານຂະບວນການທົບທວນຄືນການສະໜອງງົບປະມານໃຫ້ແຕ່ລະຂະແໜງການຍ່ອຍ ແລະ ມີລະບົບການຕິດຕາມໃນແຕ່ລະຂັ້ນແລ້ວ ກໍອາດຈະບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ວາງໄວ້.

## ພາກທີ I: ການປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ

### 1. ປະຫວັດຄວາມເປັນມາຂອງການປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ

ໃນຊຸມປີທີ່ຜ່ານມາເຫັນວ່າ ຄວາມຄືບໜ້າທີ່ກ້າວໄປສູ່ການບັນລຸເປົ້າໝາຍ 2 ຂອງສະຫັດສະວັດດ້ານການພັດທະນາ ພ້ອມດ້ວຍຄວາມສະເໝີພາບລະຫວ່າງຍິງ-ຊາຍໃນຊັ້ນປະຖົມ ກໍ່ມີການປັບປຸງໃຫ້ດີຂຶ້ນເຊັ່ນດຽວກັນ. ອັດຕາການມາໂຮງຮຽນ ແລະ ອັດຕາລອດເຫຼືອ ກໍ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ແຕ່ອີງຕາມສະຖິຕິຂໍ້ມູນການສຶກສາໃນສົກຮຽນ 2010/11 ໄດ້ສະແດງໃຫ້ເຫັນຢ່າງໜ້າເປັນຫ່ວງ ເພາະວ່າຂໍ້ມູນດັ່ງກ່າວໄດ້ສະແດງໃຫ້ເຫັນການຊຸດໂຊມຂອງອັດຕາປະລະການຮຽນໃນຊັ້ນປະຖົມສຶກສາ. ຕາມຄວາມເປັນຈິງແລ້ວ ອັດຕາການປະລະການຮຽນໃນຊັ້ນ ປ.1 ຄ່ອຍໆຫຼຸດລົງເທື່ອລະໜ້ອຍໃນບັນດາສົກຮຽນທີ່ຜ່ານມາ (2007/08-2008/09) ແຕ່ມາເຖິງສົກຮຽນ (2009/10-2010/11) ພັດສະແດງໃຫ້ເຫັນທ່າອ່ຽງເພີ່ມຂຶ້ນໄປເລື້ອຍໆ ຢູ່ໃນທຸກຊັ້ນຮຽນຂອງຊັ້ນປະຖົມສຶກສາ ດັ່ງທີ່ສະແດງອອກໃນຮູບຂ້າງລຸ່ມນີ້:




ຈາກສະພາບບັນຫາທີ່ຊີ້ໃຫ້ເຫັນໃນແຜນວາດເສັ້ນສະແດງຂ້າງເທິງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງດຳເນີນການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນນີ້ຂຶ້ນ.

## 2. ການວິເຄາະຂໍ້ມູນໃນເບື້ອງຕົ້ນ

ເພື່ອບັນລຸເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາພາຍໃນປີ 2015 ຊຶ່ງມີຄວາມຈຳເປັນສຳລັບນັກຮຽນໝົດທຸກຄົນ ຜູ້ທີ່ໄດ້ເຂົ້າຮຽນໃນຊັ້ນປະຖົມປີທີ 1 ໃນເດືອນກັນຍາ ສົກຮຽນ 2011/12 ນີ້ ຈະສືບຕໍ່ຮຽນຈົນຈົບຊັ້ນປະຖົມປີທີ 5 ໃນສົກຮຽນ 2015/16. ເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ສິ່ງດັ່ງກ່າວນີ້ອາດຈະບໍ່ສາມາດບັນລຸໄດ້ຕາມຄາດໝາຍ ຖ້າຫາກວ່າອັດຕາປະລະການຮຽນຫາກຍັງສືບຕໍ່ເພີ່ມຂຶ້ນໄປເລື້ອຍໆເຊັ່ນນີ້.

ຍ້ອນສາເຫດໃດຈຶ່ງພາໃຫ້ເກີດມີອັດຕາປະລະການຮຽນເພີ່ມຂຶ້ນ ແລະ ເປັນຫຍັງຈຶ່ງເກີດຂຶ້ນໃນປະຈຸບັນນີ້ ພາຍຫຼັງທີ່ມີການປັບປຸງດີຂຶ້ນຢ່າງຕໍ່ເນື່ອງໃນໄລຍະ 2 ສົກຮຽນຄື: 2007/08 ແລະ 2008/09 ທີ່ຜ່ານມາ. ສະພາບການດັ່ງກ່າວນີ້ ອາດຈະກ່ຽວຂ້ອງກັບການເຄື່ອນຍ້າຍຂອງປະຊາກອນ, ການບໍ່ສົມສ່ວນຂອງການພັດທະນາໃນຕົວເມືອງ ແລະ ຊົນນະບົດ, ໂດຍສະເພາະຕໍ່ກັບວຽກງານປະຖົມສຶກສາ, ຄວາມທຸກຍາກຂອງຄອບຄົວເພີ່ມຂຶ້ນ, ສາເຫດອື່ນໆ ຫຼື ອາດຈະກ່ຽວຂ້ອງກັບການປະສົມປະສານຂອງບັນດາປັດໄຈຕ່າງໆ. ເບິ່ງຄືວ່າບັນດາປັດໄຈຕ່າງໆເຫຼົ່ານັ້ນ ໄດ້ມີຢູ່ໃນແຕ່ລະທ້ອງຖິ່ນທີ່ແຕກຕ່າງກັນ ແລະ ກຳລັງກະທົບຕໍ່ເດັກນ້ອຍທັງຊາຍ ແລະ ຍິງ ຢ່າງແຕກຕ່າງກັນ. ຕົວຢ່າງ: ອັດຕາປະລະການຮຽນໃນຂັ້ນ ປ.1 ຫຼາຍກວ່າໝູ່ສຳລັບເດັກຍິງແມ່ນຢູ່ແຂວງສາລະວັນ, ຫົວພັນ ແລະ ຊຽງຂວາງ ແຕ່ສຳລັບເດັກຊາຍ ຫຼາຍກວ່າໝູ່ແມ່ນຢູ່ແຂວງຫຼວງນ້ຳທາ, ວຽງຈັນ, ເຊກອງ ແລະ ອັດຕະປື. ການເຄື່ອນຍ້າຍຂອງປະຊາກອນ ລວມທັງການເຕົ້າໂຮມຂອງບ້ານ ແລະ ຄອບຄົວພາກັນຍ້າຍອອກຈາກຈຸດສຸມໃນການພັດທະນາໃນໄລຍະໃດໜຶ່ງແລ້ວພັດກັບຄືນສູ່ທີ່ຕັ້ງພູມລຳເນົາ[1]ເດີມ ຂອງພວກເຂົາອີກ. ສິ່ງດັ່ງກ່າວນີ້ອາດເປັນກໍລະນີສຶກສາວ່າ ຖ້າມີການສ້າງຂີດຄວາມສາມາດໃຫ້ພະນັກງານເກັບກຳສະຖິຕິ ຊຶ່ງອາດຈະຊ່ວຍໃຫ້ຂໍ້ມູນມີຄວາມຊັດເຈນ ແລະ ດີຂຶ້ນກວ່າແຕ່ກ່ອນ. ແຕ່ເຖິງຢ່າງໃດກໍ່ຕາມ, ຖ້າຂໍ້ມູນດັ່ງກ່າວນີ້ຫາກເປັນຄວາມຈິງ, ການປະລະການຮຽນໃນຊັ້ນປະຖົມສຶກສາກໍ່ຍັງເປັນບັນຫາຢູ່. ເພາະສະນັ້ນ, ຈຶ່ງເກີດມີຄຳຖາມທີ່ຕ້ອງຊອກຫາຄຳຕອບໃຫ້ໄດ້ດັ່ງລຸ່ມນີ້:

(ກ) ເປັນຫຍັງອັດຕາປະລະການຮຽນຊັ້ນປະຖົມຈຶ່ງສູງແທ້ ໂດຍສະເພາະແມ່ນຢູ່ໃນຂັ້ນ ປ.1 ແລະ ຢູ່ໃນບາງແຂວງ?

(ຂ) ເປັນຫຍັງອັດຕາປະລະການຮຽນຊັ້ນປະຖົມຈຶ່ງເພີ່ມຂຶ້ນໃນໄລຍະສອງປີທີ່ຜ່ານມາ?

ການທົບທວນຂໍ້ມູນຈາກເປົ້າໝາຍແຂວງໃນເບື້ອງຕົ້ນ ສະແດງໃຫ້ເຫັນຄວາມແຕກຕ່າງກັນທີ່ໜ້າສົນໃຈບາງຢ່າງ. ການເພີ່ມຂຶ້ນຂອງອັດຕາປະລະການຮຽນ ບໍ່ໄດ້ເກີດຢູ່ໃນໝົດທຸກໆແຂວງ ແຕ່ຄວາມແຕກຕ່າງກັນລະຫວ່າງເພດ ມີຄວາມແຕກຕ່າງກັນໃນແຕ່ລະແຂວງ. ອັດຕາປະລະການຮຽນ ຢູ່ແຂວງອຸດົມໄຊແມ່ນມີການປັບປຸງດີຂຶ້ນເທື່ອລະກ້າວແຕ່ເປີເຊັນຍັງຢູ່ໃນລະດັບສູງ (>20%). ແຂວງ

---

[1] ຢູ່ແຂວງສະຫວັນນະເຂດໄດ້ມີການສຳຫຼວດແລ້ວໂດຍກົມການສຶກສານອກໂຮງຮຽນເຊິ່ງອີງການອຸຍເນສໂກໃຫ້ການສະໜັບສະໜູນ ໃນຕົ້ນປີ 2011 ໃນການສົ່ງເສີມໂຄງການຄູເຄື່ອນທີ່ເພື່ອເຮັດໜ້າທີສອນຈຳນວນນັກຮຽນທີ່ເຄື່ອນຍ້າຍກັບຄືນສູ່ພູມລຳເນົາເດີມ

ທົ່ວພັນມີການປ່ຽນແປງເລັກນ້ອຍ ແຕ່ອັດຕາປະລະການຮຽນສຳລັບເດັກຊາຍຍັງສູງກວ່າ 15%. ແຂວງຜົ້ງສາລີ ອັດຕາປະລະການຮຽນສຳລັບເດັກຍິງຍັງສູງກວ່າ 15%. ໂດຍທົ່ວໄປແລ້ວ ອັດຕາປະລະການຮຽນໃນຂັ້ນ ປ.1 ທີ່ເພີ່ມຂຶ້ນສຳລັບເດັກຊາຍຊຶ່ງສະແດງວ່າ ມີຫຼາຍສາເຫດ ທີ່ເກີດຂຶ້ນໃນທົ່ວປະເທດ.

| ອັດຕາການປະລະການຮຽນໃນຂັ້ນ ປ.1 ແຍກຕາມແຂວງ | | | | | | | | | |
|---|---|---|---|---|---|---|---|---|---|
| | 2010/11 | | | 2009/10 | | | ເປີເຊັນການປ່ຽນແປງ | | |
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ນະຄອນຫຼວງ | 2.7% | 2.4% | 3.0% | 4.9% | 4.8% | 5.0% | 2.2% | 2.4% | 2.0% |
| ຜົ້ງສາລີ | 13.2% | 16.1% | 10.7% | 13.4% | 15.4% | 11.7% | 0.2% | -0.7% | 1.0% |
| ຫຼວງນ້ຳທາ | 12.2% | 11.3% | 13.0% | 6.9% | 8.2% | 5.8% | -5.3% | -3.1% | -7.2% |
| ອຸດົມໄຊ | 21.2% | 21.7% | 20.7% | 23.0% | 22.9% | 23.2% | 1.8% | 1.2% | 2.5% |
| ບໍ່ແກ້ວ | 11.1% | 10.8% | 11.3% | 12.9% | 12.0% | 13.7% | 1.8% | 1.2% | 2.4% |
| ຫຼວງພະບາງ | 12.4% | 10.4% | 14.3% | 13.6% | 12.9% | 14.3% | 1.2% | 2.5% | 0.0% |
| ຫົວພັນ | 12.6% | 10.0% | 14.9% | 12.5% | 9.6% | 15.0% | -0.1% | -0.4% | 0.1% |
| ໄຊຍະບູລີ | 3.9% | 2.8% | 4.9% | 5.3% | 3.9% | 6.5% | 1.4% | 1.1% | 1.6% |
| ຊຽງຂວາງ | 8.6% | 8.1% | 9.1% | 6.5% | 5.5% | 7.3% | -2.1% | -2.6% | -1.8% |
| ວຽງຈັນ | 9.9% | 8.3% | 11.4% | 5.5% | 5.6% | 5.4% | -4.4% | -2.7% | -6.0% |
| ບໍລິຄຳໄຊ | 4.5% | 3.9% | 5.0% | 6.0% | 5.8% | 6.1% | 1.5% | 1.9% | 1.1% |
| ຄຳມ່ວນ | 12.9% | 13.1% | 12.8% | 11.4% | 10.3% | 12.3% | -1.5% | -2.8% | -0.5% |
| ສະຫວັນນະເຂດ | 12.2% | 12.1% | 12.3% | 8.1% | 9.0% | 7.4% | -4.1% | -3.1% | -4.9% |
| ສາລະວັນ | 18.0% | 17.6% | 18.3% | 12.6% | 11.9% | 13.1% | -5.4% | -5.7% | -5.2% |
| ເຊກອງ | 14.4% | 13.5% | 15.3% | 9.1% | 10.1% | 8.2% | -5.3% | -3.4% | -7.1% |
| ຈຳປາສັກ | 11.3% | 10.6% | 12.0% | 10.7% | 10.0% | 11.4% | -0.6% | -0.6% | -0.6% |
| ອັດຕະປື | 16.9% | 15.8% | 17.9% | 9.6% | 10.1% | 9.2% | -7.3% | -5.7% | -8.7% |
| ສປປ ລາວ | 12.1% | 11.6% | 12.6% | 10.5% | 10.2% | 10.7% | -1.6% | -1.4% | -1.9% |

ຂໍ້ມູນການປະລະການຮຽນຂັ້ນປະຖົມ ຈາກສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ໃນສົກຮຽນ 2010/11 ໄດ້ແຍກອອກເປັນແຕ່ລະເມືອງ ເພື່ອກຳນົດພື້ນທີ່ບ່ອນທີ່ມີການປະລະການຮຽນຫຼາຍທີ່ສຸດ. ການແຍກຂໍ້ມູນການປະລະການຮຽນໃນຂັ້ນ ປ.1 ອອກເປັນເມືອງໃນແຕ່ລະແຂວງນັ້ນຍັງບໍ່ສາມາດບອກໄດ້ເຖິງສາເຫດທີ່ແທ້ຈິງ ຂອງບັນຫາການປະລະການຮຽນເພີ່ມຂຶ້ນຢູ່ໃນສອງສົກຮຽນຜ່ານມາ (2009/10 ແລະ 2010/11) ເພາະວ່າມັນເປັນພຽງຂໍ້ມູນສະຖິຕິແບບປະລິມານ ທີ່ຊ່ວຍໃຫ້ມີການວິເຄາະເບິ່ງບັນຫາໃນເບື້ອງຕົ້ນເທົ່ານັ້ນ. ເຖິງແນວໃດກໍຕາມ ການຄັດເລືອກເອົາຕົວແທນຂອງການສຸ່ມຕົວຢ່າງເພື່ອມາກຳນົດຈຸດປະສົງໃນການລົງເກັບກຳຂໍ້ມູນຢູ່ພາກສະໜາມໃນຄັ້ງນີ້ ແມ່ນໄດ້ອີງໃສ່ຂໍ້ມູນສະຖິຕິເບື້ອງຕົ້ນດັ່ງກ່າວ. ສິ່ງທີ່ກ່າວມານັ້ນ ໄດ້ນຳໄປເຖິງການຕົກລົງຮ່ວມກັນລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບຄູ່ຮ່ວມພັດທະນາ ໃນການດຳເນີນການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນໃນຄັ້ງນີ້.

## 3. ການທົບທວນວັນນະກຳທີ່ກ່ຽວຂ້ອງກັບການປະລະການຮຽນໃນຊັ້ນປະຖົມສຶກສາ

ການຊ່ວຍເຫຼືອ[2] ທາງດ້ານວິຊາການໃຫ້ແກ່ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ) ໃນການທົບທວນວັນນະກຳຈາກແຫຼ່ງຂໍ້ມູນການຄົ້ນຄວ້າວິໄຈຂະແໜງການສຶກສາ (ERF) ຂອງອົງການຊ່ວຍເຫຼືອສາກົນດ້ານການພັດທະນາອົດສະຕາລີ (AusAID) ໄດ້ໃຫ້ຂໍ້ມູນຫຼັກຖານຫຼາຍຢ່າງທີ່ພົວພັນເຖິງສາເຫດ ທີ່ພາໃຫ້ມີການປະລະການຮຽນຂອງນັກຮຽນຊັ້ນປະຖົມ ຢູ່ໃນບັນດາປະເທດກຳລັງພັດທະນາຕ່າງໆຊຶ່ງພໍສະຫຼຸບຫຍໍ້ໄດ້ດັ່ງນີ້:

ກ. ປັດໄຈທາງດ້ານເສດຖະກິດລວມທັງມູນຄ່າໃຊ້ຈ່າຍໃນການສຶກສາ

ຈາກບົດວິໄຈຂອງທ່ານ Somerset (2007) ຢູ່ປະເທດ Kenya ພົບວ່າອຸປະສັກທຳອິດທີ່ມີຕໍ່ການເຂົ້າຮຽນ ແລະ ການມາໂຮງຮຽນປົກກະຕິຂອງນັກຮຽນແມ່ນຄ່າທຳນຽມເຂົ້າຮຽນ. ທ່ານ Chimombo (2009) ຍັງໄດ້ວິໄຈກ່ຽວກັບບັນຫານີ້ຢູ່ປະເທດ Malawi ເຫັນວ່າການບໍ່ສາມາດຈ່າຍຄ່າທຳນຽມເຂົ້າຮຽນແມ່ນເປັນເຫດຜົນທີ່ສຳຄັນທີ່ເຮັດໃຫ້ເດັກບໍ່ເຂົ້າໂຮງຮຽນ ແລະ ປະລະການຮຽນ. ໃນທາງກົງກັນຂ້າມທ່ານ Chimombo (2009) ຍັງໄດ້ວິໄຈຕື່ມກ່ຽວກັບການລົບລ້າງຄ່າທຳນຽມໂຮງຮຽນຂອງລັດຖະບານປະເທດ Malawi ພົບວ່າປັດໄຈທາງດ້ານເສດຖະກິດກໍຍັງເປັນອຸປະສັກທີ່ມີລັກສະນະສູງສົມຄວນຕໍ່ກັບການເຂົ້າຮຽນ ແລະ ອອກໂຮງຮຽນຢູ່ ໂດຍສະເພາະແມ່ນຄອບຄົວທີ່ທຸກຍາກ ເພາະວ່າການຂາດເຂີນເຄື່ອງນຸ່ງຮົ່ມ ແລະ ການຂາດເຂີນທາງດ້ານການເງິນເພື່ອຊື້ອຸປະກອນການຮຽນເປັນເຫດຜົນທີ່ເດັກບໍ່ເຂົ້າໂຮງຮຽນ ແລະ ເດັກຍິງກໍ່ບໍ່ຄ່ອຍມາຮ່ວມກິດຈະກຳໃນຫ້ອງຮຽນ. *(ລາຍລະອຽດຢູ່ພາກຊ້ອນທ້າຍທີ 3)*

ຂ. ຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ

ຄຸນນະພາບຂອງການສຶກສາຕ່ຳ ໄດ້ເຮັດໃຫ້ຫຼາຍໂຮງຮຽນໄດ້ຮັບຜົນກະທົບທາງດ້ານລົບຕໍ່ການຮຽນ ແລະ ຄວາມກ້າວໜ້າທາງການຮຽນຂອງນັກຮຽນ ຊຶ່ງມີສ່ວນພົວພັນຢ່າງໃຫຍ່ຫຼວງ ຕໍ່ການປະລະການຮຽນຂອງນັກຮຽນ. ຈາກຜົນການວິໄຈຂອງທ່ານ Lewin (2007) ຢັ້ງຢືນວ່ານັກຮຽນອາດປະລະການຮຽນຍ້ອນເປັນເດັກທີ່ມີຄວາມຕ້ອງການພິເສດ ເຂົ້າຮຽນໂດຍບໍ່ໄດ້ຮັບການຊ່ວຍເຫຼືອໃນການຮຽນແບບເດັກພິເສດ ເຮັດໃຫ້ເສັງຕົກ, ຄ້າງຫ້ອງ ແລະ ອອກໂຮງຮຽນໃນທີ່ສຸດ. ນອກຈານັ້ນທ່ານ Hunt (2008) ໄດ້ເຮັດການວິໄຈພົບວ່າ ພາສາທີ່ນຳໃຊ້ໃນການສິດສອນ ກໍ່ມີອິດທິພົນສຳຄັນຕໍ່ກັບອັດຕາການຄ້າງຫ້ອງ ແລະ ການປະລະການຮຽນເຊັ່ນດຽວກັນ. ໂດຍສະເພາະແມ່ນ ອັດຕາການຄ້າງຫ້ອງ ແລະ ອັດຕາປະລະການຮຽນເພີ່ມຂຶ້ນໃນເມື່ອນັກຮຽນຖືກສອນໂດຍໃຊ້ພາສາທີ່ບໍ່ແມ່ນພາສາແມ່ຂອງພວກເຂົາເຈົ້າ. *(ລາຍລະອຽດຢູ່ພາກຊ້ອນທ້າຍທີ 3)*

---

[2] ບັນດາເອກະສານ ແລະ ສິ່ງພິມຕ່າງໆຈາກຖານຂໍ້ມູນຂອງຫໍສະມຸດ ACER Cunningham. ອ້າງອີງໄວ້ໃນເອກະສານຊ້ອນທ້າຍຂອງບົດລາຍງານນີ້.

ຄ. ປັດໄຈທີ່ພົວພັນເຖິງຄຸນລັກສະນະຂອງຄົວເຮືອນ

ຜົນຂອງການຄົ້ນຄວ້າວິໄຈຂອງ ທ່ານ Hunt (2008) ໄດ້ໃຫ້ຄຳແນະນຳໄວ້ວ່າ: ຄວາມເຊື່ອໝັ້ນຕໍ່ການສຶກສາຂອງພໍ່ແມ່ ແລະ ສະມາຊິກໃນຄອບຄົວເປັນພາກສ່ວນໜຶ່ງທີ່ມີຄວາມສຳຄັນ ຕໍ່ການໄດ້ຮັບການສຶກສາໃນໄລຍະຍາວຂອງເດັກນ້ອຍ. ຜົນກະທົບທາງດ້ານທັດສະນະຄະຕິດັ່ງກ່າວ ມີສ່ວນພົວພັນກັບບົດບາດຍິງ-ຊາຍ, ໃນນັ້ນເດັກຊາຍໄດ້ຮັບບຸລິມະສິດທາງການສຶກສາຫຼາຍກວ່າເດັກຍິງ. ຄວາມບໍ່ເຕັມໃຈຂອງພໍ່ແມ່ ແລະ ສະມາຊິກໃນຄອບຄົວ ໃນການສົ່ງເສີມການສຶກສາຂອງເດັກ. *(ລາຍລະອຽດຢູ່ພາກຊ້ອນທ້າຍທີ 3)*

ງ. ປັດໄຈທີ່ພົວພັນກ່ຽວກັບເດັກ

ຜົນການຮຽນຂອງນັກຮຽນຕ່ຳ ເປັນຕົວກຳນົດທີ່ສຳຄັນທີ່ເຮັດໃຫ້ເດັກບໍ່ສາມາດເລື່ອນຂຶ້ນຫ້ອງໄດ້ໃນແຕ່ລະຂັ້ນແລ້ວກໍ່ອອກໂຮງຮຽນໃນທີ່ສຸດ. ທ່ານ Hunt (2008) ໄດ້ວິໄຈກ່ຽວກັບປັດໄຈທີ່ກ່ຽວກັບເດັກນັກຮຽນພົບວ່າ ຄວາມສະຫຼາດໂດຍທຳມະຊາດ ແລະ ສຸຂະພາບຂອງນັກຮຽນ ມີຜົນກະທົບຕໍ່ຜົນການຮຽນຂອງເດັກເຊັ່ນ: ເດັກມີບັນຫາທາງດ້ານສຸຂະພາບ ແລະ ມີຄວາມສະຫຼາດໂດຍທຳມະຊາດຕ່ຳເຮັດໃຫ້ລຳບາກແກ່ພວກເຂົາເຈົ້າທີ່ຈະຮຽນໃຫ້ທັນໝູ່ໃນແຕ່ລະຂັ້ນຮຽນ ເຮັດໃຫ້ເດັກຄ້າງຫ້ອງ ແລະ ຕ້ອງໄດ້ຮຽນຄືນ, ອອກໂຮງຮຽນໃນທັນທີທັນໃດໂລດ ຫຼື ໃນທີ່ສຸດກໍ່ອອກໂຮງຮຽນກ່ອນຮຽນຈົບຫຼັກສູດ. *(ລາຍລະອຽດຢູ່ພາກຊ້ອນທ້າຍທີ 3)*

ຈ. ນະໂຍບາຍຕໍ່ກັບຄວາມກ້າວໜ້າຂອງນັກຮຽນ ແລະ ການອອກໂຮງຮຽນ

ຄວາມສອດຄ່ອງລະຫວ່າງນະໂຍບາຍການຂະຫຍາຍໂອກາດການເຂົ້າຮຽນຢູ່ໃນບັນດາປະເທດທີ່ກຳລັງພັດທະນາ ກັບນະໂຍບາຍການກຳນົດຂີດໝາຍຄວາມກ້າວໜ້າຂອງນັກຮຽນໃນໂຮງຮຽນນັ້ນ ມີຜົນໂດຍກົງຕໍ່ການເຂົ້າຮຽນເພີ່ມຂຶ້ນຢ່າງໝັ້ນຄົງ ແລະ ການປະລະການຮຽນຂອງເດັກທີ່ເພີ່ມຂຶ້ນ. ຈາກບົດລາຍງານການວິໄຈ ຂອງທະນາຄານພັດທະນາອາຊີ ADB (2008) ໄດ້ໃຫ້ຂໍ້ສັງເກດວ່າ: ການນຳໃຊ້ມາດຕະຖານທີ່ເຄັ່ງຄັດເພື່ອຕິດຕາມຄວາມກ້າວໜ້າຂອງນັກຮຽນ ແມ່ນມີຜົນກະທົບຢ່າງຫຼວງຫຼາຍກັບການສືບຕໍ່ຮຽນຢູ່ໃນໂຮງຮຽນຂອງນັກຮຽນ ແລະ ເຮັດໃຫ້ມີຄວາມກົດດັນເພີ່ມຂຶ້ນຕໍ່ເດັກທີ່ມີຜົນການຮຽນຕ່ຳນັ້ນ ອອກໂຮງຮຽນໃນທີ່ສຸດ. ຈາກບົດຮຽນຕົວຈິງໃນປະເທດ Bangladesh ພົບວ່າ: ການປ່ຽນແປງນະໂຍບາຍຕໍ່ກັບຄວາມກ້າວໜ້າຂອງນັກຮຽນ ແລະ ການອອກໂຮງຮຽນຂອງເດັກເຮັດໃຫ້ອັດຕາຄ້າງຫ້ອງໃນຂັ້ນ ປ.1 ຫຼຸດລົງ. *(ລາຍລະອຽດຢູ່ພາກຊ້ອນທ້າຍທີ 3)*

**4. ຈຸດປະສົງຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການປະລະການຮຽນ**

ການຈັດຕັ້ງປະຕິບັດການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນໃນຄັ້ງນີ້ ແມ່ນເພື່ອຊອກຫາສາເຫດ ຂອງການເພີ່ມຂຶ້ນຂອງອັດຕາປະລະການຮຽນໃນຊັ້ນປະຖົມສຶກສາ. ຜົນຂອງການສຳຫຼວດດັ່ງກ່າວນີ້ ຈະເປັນທິດທາງການແກ້ໄຂບັນຫາໃນການຈັດຕັ້ງປະຕິບັດແຜນປະຕິບັດງານຕ່າງໆ ເພື່ອເຮັດໃຫ້ບັນລຸເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ ກໍຄືເພື່ອບັນລຸຄາດໝາຍການສຶກສາປະຖົມແບບທົ່ວເຖິງພາຍໃນປີ 2015 ໃຫ້ໄດ້.

**5. ວິທີວິທະຍາຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການປະລະ**

ການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນໃນຄັ້ງນີ້ ແມ່ນໄດ້ນຳໃຊ້ວິທີວິໄຈແບບຄຸນນະພາບ ໂດຍກຳນົດສຸ່ມຕົວຢ່າງເປົ້າໝາຍ 20 ເມືອງດັ່ງກ່າວ ດ້ວຍວິທີການຄັດເລືອກແບບສະເພາະເຈາະຈົງເອົາບ່ອນທີ່ມີບັນຫາອັດຕາການປະລະການຮຽນສູງ ແລະ ອັດຕາລອດເຫຼືອຫຼຸດລົງຊຶ່ງໄດ້ຄັດມາຈາກຖານຂໍ້ມູນສະຖິຕິການສຶກສາປະຈຳປີ ດັ່ງມີລາຍລະອຽດໃນຕາຕະລາງຂ້າງລຸ່ມນີ້:

| ແຂວງ | ລະຫັດ | ເມືອງ | ກອງທຶນ ໂລ່ງລັດ | ໝາຍເຫດ |
|---|---|---|---|---|
| ຫຼວງນ້ຳທາ | 0303 | ລອງ | ມີ | ອັດຕາລອດເຫຼືອຮອດປ.5 ຫຼຸດລົງຈາກ 75% ຫາ 60% |
| ຫຼວງນ້ຳທາ | 0305 | ນາແລ | ມີ | ອັດຕາລອດເຫຼືອຮອດປ.5 ຫຼຸດລົງຈາກ 80% ຫາ 75% |
| ອຸດົມໄຊ | 0404 | ງາ | ມີ | ອັດຕາລອດເຫຼືອຮອດປ.5 32% |
| ອຸດົມໄຊ | 0406 | ຮຸນ | EDP2AF | ອັດຕາລອດເຫຼືອຮອດປ.5 50% |
| ອຸດົມໄຊ | 0407 | ປາກແບ່ງ | EDP2AF | ອັດຕາລອດເຫຼືອຮອດປ.5 42% |
| ວຽງຈັນ | 1006 | ເຟືອງ | | ອັດຕາການປະລະການຮຽນສຳລັບເດັກຍິງປ.1 15% |
| ວຽງຈັນ | 1008 | ແມດ | | ອັດຕາການປະລະການຮຽນສຳລັບເດັກຊາຍປ.1 14% |
| ວຽງຈັນ | 1011 | ໂຮ່ມ | | ອັດຕາການປະລະການຮຽນສຳລັບເດັກຊາຍປ.1 16% |
| ວຽງຈັນ | 1013 | ໝື່ນ | ມີ | ອັດຕາການປະລະການຮຽນສຳລັບເດັກຍິງປ.1 18% |
| ສະຫວັນນະເຂດ | 1304 | ພີນ | ມີ | ອັດຕາລອດເຫຼືອຮອດປ.5 34% |
| ສະຫວັນນະເຂດ | 1309 | ຈຳພອນ | | ອັດຕາການປະລະການຮຽນສຳລັບເດັກຊາຍປ.1 15% |
| ສະຫວັນນະເຂດ | 1311 | ໄຊບູລີ | | ອັດຕາການປະລະການຮຽນສຳລັບເດັກປ.1 15% |
| ສະຫວັນນະເຂດ | 1313 | ອາດສະພອນ | ມີ | ອັດຕາການປະລະການຮຽນສຳລັບເດັກປ.1 13% |
| ສະຫວັນນະເຂດ | 1314 | ໄຊພູທອງ | | ອັດຕາການປະລະການຮຽນສຳລັບເດັກປ.1 25% |
| ສາລະວັນ | 1403 | ຕຸ້ມລານ | ມີ | ອັດຕາລອດເຫຼືອຮອດປ.5 40% |
| ສາລະວັນ | 1405 | ວາປີ | | ອັດຕາການປະລະການຮຽນສຳລັບເດັກປ.1 23% |
| ເຊກອງ | 1503 | ດັກຈຶງ | ມີ | ອັດຕາການປະລະການຮຽນສຳລັບເດັກຍິງປ.1 21% |
| ເຊກອງ | 1504 | ທ່າແຕງ | ມີ | ອັດຕາການປະລະການຮຽນສຳລັບເດັກປ.1 14% |
| ອັດຕະປື | 1703 | ສະໜາມໄຊ | ມີ | ອັດຕາການປະລະການຮຽນສຳລັບເດັກປ.1 43% |
| ອັດຕະປື | 1705 | ພູວົງ | ມີ | ອັດຕາການປະລະການຮຽນສຳລັບເດັກປ.1 33% |

ກອງປະຊຸມປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອແລກປ່ຽນ ແລະ ສົນທະນາ ກ່ຽວກັບການກຳນົດບັນດາປັດໄຈຕ່າງໆທີ່ມີສ່ວນພົວພັນກັບການເພີ່ມຂຶ້ນຂອງອັດຕາການປະລະການຮຽນ ແມ່ນໄດ້ຈັດຂຶ້ນໃນວັນທີ 5 ກັນຍາ 2011 ເປັນເວລາເຄິ່ງວັນ. ຈາກນັ້ນກໍ່ໄດ້ມີການຈັດກອງປະຊຸມຝຶກອົບຮົມສ້າງຂີດຄວາມສາມາດໃຫ້ແກ່ພະນັກງານວິຊາການທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ ການສຳຫຼວດ

ແລະ ການປະເມີນຜົນແບບຮີບດ່ວນ (RAS) ໃນລະຫວ່າງວັນທີ 5-9 ກັນຍາ 2011 ຊຶ່ງກອງປະຊຸມດັ່ງກ່າວ ແມ່ນໄດ້ສ້າງຮ່າງເຄື່ອງມື ແລະ ວິທີການຈັດຕັ້ງປະຕິບັດການສໍາພາດຢູ່ພາກສະໜາມເພື່ອນໍາໃຊ້ເກັບກໍາຂໍ້ມູນຢູ່ຂັ້ນແຂວງ, ເມືອງ ແລະ ໂຮງຮຽນ. ຄູ່ມືໃນການສໍາພາດ ແມ່ນໄດ້ສ້າງຂຶ້ນໂດຍມີການແຍກລະອຽດເພື່ອສໍາພາດພະນັກງານການນໍາຂອງພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ອໍານວຍການໂຮງຮຽນປະຖົມ, ຄູສອນ, ນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ, ນັກຮຽນທີ່ບໍ່ເຂົ້າໂຮງຮຽນ ພ້ອມດ້ວຍຕາຕະລາງປະຫວັດຂອງແຕ່ລະເມືອງ. ເຄື່ອງມືໃນການສໍາພາດກ່ຽວກັບຂະບວນການແຈກຢາຍ ແລະ ຄຸ້ມຄອງປຶ້ມແບບຮຽນ-ຄູ່ມືຄູກໍໄດ້ປະກອບເຂົ້າໃນແບບຟອມສໍາພາດດັ່ງກ່າວ *(ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 1).*

ຫຼັງຈາກນັ້ນ ທີມງານທີ່ຮັບຜິດຊອບໃນການເກັບກໍາຂໍ້ມູນທັງສີ່ທີມງານໄດ້ມີການແບ່ງວຽກກັນລົງໄປເກັບກໍາຂໍ້ມູນຢູ່ ແຂວງ, ເມືອງ, ໂຮງຮຽນ ແລະ ບ້ານເປົ້າໝາຍ ຊຶ່ງການກໍານົດຂອບເຂດເປົ້າໝາຍສຸ່ມຕົວຢ່າງນີ້ ແມ່ນອີງໃສ່ຂໍ້ມູນການວິເຄາະໃນເບື້ອງຕົ້ນ ແລະ ຕາຕະລາງແຜນການລົງສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນ. ການເກັບກໍາຂໍ້ມູນຢູ່ພາກສະໜາມ ແມ່ນເລີ່ມແຕ່ວັນທີ 10-30 ກັນຍາ 2011. ບົດສະເໜີຜົນຂອງການສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນສະບັບຮ່າງແມ່ນໄດ້ນໍາສະເໜີຕໍ່ພະນັກງານການນໍາຂັ້ນກະຊວງ ແລະ ຄູ່ຮ່ວມພັດທະນາໃນວັນທີ 4 ຕຸລາ 2011. ຈາກນັ້ນ ຈິ່ງມີການຈັດຕັ້ງກອງປະຊຸມວິເຄາະຂໍ້ມູນຂອງການສໍາຫຼວດ ແລະ ການປະເມີນແບບຮີບດ່ວນ ລວມທັງກະກຽມການຂຽນບົດລາຍງານຢູ່ໃນລະຫວ່າງວັນທີ 10-14 ຕຸລາ 2011.

ຜົນຂອງການສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ແມ່ນໄດ້ຂຽນເປັນບົດລາຍງານສະບັບຮ່າງກ່ອນ ເພື່ອນໍາສະເໜີຢູ່ໃນກອງປະຊຸມປຶກສາຫາລືກັບພະນັກງານການນໍາກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ, ແລະ ຄູ່ຮ່ວມພັດທະນາ ໃນວັນທີ 17 ພະຈິກ 2011.

**ພາກສ່ວນຕ່າງໆ ທີ່ມີສ່ວນຮ່ວມ**

ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ) ເປັນຜູ້ຮັບຜິດຊອບຫຼັກ ໃນການອອກແບບ ແລະ ການຈັດຕັ້ງປະຕິບັດ ການສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ຊຶ່ງໄດ້ຮັບການຮ່ວມມືຈາກກົມອະນຸບານ ແລະ ປະຖົມສຶກສາ (ກອປ), ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ (ສຕສ) ແລະ ພາກສ່ວນອື່ນໆທີ່ມີສ່ວນຮ່ວມ ຊຶ່ງມີບັນຊີລາຍຊື່ລະອຽດຢູ່ເອກະສານຊ້ອນທ້າຍທີ 4 ຂອງບົດລາຍງານສະບັບນີ້.

**ບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງພາກສ່ວນຕ່າງໆ**

| | |
|---|---|
| ສຍວ | ນຳພາທີມງານໃນການອອກແບບ, ການຈັດຕັ້ງປະຕິບັດ, ການວິເຄາະ ແລະ ການປະມວນຜົນການວິເຄາະຂໍ້ມູນ |
| ກອປ | ໃຫ້ຄວາມຊ່ວຍເຫຼືອ ສຍວ ໃນການສ້າງແບບສອບຖາມ, ການແປ ແລະ ການວິເຄາະຂໍ້ມູນ ແລະ ການກຳນົດຄຳຄິດຄຳເຫັນ |
| ສຕສ | ສະໜອງຂໍ້ມູນສະຖິຕິຕ່າງໆກ່ຽວກັບການປະລະການຮຽນ ຂອງແຕ່ລະເມືອງ ແລະ ແຂວງ |
| ຊ່ຽວຊານ ການສຶກສາ | ກຳນົດໜ້າທີ່ຄວາມຮັບຜິດຊອບ ແລະ ຊ່ວຍເຫຼືອໃນການກຳນົດພື້ນທີ່ໃນການສຳຫຼວດ. ຊ່ວຍເຫຼືອໃນການແປຂໍ້ມູນ ແລະ ຂຽນບົດລາຍງານ |
| ຜູ້ຊ່ຽວຊານໃນການຄົ້ນຄວ້າວິໄຈ | ສະໜັບສະໜູນໃນການສ້າງແບບສອບຖາມ, ການກຳນົດສຸ່ມຕົວຢ່າງໃນການສຳຫຼວດ, ການເກັບກຳຂໍ້ມູນ, ການແປ ແລະ ການວິເຄາະຂໍ້ມູນ |
| ທີ່ປຶກສາພາຍໃນ | ຊ່ວຍເຫຼືອທີມງານສຳຫຼວດຢູ່ພາກສະໜາມ ແລະ ຊ່ວຍວິເຄາະຂໍ້ມູນ |
| ທີມງານສຳຫຼວດ | ທີມງານສຳຫຼວດປະກອບມີ 4 ທີມ[3], ເຊິ່ງປະກອບມີພະນັກງານຈາກ ສຍວ, ສຕສ, ກອປ. ພະນັກງານສຶກທິການແລະກິລາແຂວງ ແລະ ເມືອງໃຫ້ການຊ່ວຍເຫຼືອທີມງານສຳຫຼວດຢູ່ພາກສະໜາມ |

[3] *ທີມ 1 ໄປແຂວງຫຼວງນ້ຳທາແລະອຸດົມໄຊ, ທີມ 2 ໄປແຂວງວຽງຈັນ, ທີມ 3 ໄປແຂວງສະຫວັນນະເຂດແລະສາລະວັນ, ທີມ 4 ໄປແຂວງເຊກອງ ແລະອັດຕະປື.*

## 6. ຜົນຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການປະລະການຮຽນ

### ກ. ສາເຫດພາຍໃນ

### ກ.1 ຄວາມຮັບຜິດຊອບຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ

ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ), ອຳນວຍການໂຮງຮຽນປະຖົມ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ນັກຮຽນ ປະສານງານກັນຍັງບໍ່ທັນກົມກຽວກັນດີເທົ່າທີ່ຄວນ ໃນການເກັບກຳຂໍ້ມູນທາງດ້ານສະຖິຕິ ຂອງຈຳນວນເດັກໃນເກນອາຍຸເຂົ້າຮຽນ, ການຂາດຮຽນ, ການປະລະການຮຽນ ແລະ ການຍົກຍ້າຍຂອງນັກຮຽນ. ນອກຈາກນັ້ນ, ການເຜີຍແຜ່ວຽກງານການພັດທະນາການສຶກສາຍັງເຮັດບໍ່ທັນໄດ້ຢ່າງທົ່ວເຖິງ ແລະ ເລິກເຊິ່ງ ຊຶ່ງເຮັດໃຫ້ຄວາມກະຕືລືລົ້ນຂອງຄູສອນ, ນັກຮຽນ ແລະ ຊຸມຊົນຕໍ່ວຽກງານການສຶກສາ ຫຼຸດໜ້ອຍຖອຍລົງ. ໃນເວລາມີເດັກຂາດການຮຽນ ແລະ ອອກໂຮງຮຽນ, ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ຍັງຂາດການຊອກຫາວິທີການແກ້ໄຂບັນຫາຮ່ວມກັນ ແລ້ວປະປ່ອຍໃຫ້ບັນຫາດັ່ງກ່າວຖືກລະເລີຍ. ບັນຫາທີ່ກ່າວມານີ້ ມີສ່ວນກ່ຽວຂ້ອງກັບການສັບຊ້ອນຍົກຍ້າຍບ່ອນປະຈຳການຂອງອຳນວຍການໂຮງຮຽນປະຖົມ ຊຶ່ງມັກເກີດຂຶ້ນເລື້ອຍໆໃນແຕ່ລະປີ ເຮັດໃຫ້ການຄຸ້ມຄອງບໍລິຫານໂຮງຮຽນບໍ່ຕໍ່ເນື່ອງ ໂດຍສະເພາະແມ່ນການຕິດຕາມຂໍ້ມູນສະຖິຕິກ່ຽວກັບການເຂົ້າຮຽນ, ການຍົກຍ້າຍ ແລະ ການປະລະການຮຽນຂອງນັກຮຽນ.

**ຂໍ້ແນະນຳ:**

1. ຄວນຮັບປະກັນການຝຶກອົບຮົມກ່ຽວກັບ ການຄຸ້ມຄອງສະຖິຕິນັກຮຽນ, ການບໍລິຫານຄຸ້ມຄອງໂຮງຮຽນ ໃຫ້ແກ່ພະນັກງານຫ້ອງການສຶກສາທິການ ແລະ ກິລາເມືອງ ຢ່າງທົ່ວເຖິງ.
2. ຄະນະຫ້ອງການສຶກສາທິການ ແລະ ກິລາເມືອງ ຄວນເອົາໃຈໃສ່ໃນການຕິດຕາມ-ປະເມີນຜົນການປະຕິບັດການຮຽນ-ການສອນຂອງໂຮງຮຽນ ທີ່ຕົນຄຸ້ມຄອງເປັນປະຈຳເພື່ອລົງໄປຊຸກຍູ້ຊ່ວຍເຫຼືອໂຮງຮຽນໃຫ້ມີການເຄື່ອນໄຫວກິດຈະກຳການສຶກສາຕ່າງໆ.
3. ກ່ອນທີ່ຈະສັບຊ້ອນຍົກຍ້າຍອຳນວຍການໂຮງຮຽນ ຫ້ອງການສຶກສາທິການ ແລະ ກິລາເມືອງ ຄວນມີຖານຂໍ້ມູນອ້າງອີງ ການຍົກຍ້າຍ ແລະ ການຝຶກທົດແທນຄືນການຍົກຍ້າຍນັ້ນ ເພື່ອໃຫ້ອຳນວຍການໂຮງຮຽນໄດ້ປະຕິບັດໜ້າທີ່ໃນໂຮງຮຽນຢ່າງໜ້ອຍ 4-5 ປີ ແລະ ກໍຄວນມີວິທີຢັ່ງສຽງຈາກຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານເສຍກ່ອນ.
4. ການມອບ-ຮັບໜ້າທີ່ໃໝ່ຂອງອຳນວຍການໂຮງຮຽນ ຄວນມີການຖ່າຍໂອນຂໍ້ມູນກ່ຽວກັບໂຮງຮຽນທີ່ຕົນຮັບຜິດຊອບໃຫ້ອຳນວຍການຜູ້ໃໝ່ຊາບ.

### ກ.2 ການບັນຈຸຄູ ແລະ ການສິດສອນຂອງຄູ

ໂຮງຮຽນປະຖົມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນໂຮງຮຽນປະຖົມໃນທົ່ວປະເທດຍັງມີຄູສອນພຽງແຕ່ 3 ຄົນ ຫຼື ໜ້ອຍກວ່ານັ້ນ. ຢູ່ທຸກໆເມືອງ ທີ່ລົງໄປສຳຫຼວດນັ້ນພົບວ່າການບັນຈຸຄູ ຍັງບໍ່ພຽງພໍ

ກັບການຈັດການຮຽນ-ການສອນໃຫ້ຄົບ 5 ຂັ້ນຮຽນໃນຊັ້ນປະຖົມສຶກສາຢູ່ໃນເຂດຫ່າງໄກສອກຫຼີກເຮັດໃຫ້ຄູຕ້ອງສອນຫຼາຍຫ້ອງ, ຮັບຜິດຊອບນັກຮຽນຈຳນວນຫຼາຍຄົນ ແລະ ສ່ວນຫຼາຍຄູສອນດັ່ງກ່າວກໍ່ຍັງຮັບຜິດຊອບເປັນອຳນວຍການໂຮງຮຽນນຳອີກ ສະນັ້ນຈຶ່ງເຮັດໃຫ້ຄູບໍ່ມີເວລາແຕ່ງບົດສອນ ຫຼື ບໍ່ມີເວລາບໍລິຫານໂຮງຮຽນຂອງຕົນ. ຮ້າຍແຮງໄປກວ່ານັ້ນ ການສັບປ່ຽນຄູສອນໄປສອນຢູ່ໂຮງຮຽນອື່ນເລື້ອຍໆໃນທຸກໆ 1-3 ປີ ເພື່ອຜັດປ່ຽນຄູທຸກຄົນໃຫ້ໄດ້ໄປສິດສອນຢູ່ເຂດຫ່າງໄກສອກຫຼີກນັ້ນ ເຫັນວ່າຄູທີ່ຖືກຍົກຍ້າຍໄປສອນບ່ອນອື່ນສ່ວນຫຼາຍບໍ່ໄດ້ມອບວຽກໃຫ້ຄູສອນໃໝ່ທີ່ມາແທນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຄູທີ່ມາແທນບໍ່ສາມາດກຳສະພາບບັນຫາ ແລະ ຄຸນລັກສະນະຂອງນັກຮຽນໃນທ້ອງຖິ່ນນັ້ນໆໄດ້, ເຮັດໃຫ້ຄູເກີດຄວາມທໍ້ຖອຍໃນການປະຕິບັດໜ້າທີ່ສິດສອນຂອງຕົນ ແລະ ສິ່ງຜົນກະທົບທາງອ້ອມໃຫ້ແກ່ຄຸນນະພາບການຮຽນ-ການສອນຊຶ່ງເຮັດໃຫ້ຜູ້ປົກຄອງເດັກຂາດແຮງຈູງໃຈສົ່ງລູກຫຼານໄປໂຮງຮຽນ.

ຄູສອນສ່ວນຫຼາຍ ຍັງບໍ່ໄດ້ຮັບການຝຶກອົບຮົມການນຳໃຊ້ປຶ້ມແບບຮຽນໃໝ່ ແລະ ວິທີການສອນຫ້ອງຄວບ. ເພາະສະນັ້ນ ຄູຈຶ່ງຂາດຄວາມໝັ້ນໃຈຕໍ່ການສອນຕາມປຶ້ມແບບຮຽນໃໝ່ຊຶ່ງເຮັດໃຫ້ຄູບໍ່ຢາກສິດສອນນັກຮຽນຂອງຕົນ.

ການສິດສອນນັກຮຽນຊົນເຜົ່າ ທີ່ບໍ່ໃຊ້ພາສາລາວໃນຄອບຄົວເຮັດໃຫ້ຄູມີຄວາມຫຍຸ້ງຍາກເພາະວ່າຄູບໍ່ສາມາດສື່ສານ ແລະ ອະທິບາຍບົດຮຽນໃຫ້ນັກຮຽນດ້ວຍພາສາທີ່ເດັກໃຊ້ ໂດຍສະເພາະແມ່ນ ຢູ່ຫ້ອງ ປ.1 ແລະ ປ.2 ເຮັດໃຫ້ເດັກບໍ່ເຂົ້າໃຈໃນເວລາຄູສິດສອນ ຊຶ່ງນຳໄປສູ່ຜົນການຮຽນຂອງເດັກອ່ອນ, ຄ້າງຫ້ອງ ແລະ ອອກໂຮງຮຽນໃນທີ່ສຸດ.

ຄູສອນຈຳນວນໜຶ່ງ ຂາດສອນເພື່ອໄປຊອກເຮັດວຽກເພີ່ມໃນການຫາລ້ຽງຊີບ ຊຶ່ງມີຜົນກະທົບຕໍ່ການປະລະໂມງສອນເປັນປະຈຳ, ທີ່ເປັນສາເຫດເຮັດໃຫ້ນັກຮຽນ ມີການປະລະການຮຽນເກີດຂຶ້ນຕາມມາ ແລະ ຜູ້ປົກຄອງເດັກຈຳນວນໜຶ່ງ ຂາດຄວາມເຊື່ອໝັ້ນຕໍ່ການສຶກສາຈຶ່ງໃຫ້ລູກຫຼານຂອງຕົນອອກໂຮງຮຽນ.

**ຂໍ້ແນະນຳ:**

1. ຄວນຈັດການທົບທວນນະໂຍບາຍ ກ່ຽວກັບການຮັບເອົານັກຮຽນຄູ ໃນແຕ່ລະສະຖາບັນສ້າງຄູ ເພື່ອຮັບປະກັນການສະໜອງຄູປະຖົມໃນອະນາຄົດໃຫ້ໄດ້ຕາມຄວາມຕ້ອງການ ໂດຍສະເພາະແມ່ນ ຢູ່ໃນເຂດຫ່າງໄກສອກຫຼີກ. ໂຄງການການສຶກສາຂັ້ນພື້ນຖານລາວ-ອົດສະຕາລີ (LABEP) ເຄີຍໄດ້ໃຫ້ການສະໜັບສະໜູນການຄົ້ນຄວ້າວິທີການຄັດເລືອກ, ການຈັດການຝຶກອົບຮົມ ແລະ ການສັບຊ້ອນຄູຊົນເຜົ່າ ໂດຍຫາວິທີການສະໜັບສະໜູນຊຸກຍູ້ສົ່ງເສີມເຮັດໃຫ້ຄູສອນດັ່ງກ່າວ ມີຄວາມຮູ້ ແລະ ຄວາມສາມາດນຳໃຊ້ພາສາທ້ອງຖິ່ນຫຼາຍຂຶ້ນຕື່ມ ສຳລັບເຂດຊົນນະບົດຊົນເຜົ່າ.
2. ຄວນມີການທົບທວນນະໂຍບາຍກ່ຽວກັບການຍົກຍ້າຍຄູສອນ (ການໝູນວຽນຄູ) ແລະ ຄວນຄັດເລືອກເອົາຄົນໃນທ້ອງຖິ່ນເພື່ອໄປຮຽນເປັນຄູແລ້ວກັບໄປສອນຢູ່ບ້ານເກີດເມືອງນອນ ຂອງພວກເຂົາ ໂດຍມີການສັນຍາກັນຄັກແນ່(ແຜນງານການສຶກສາເພື່ອທຸກຄົນ-ກອງທຶນເລັ່ງລັດ).

3. ຄວນມີການສະໜອງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ໃຫ້ພະນັກງານສຶກສາທິການ ແລະ ກິລາເມືອງ ເພື່ອຈັດຕັ້ງປະຕິບັດການຕິດຕາມ-ປະເມີນຜົນການປະຕິບັດການຮຽນ-ການສອນຂອງໂຮງຮຽນເປັນປະຈຳ.

## ກ.3 ປັດໄຈກ່ຽວກັບເດັກ

ການສຳຫຼວດໃນພາກສະໜາມຄັ້ງນີ້ ພົບວ່າມີນັກຮຽນບໍ່ຟັງຄວາມພໍ່ແມ່, ເວລາຮຽນໃນຫ້ອງກໍບໍ່ຟັງຄວາມຄູ, ລົບກວນໝູ່ ແລະ ບໍ່ຕັ້ງໃຈຮຽນໃນຫ້ອງຮຽນ ສິ່ງຜົນໃຫ້ຜູ້ກ່ຽວຮຽນບໍ່ທັນໝູ່ແລ້ວກໍບໍ່ຢາກຮຽນ ຫຼື ມາຮຽນບໍ່ປົກກະຕິ ແລະ ກາຍເປັນນັກຮຽນຄ້າງຫ້ອງໃນທ້າຍສົກຮຽນ ຊຶ່ງເດັກໃນຈຳນວນດັ່ງກ່າວນີ້ ຄູໄດ້ຢັ້ງຢືນວ່າ ມີຄວາມສ່ຽງຫຼາຍໃນການກາຍເປັນນັກຮຽນປະລະການຮຽນໃນຊັ້ນປະຖົມ. ນອກຈາກນີ້ກໍຍັງພົບວ່າ ເດັກຈຳນວນໜຶ່ງທີ່ອອກໂຮງຮຽນຍ້ອນວ່າ ມີບັນຫາພໍ່ແມ່ຢ່າຮ້າງກັນ, ກຳພ້າ/ກຳພອຍ, ຂາດເຂີນເຄື່ອງນຸ່ງຮົ່ມ ແລະ ມີສຸຂະພາບອ່ອນແອ ຊຶ່ງບັນຫາເຫຼົ່ານັ້ນໄດ້ສົ່ງຜົນກະທົບໂດຍກົງຕໍ່ເດັກໃນການເຂົ້າຮຽນ ແລະ ຮຽນໃຫ້ຈົບຊັ້ນປະຖົມ.

ສ່ວນເດັກທີ່ມີອາຍຸເກີນເກນໃນການເຂົ້າຮຽນປະຖົມ ມັກເປັນນັກຮຽນຄ້າງຫ້ອງເລື້ອຍໆ ແລະ ຮຽນຮອດແຕ່ຊັ້ນ ປ.4 ຫຼື ຊັ້ນ ປ.5 ແຕ່ກໍບໍ່ຈົບຊັ້ນປະຖົມ. ເດັກນັກຮຽນດັ່ງກ່າວມານັ້ນ ມີຄວາມສ່ຽງໃນການນຳໄປສູ່ບັນຫາທາງສັງຄົມເຊັ່ນ: ອອກໂຮງຮຽນໄປຫາເຮັດວຽກກ່ອນໄວອັນຄວນ, ນັກຮຽນຍິງຊົນເຜົ່າຖືກກົດດັນໃຫ້ອອກໂຮງຮຽນໄປແຕ່ງງານກ່ອນຮຽນຈົບຊັ້ນປະຖົມ, ບັນຫາການຕິດຢາເສບຕິດ ແລະ ອື່ນໆ.

**ຂໍ້ແນະນຳ:**

1. ໃນບ່ອນທີ່ມີເດັກບໍ່ຟັງຄວາມພໍ່ແມ່ ແລະ ຄູ ນັ້ນ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ໂຮງຮຽນ ຄວນປະສານສົມທົບກັບພໍ່ແມ່/ຜູ້ປົກຄອງເດັກນັກຮຽນ ເພື່ອຮ່ວມກັນແກ້ໄຂບັນຫາດັ່ງກ່າວ. ສ່ວນບັນຫາເດັກນັກຮຽນທີ່ມີສຸຂະພາບອ່ອນແອເຈັບເປັນເລື້ອຍໆ ແລະ ມີການເຕີບໃຫຍ່ຂະຫຍາຍໂຕຊ້ານັ້ນ ກະຊວງສຶກສາທິການ ແລະ ກິລາ ຄວນມີການປະສານສົມທົບກັບກະຊວງສາທາລະນະສຸກເພື່ອທົບທວນ ແລະ ຂະຫຍາຍໂຄງການສົ່ງເສີມສຸຂະພາບໃນໂຮງຮຽນໃຫ້ທົ່ວເຖິງ.
2. ຄະນະພັດທະນາການສຶກສາຂັ້ນບ້ານ ຄວນຕິດຕາມເດັກທີ່ຢູ່ໃນເກນອາຍຸເຂົ້າຮຽນໄດ້ເຂົ້າຮຽນໃນໂຮງຮຽນ ແລະ ຈັດບຸລິມະສິດຢ່າງເໝາະສົມແກ່ເດັກທີ່ມີອາຍຸເກີນເກນເຂົ້າຮຽນຊັ້ນປະຖົມຢູ່ບ່ອນທີ່ບໍ່ມີໂຮງຮຽນ ໃຫ້ສາມາດມີບ່ອນເຂົ້າຮຽນຕາມແຜນການການສຶກສານອກໂຮງຮຽນ.
3. ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ໂຮງຮຽນ ຄວນເຮັດວຽກຮ່ວມກັນກັບພໍ່ແມ່ນັກຮຽນເພື່ອຕ້ານ ແລະ ສະກັດກັ້ນບັນຫາຢາເສບຕິດ ດ້ວຍວິທີສ້າງບ້ານໃຫ້ກາຍເປັນບ້ານປອດຄະດີ.

## ກ.4 ຄວາມຮັບຜິດຊອບຂອງຄະນະພັດທະນາການສຶກສາຂັ້ນບ້ານ

ຢູ່ໃນຫຼາຍໆບ້ານທີ່ມີຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ແລ້ວນັ້ນ ຍັງສັງເກດເຫັນວ່າພວກເຂົາເຈົ້າຍັງປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນບໍ່ທັນໄດ້ດີເທົ່າທີ່ຄວນ. ສະມາຊິກບາງທ່ານຍັງບໍ່ເຫັນຄວາມສຳຄັນຂອງວຽກງານການສຶກສາ ແລະ ຂາດການປະສານງານກັນ. ຜົນຂອງການສຳຫຼວດຄັ້ງນີ້ພົບວ່າ ຖ້າຫາກບ້ານໃດທີ່ມີ ຄພສບ ທີ່ຮູ້ປະສານງານກັນດີກັບອຳນວຍການໂຮງຮຽນ ແລະ ຄູ ຈະເຮັດໃຫ້ມີການຊຸກຍູ້ການເຂົ້າຮຽນຂອງເດັກໄດ້ດີ ແລະ ບໍ່ມີນັກຮຽນປະລະການຮຽນ ຕົວຢ່າງ: ໂຄງການສົ່ງເສີມຊຸມຊົນເພື່ອພັດທະນາການສຶກສາຂັ້ນປະຖົມຢູ່ 3 ແຂວງພາກໃຕ້ (ບົດລາຍງານການປະເມີນຜົນໄລຍະສຸດທ້າຍຂອງໂຄງການ CIED, ໜ້າ 6-7). ແຕ່ກົງກັນຂ້າມ ຖ້າບ້ານໃດທີ່ ຄພສບ ບໍ່ໄດ້ເອົາໃຈໃສ່ປະສານງານກັບອຳນວຍການໂຮງຮຽນຕິດຕາມວຽກງານການສຶກສາພາຍໃນບ້ານ ຈະມີຄວາມສ່ຽງເຮັດໃຫ້ມີການປະລະຂອງເດັກນັກຮຽນເກີດຂຶ້ນເຊັ່ນ: ໃນກໍລະນີເດັກຂາດໂຮງຮຽນເລື້ອຍໆ ແລະ ມີແນວໂນ້ມທີ່ຈະປະລະການຮຽນ, ຖ້າວ່າ ຄພສບ ແລະ ອຳນວຍການໂຮງຮຽນ ບໍ່ໄດ້ຕິດຕາມການຂາດຮຽນຂອງເດັກ ແລະ ຂາດການປຸກລະດົມຂົນຂວາຍຜູ້ປົກຄອງເພື່ອໃຫ້ເອົາລູກຫຼານຂອງຕົນກັບຄືນເຂົ້າຮຽນ ໃນທີ່ສຸດກໍ່ເຮັດໃຫ້ເດັກອອກໂຮງຮຽນ.

**ຂໍ້ແນະນຳ:**

1. ຄວນມີການຈັດຝຶກອົບຮົມ ໃຫ້ຄະນະພັດທະນາການສຶກສາຂັ້ນບ້ານກ່ຽວກັບ ພາລະບົດບາດ ແລະ ການຄຸ້ມຄອງ-ບໍລິຫານໂຮງຮຽນ.
2. ພະນັກງານສຶກສາທິການ ແລະ ກິລາເມືອງ ຄວນໃຫ້ການຊ່ວຍເຫລືອຊຸກຍູ້ ແລະ ຕິດຕາມການເຂົ້າຮຽນຂອງເດັກພາຍໃນບ້ານ ດ້ວຍວິທີການສ້າງຄວາມເຂັ້ມແຂງໃຫ້ຄະນະພັດທະນາການສຶກສາຂັ້ນບ້ານ.
3. ຄະນະພັດທະນາການສຶກສາຂັ້ນບ້ານ ຕ້ອງໂຄສະນາເຜີຍແຜ່ຄວາມສຳຄັນຂອງການສຶກສາໃຫ້ພໍ່ແມ່/ຜູ້ປົກຄອງນັກຮຽນເຂົ້າໃຈ ແລະ ມີການຕິດຕາມເດັກ ທີ່ຢູ່ໃນເກນອາຍຸເຂົ້າຮຽນໄດ້ເຂົ້າຮຽນໃນໂຮງຮຽນ
4. ຢູ່ບ່ອນທີ່ບໍ່ມີໂຮງຮຽນ ຄະນະພັດທະນາການສຶກສາຂັ້ນບ້ານ ຄວນມີການຈັດບຸລິມະສິດໃຫ້ແກ່ເດັກທີ່ມີອາຍຸເກີນເກນເຂົ້າຮຽນຊັ້ນປະຖົມສາມາດເຂົ້າຮຽນໃນສາຍການສຶກສານອກໂຮງຮຽນ.

## ກ.5 ຄວາມຮູ້ຄວາມສາມາດຂອງພະນັກງານທີ່ເຮັດວຽກສຶກສາໃນຂັ້ນທ້ອງຖິ່ນ

ທີມງານສຳຫຼວດໄດ້ພົບວ່າ ພະນັກງານວິຊາການຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ຍັງມີຄວາມຮູ້ຄວາມສາມາດຈຳກັດ ໃນການວິເຄາະ-ວິໄຈຂໍ້ມູນສະຖິຕິພື້ນຖານເພື່ອອະທິບາຍກ່ຽວກັບການປະລະຂອງນັກຮຽນດ້ວຍຕົນເອງເຊັ່ນຕົວຢ່າງ: ການສັງເກດຈາກຕົວເລກອັດຕາປະລະເພີ່ມຂຶ້ນ ຫຼື ຫຼຸດລົງ ໃນແຕ່ລະສົກຮຽນຂອງໂຮງຮຽນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດຄາດໝາຍຕ່າງໆຂອງເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດ

ດ້ານການພັດທະນາໃນຂັ້ນຂອງຕົນຮັບຜິດຊອບ. ນອກຈາກນັ້ນ, ຍັງຂາດຄວາມສາມາດໃນການຕິດຕາມ ແລະ ໃຫ້ການຊ່ວຍເຫຼືອໃນການປະຕິບັດໜ້າທີ່ຂອງຄະນະພັດທະນາການສຶກສາຂັ້ນບ້ານ ທີ່ໄດ້ຜ່ານການຝຶກອົບຮົມໄປແລ້ວນັ້ນ.

ອຳນວຍການໂຮງຮຽນປະຖົມ ຍັງບໍ່ມີຄວາມເຂົ້າໃຈກ່ຽວກັບການເກັບກຳຂໍ້ມູນ ແລະ ການກວດກາ-ຕິດຕາມການປະລະການຮຽນ ຍ້ອນບໍ່ໄດ້ຮັບການຝຶກອົບຮົມຈັກເທື່ອ, ສ່ວນຜູ້ທີ່ໄດ້ຮັບການຝຶກອົບຮົມໄປແລ້ວນັ້ນ ພັດມີການຍົກຍ້າຍໜ້າທີ່ເລື້ອຍໆ ຈຶ່ງເຮັດໃຫ້ລາຍງານຂໍ້ມູນສະຖິຕິການປະລະການຮຽນຂອງນັກຮຽນຈາກລະດັບໂຮງຮຽນມີຄວາມບໍ່ຊັດເຈນ ແລະ ໜ້າເຊື່ອຖືໜ້ອຍ.

**ຂໍ້ແນະນຳ:**

1. ຄວນສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານສຶກສາທິການ ແລະ ກິລາເມືອງ ໃຫ້ມີຄວາມຮູ້ຄວາມສາມາດເຮັດການວິໄຈຂໍ້ມູນພື້ນຖານດ້ວຍຕົນເອງ ລວມທັງສາມາດຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດຄາດໝາຍຕ່າງໆຂອງເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາຂອງເມືອງຕົນ.
2. ຄວນຝຶກອົບຮົມໃຫ້ພະນັກງານວິຊາການ ທາງດ້ານການຕິດຕາມ-ປະເມີນຜົນຂອງໜ່ວຍງານກວດກາ ແລະ ປະເມີນຜົນຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ໃຫ້ສາມາດຕິດຕາມການປະຕິບັດໜ້າທີ່ຂອງຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອຳນວຍການໂຮງຮຽນປະຖົມ ໂດຍສະເພາະແມ່ນຕິດຕາມການເຄື່ອນຍ້າຍຂອງນັກຮຽນທີ່ມາຈາກບ່ອນອື່ນເພື່ອເຮັດໃຫ້ບັນທຶກລາຍງານສະຖິຕິນັກຮຽນມີຄວາມຊັດເຈນ ແລະ ເຊື່ອຖືໄດ້.

## ກ.6 ທີ່ຕັ້ງ ແລະ ການສະໜອງອຸປະກອນ ໃຫ້ໂຮງຮຽນປະຖົມ

ທີ່ຕັ້ງຂອງໂຮງຮຽນ ເປັນສາເຫດໜຶ່ງທີ່ພາໃຫ້ເດັກນັກຮຽນມີການປະລະການຮຽນໃນຊັ້ນປະຖົມສຶກສາ. ຜົນຂອງການສຳຫຼວດໃນຄັ້ງນີ້ຢັ້ງຢືນໃຫ້ຮູ້ວ່າ: ຍັງມີນັກຮຽນຈຳນວນໜຶ່ງມີຄວາມຫຍຸ້ງຍາກໃນການເດີນທາງໄປໂຮງຮຽນ ເນື່ອງຈາກວ່າທີ່ຕັ້ງຂອງໂຮງຮຽນມູນລະປະຖົມ ແລະ ໂຮງຮຽນປະຖົມສົມບູນຢູ່ຫ່າງໄກກັນ ເຮັດໃຫ້ເກີດມີຄວາມສ່ຽງທາງດ້ານຄວາມປອດໄພຕໍ່ກັບເດັກຍິງ, ເດັກທີ່ມີອາຍຸຍັງນ້ອຍ ແລະ ເດັກທີ່ມີບັນຫາທາງດ້ານສຸຂະພາບ ຢູ່ໃນບ້ານນ້ອຍທີ່ບໍ່ມີໂຮງຮຽນຕ້ອງໄດ້ຍ່າງຜ່ານປ່າດົງ ຫຼື ຕ້ອງໄດ້ຂ້າມແມ່ນ້ຳໄປໂຮງຮຽນ ຊຶ່ງສອດຄ່ອງກັບຜົນການສຳຫຼວດຂອງຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດວ່າດ້ວຍ "ມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາໄລຍະ 2011-2015" ໃນເດືອນກໍລະກົດ 2011 ຊຶ່ງໄດ້ລະບຸໄວ້ວ່າ ຍັງມີບ້ານທີ່ບໍ່ມີໂຮງຮຽນປະຖົມທີ່ນັກຮຽນຕ້ອງໃຊ້ເວລາ ເດີນທາງຫຼາຍກວ່າ 1 ຊົ່ວໂມງໄປໂຮງຮຽນ ມີເຖິງ 152 ບ້ານ ເທົ່າກັບ 1.8%. ຍິ່ງໄປກວ່ານັ້ນ ບ້ານທີ່ຍັງບໍ່ທັນມີເສັ້ນທາງເຂົ້າເຖິງ ຫຼື ເສັ້ນທາງທີ່ໃຊ້ໄດ້ພຽງແຕ່ລະດູແລ້ງ ມີເຖິງ 2,111 ບ້ານ ເທົ່າກັບ 24.4%.

ນອກຈາກນີ້, ຂໍ້ມູນຕົວຈິງທີ່ພົບເຫັນໃນເວລາລົງໄປສຳຫຼວດໃນຄັ້ງນີ້ ຍັງຢັ້ງຢືນໃຫ້ເຫັນຕື່ມອີກວ່າໂຮງຮຽນມູນລະປະຖົມສ່ວນຫຼາຍ ມີອາຄານຊຸດໂຊມ, ເຄິ່ງຖາວອນ, ຫ້ອງຮຽນບໍ່ພຽງພໍເຮັດໃຫ້ນັກຮຽນແອອັດ. ພ້ອມກັນນັ້ນ ໂຮງຮຽນມູນລະປະຖົມດັ່ງກ່າວ ຍັງຂາດສິ່ງອຳນວຍຄວາມສະດວກ ຫຼື ອຸປະກອນຕ່າງໆເຊັ່ນ: ບໍ່ມີຫ້ອງນ້ຳ, ບໍ່ມີນ້ຳໃຊ້, ບໍ່ມີເດີ່ນຫຼິ້ນ, ບໍ່ມີຮົ້ວອ້ອມໂຮງຮຽນ, ບໍ່ມີອຸປະກອນການຫຼິ້ນ ແລະ ບໍ່ມີອຸປະກອນຮັບໃຊ້ການຮຽນ-ການສອນ ຊຶ່ງບັນຫາຕ່າງໆເຫຼົ່ານີ້ຍັງສືບຕໍ່ເປັນສາເຫດຕົ້ນຕໍກະທົບໃສ່ການປະລະການຮຽນຂອງນັກຮຽນຢູ່ ຊຶ່ງຖ້າປຽບທຽບໃສ່ກັບຜົນຂອງການສຳຫຼວດກ່ຽວກັບຄູເຄື່ອນທີ່ຢູ່ແຂວງສະຫວັນນະເຂດໃນໂຄງການການສຶກສາເພື່ອທຸກຄົນ-ກອງທຶນເລັ່ງລັດ ກໍເຫັນວ່າມີຂໍ້ມູນເຊັ່ນດຽວກັນຄື: ຍັງມີໂຮງຮຽນຫຼາຍແຫ່ງໃນເຂດຫ່າງໄກສອກຫຼີກທີ່ມີສະພາບຂອງອາຄານຮຽນທີ່ຊຸດໂຊມ, ເປັນອາຄານຮຽນເຄິ່ງຖາວອນ ແລະ ຫ້ອງຮຽນບໍ່ພຽງພໍ ຫຼື ໂຕະຕັ່ງນັກຮຽນບໍ່ພຽງພໍ ແລະ ເປ່ເພ.

**ຂໍ້ແນະນຳ:**

1. ກະຊວງສຶກສາທິການ ແລະ ກິລາ ຄວນເລັ່ງລັດໃນການແກ້ໄຂບັນຫາການເຂົ້າຮຽນຂອງເດັກບໍ່ຄົບ 5 ຂັ້ນຮຽນໃນຊັ້ນປະຖົມສຶກສາໂດຍວາງເປັນບຸລິມະສິດໃນການຫັນຈາກໂຮງຮຽນມູນລະປະຖົມໃຫ້ກາຍເປັນໂຮງຮຽນປະຖົມສົມບູນ ດ້ວຍການສືບຕໍ່ຈັດການສອນຫ້ອງຄວບ ແລະ ນຳໃຊ້ບົດຮຽນທີ່ຖອດຖອນໄດ້ຈາກບ່ອນທີ່ມີຜົນສຳເລັດມາແລ້ວຢູ່ໃນແຕ່ລະທ້ອງຖິ່ນຢ່າງເໝາະສົມ.
2. ຄວນປັບປຸງຂະຫຍາຍໂຮງຮຽນໃຫ້ໄດ້ຕາມມາດຕະຖານຕ່ຳສຸດຂອງໂຮງຮຽນຄຸນນະພາບ ແລະ ຈັດຕັ້ງປະຕິບັດເງິນບໍລິຫານໂຮງຮຽນໃນຊັ້ນປະຖົມສຶກສາ ເພື່ອໃຫ້ໂຮງຮຽນສາມາດປັບປຸງຄຸນນະພາບຂອງໂຮງຮຽນຂອງເຂົາເຈົ້າເຊັ່ນ: ຊື້ອຸປະກອນຮັບໃຊ້ໃນການຮຽນ-ການສອນ ແລະ ປະກອບສິ່ງອຳນວຍຄວາມສະດວກຕ່າງໆໃຫ້ຄົບຖ້ວນຕາມເນື້ອໃນ 5 ຫຼັກມູນການສຶກສາ.

**ຂ. ສາເຫດພາຍນອກ**

**ຂ.1 ຄວາມຮັບຜິດຊອບຂອງພໍ່ແມ່/ຜູ້ປົກຄອງເດັກ**

ເຖິງແມ່ນວ່າບັນຫາຄວາມທຸກຍາກຂອງຄອບຄົວເດັກ ມີຜົນກະທົບໂດຍກົງຕໍ່ກັບພໍ່ແມ່/ຜູ້ປົກຄອງເດັກກໍຕາມ ແຕ່ບັນຫາກົກເຄົ້າໃນການສົ່ງລູກຫຼານເຂົ້າໂຮງຮຽນກໍຍັງແມ່ນຄວາມຮັບຜິດຊອບຂອງພໍ່ແມ່/ຜູ້ປົກຄອງເດັກ. ຈາກຂໍ້ມູນການລົງສຳຫຼວດໃນຄັ້ງນີ້ຊີ້ໃຫ້ເຫັນວ່າ ພໍ່ແມ່/ຜູ້ປົກຄອງໃຫ້ເດັກຕິດຕາມໄປອອກແຮງງານຫາລາຍໄດ້ນຳເຊັ່ນ: ຢູ່ໂຮງງານອຸດສະຫະກຳຕ່າງໆ, ເຂື່ອນໄຟຟ້າ, ໂຮງງານນ້ຳຕານ, ສວນປູກຕົ້ນໄມ້ອຸດສາຫະກຳ ແລະ ໄປເຮັດວຽກຢູ່ປະເທດໄທ. ສະນັ້ນ, ການໄປຊອກຫາເຮັດວຽກຕ່າງໆເພື່ອຫຼຸດຜ່ອນຄວາມທຸກຍາກຂອງພໍ່ແມ່/ຜູ້ປົກຄອງ ໂດຍການເອົາລູກໄປນຳແມ່ນເຮັດໃຫ້ໂອກາດທາງດ້ານການສຶກສາຂອງເດັກຫຼຸດລົງ ແລະ ອັດຕາການປະການຮຽນເພີ່ມຂຶ້ນ.

ເພື່ອເປັນການຊ່ວຍຫລຸດຜ່ອນບັນຫາທີ່ເກີດຂຶ້ນນີ້ ທາງທະນາຄານໂລກໄດ້ເນັ້ນໃຫ້ເຫັນວ່າຄວນມີການພັດທະນາເສດຖະກິດ ແລະ ອາຊີບທີ່ໝັ້ນຄົງຢູ່ບ່ອນທີ່ບໍ່ມີໂຮງຈັກ-ໂຮງງານ ແລະ ອຸດສະ

ຫາກຳຕ່າງໆໃຫ້ກັບຊຸມຊົນ ແລະ ຄວນພັດທະນາເສດຖະກິດໃຫ້ມີການຂະຫຍາຍຕົວ ຢູ່ໃນ ສປປ. ລາວ ໃຫ້ຫຼາຍຂຶ້ນ[4]. ການພັດທະນາເຊັ່ນນັ້ນ ຈະຊ່ວຍເຮັດໃຫ້ພໍ່ແມ່/ຜູ້ປົກຄອງເດັກທີ່ບໍ່ມີແຫຼ່ງທຳມາຫາກິນຢູ່ໃນທ້ອງຖິ່ນຂອງຕົນສາມາດມີວຽກເຮັດງານທຳ ແລະ ກໍບໍ່ໄປຫາເຮັດວຽກຢູ່ບ່ອນອື່ນອີກ ຊຶ່ງຈະເປັນປະໂຫຍດຕໍ່ພວກເຂົາເຈົ້າໄດ້ມີໂອກາດສົ່ງລູກຫຼານໄປເຂົ້າຮຽນ.

ນອກນີ້ຍັງພົບເຫັນວ່າ ມີພໍ່ແມ່/ຜູ້ປົກຄອງບາງຄົນບໍ່ໃຫ້ເດັກໃນເກນອາຍຸມາເຂົ້າຮຽນ, ບາງຄອບຄົວກໍ່ເອົາລູກໄປເຂົ້າໂຮງຮຽນແລ້ວກໍ່ຍັງໃຫ້ອອກມາຊ່ວຍວຽກໃນຄອບຄົວ ເຮັດວຽກທາງດ້ານການຜະລິດກະສິກຳ (ເຮັດໄຮ່, ນາ ແລະ ສວນ), ເບິ່ງແຍງນ້ອງຢູ່ເຮືອນ ແລະ ຊ່ວຍວຽກຄອບຄົວດັ່ງນີ້ເປັນຕົ້ນ.

**ຂໍ້ແນະນຳ:**

1. ພາກສ່ວນຮັບຜິດຊອບພັດທະນາເສດຖະກິດ ແລະ ສັງຄົມ ຄວນມີວິທີການພັດທະນາອາຊີບທີ່ໝັ້ນຄົງໃຫ້ກັບຊາວບ້ານ ຫຼື ຊຸມຊົນ ຢູ່ບ່ອນທີ່ບໍ່ທັນມີການພັດທະນາທາງດ້ານເສດຖະກິດເຊັ່ນ: ໂຮງຈັກໂຮງງານ, ການຂຸດຄົ້ນບໍ່ແຮ່ ແລະ ອື່ນໆ ເພື່ອຫຼີກລ້ຽງການອອກໄປຊອກຫາວຽກເຮັດຂອງພໍ່ແມ່/ຜູ້ປົກຄອງເດັກທີ່ມີເກນອາຍຸເຂົ້າໂຮງຮຽນໃນຊັ້ນປະຖົມ.
2. ອຳນວຍການໂຮງຮຽນຮ່ວມກັບຄະນະພັດທະນາການສຶກສາຂັ້ນບ້ານ ຄວນມີວິທີການ ແລະ ມີມາດຕະການຢ່າງເອົາຈິງເອົາຈັງ ເພື່ອໂຄສະນາຊຸກຍູ້ໃຫ້ພໍ່ແມ່/ຜູ້ປົກຄອງເດັກເຂົ້າໃຈ ແລະ ເຫັນຄວາມສຳຄັນ ຕໍ່ການສົ່ງເສີມເດັກທຸກຄົນໃຫ້ໄດ້ຮັບການສຶກສາຊັ້ນປະຖົມຢ່າງທົ່ວເຖິງກັນ.

## ຂ.2 ຄວາມທຸກຍາກຂອງຄອບຄົວ

ຜ່ານການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ເຫັນວ່າການປະລະຂອງນັກຮຽນຊັ້ນປະຖົມ ພົວພັນເຖິງຄວາມທຸກຍາກຂອງຄອບຄົວເດັກທີ່ຢູ່ໃນໄວຮຽນຊັ້ນປະຖົມສຶກສາ ໂດຍສະເພາະແມ່ນຂາດເຂີນປັດໄຈພື້ນຖານໃນການດຳລົງຊີວິດເຊັ່ນ: ດ້ານສະບຽງອາຫານ, ເຄື່ອງນຸ່ງຮົ່ມທີ່ຈຳເປັນ, ທີ່ຢູ່ອາໄສຖາວອນ, ຄວາມສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ ແລະ ອື່ນໆ. ສິ່ງທີ່ຄົ້ນພົບກ່ຽວກັບສະພາບຊີວິດການເປັນຢູ່ຂອງພໍ່ແມ່ຜູ້ປົກຄອງເດັກທີ່ເປັນກຸ່ມເປົ້າໝາຍໃນຄັ້ງນີ້ ແມ່ນສອດຄ່ອງກັບຜົນຂອງການສຳຫຼວດຂອງຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດວ່າດ້ວຍ “ມາດຕະຖານຄວາມທຸກຍາກ ແລະ ການພັດທະນາໄລຍະ 2011-2015” ໃນເດືອນກໍລະກົດ 2011 ຊຶ່ງໄດ້ຊີ້ໃຫ້ເຫັນວ່າ ໃນຂອບເຂດທົ່ວປະເທດຍັງມີຄອບຄົວທີ່ທຸກຍາກ 205,746 ຄອບຄົວ ເທົ່າກັບ 19%, ບ້ານທີ່ມີຄົວເຮືອນທຸກຍາກກວມ 51% ຂຶ້ນໄປ ມີ 2,484 ບ້ານ ເທົ່າກັບ 28.7%.

[4]ນະໂຍບາຍການປະເມີນການລົງທຶນຢູ່ໃນລາວເພື່ອສົ່ງເສີມການເຕີບໂຕຂອງຂະແໜງການທີ່ບໍ່ແມ່ນແຫຼ່ງຊັບພະຍາກອນທຳມະຊາດ, 2011

**ຂໍ້ແນະນຳ:**

1. ກະຊວງສຶກສາທິການ ແລະ ກິລາ ຄວນມີທຶນການສຶກສາເພື່ອຊ່ວຍເຫຼືອເດັກນ້ອຍທີ່ມາຈາກຄອບຄົວທີ່ທຸກຍາກ, ເດັກກຳພ້າ/ກຳພອຍ.
2. ກະຊວງສຶກສາທິການ ແລະ ກິລາ ຄວນສືບຕໍ່ປັບປຸງໂຄງການອາຫານໃນໂຮງຮຽນໃຫ້ມີຄວາມສາມາດສືບຕໍ່ຈັດຕັ້ງປະຕິບັດ ແລະ ຂະຫຍາຍໂຄງການອອກໄປໃຫ້ມີຄວາມໝັ້ນຄົງ ແລະທົ່ວເຖິງ.
3. ຫ້ອງການສຶກສາທິການ ແລະ ກິລາເມືອງ ຄວນໂຄສະນາກ່ຽວກັບ ຄວາມສຳຄັນ ແລະ ຄຸນປະໂຫຍດຂອງການສຶກສາໃຫ້ພໍ່ແມ່ນັກຮຽນ.

## ຂ.3 ວິທີການຈັດຕັ້ງປະຕິບັດນະໂຍບາຍ

ໂດຍປະຕິບັດຕາມຄຳສັ່ງແນະນຳເລກທີ 09/ກມສພ, ລົງວັນທີ 8/6/2004 ວ່າດ້ວຍການສ້າງບ້ານ ແລະ ກຸ່ມບ້ານພັດທະນາຂອງກົມການເມືອງສູນກາງນັ້ນ ຜ່ານມາເຫັນວ່າການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວມີຫຼາຍດ້ານດີ ແຕ່ກໍຍັງມີບາງດ້ານ ທີ່ຍັງປະຕິບັດບໍ່ຖືກຕ້ອງກັບຈຸດປະສົງຕົ້ນຕໍຂອງການສ້າງກຸ່ມບ້ານພັດທະນາເຊັ່ນ: ມີການເຕົ້າໂຮມບ້ານໂດຍມີການຍົກຍ້າຍຊາວບ້ານມາເຕົ້າໂຮມກັນຢູ່ບ້ານຈັດສັນໃໝ່ເຮັດໃຫ້ຊາວບ້ານທີ່ຖືກຍົກຍ້າຍຈຳນວນໜຶ່ງຍັງສືບຕໍ່ອາໃສຢູ່ບ້ານເດີມ ແລະ ບໍ່ສົ່ງລູກຫຼານຂອງຕົນໄປເຂົ້າຮຽນຢູ່ໂຮງຮຽນທີ່ຈັດສັນໃໝ່ນັ້ນໄດ້ ສາເຫດເກີດມາຈາກການທີ່ບ້ານເດີມພວກເຂົາເຈົ້າມີແຫຼ່ງຊັບພະຍາກອນທຳມະຊາດຢູ່ໃກ້ບ້ານ ທີ່ເອື້ອອຳນວຍໃຫ້ແກ່ເຂົາເຈົ້າສາມາດຊອກຢູ່ຫາກິນໄດ້ ສ່ວນຢູ່ບ້ານຈັດສັນໃໝ່ນັ້ນແມ່ນຂາດແຫຼ່ງຊອກຢູ່ຫາກິນໃຫ້ແກ່ເຂົາເຈົ້າ ຍ້ອນການເຕົ້າໂຮມບ້ານດັ່ງກ່າວເປັນພຽງແຕ່ການເຕົ້າໂຮມຊື່ບ້ານເທົ່ານັ້ນ ແຕ່ຍັງຂາດສິ່ງອຳນວຍຄວາມສະດວກໃນຫຼາຍດ້ານໃຫ້ແກ່ເຂົາເຈົ້າສາມາດດຳລົງຊີວິດຄືແຕ່ກ່ອນ. ຂໍ້ມູນດັ່ງກ່າວນີ້ ແມ່ນສອດຄ່ອງກັບຜົນຂອງການສຳຫຼວດກ່ຽວກັບຄູສອນເຄື່ອນທີ່ຢູ່ແຂວງສະຫວັນນະເຂດໃນຕົ້ນປີ 2011. ການສຳຫຼວດດັ່ງກ່າວພົບວ່າຄອບຄົວທີ່ມີການລົງທະບຽນຍ້າຍໄປຢູ່ບ້ານຈັດສັນ ແຕ່ພັດກັບຄືນໄປຢູ່ບ້ານເດີມຂອງພວກເຂົາ ຍ້ອນຂາດໂອກາດໃນການໄປຫາເຄື່ອງປ່າຂອງດົງທີ່ເຄີຍປະຕິບັດຜ່ານມາເພື່ອຫາລ້ຽງຊີບຂອງເຂົາເຈົ້າ.

**ຂໍ້ແນະນຳ:**

1. ຄວນຈັດກອງປະຊຸມປຶກສາຫາລື ແລະ ຖອດຖອນບົດຮຽນ ລະຫວ່າງຂະແໜງການສຶກສາກັບຂະແໜງການອື່ນໆທີ່ພົວພັນກັບວິທີການຈັດຕັ້ງປະຕິບັດຄຳສັ່ງເລກທີ 03/ກມສພ, ລົງວັນທີ 30/05/2011 ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດຂອງກົມການເມືອງສູນກາງພັກ (ທີ່ປັບປຸງຈາກເລກທີ 09/ກມສພ) ເພື່ອຜັນຂະຫຍາຍດ້ານດີຂອງຄຳສັ່ງດັ່ງກ່າວ ແລະ ປັບປຸງການຈັດຕັ້ງປະຕິບັດນະໂຍບາຍການເຕົ້າໂຮມບ້ານໃຫ້ສອດຄ່ອງກັບແຜນພັດທະນາການສຶກສາຊັ້ນປະຖົມແບບທົ່ວເຖິງ ກໍຄື

ຮັບປະກັນຄວາມຄືບໜ້າທີ່ກ້າວໄປສູ່ການບັນລຸເປົ້າໝາຍທີ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ.

2. ການເຕົ້າໂຮມບ້ານຄວນຮັບປະກັນການຈັດສັນທາງດ້ານອາຊີບ ແລະ ເນື້ອທີ່ເຮັດການຜະລິດທີ່ໝັ້ນຄົງໃຫ້ກັບຄອບຄົວທີ່ຖືກຍົກຍ້າຍ.

### ຂ.4 ໄພພິບັດທຳມະຊາດ

ໃນສອງສາມປີທີ່ຜ່ານມາ ເກີດມີໄພນ້ຳຖ້ວມເພີ່ມຂຶ້ນເລື້ອຍໆ ເຊິ່ງໄດ້ສ້າງຄວາມເສຍຫາຍທາງດ້ານເສດຖະກິດ ແລະ ບຸກຄົນ ໂດຍສະເພາະແມ່ນ ຊຸມຊົນທີ່ອາໃສຢູ່ຕາມເຂດຊົນນະບົດ ທີ່ຂຶ້ນກັບການຜະລິດກະສິກຳເປັນຕົ້ນຕໍ. ນອກຈາກນັ້ນ, ໄພນ້ຳຖ້ວມຍັງໄດ້ສ້າງຄວາມເສຍຫາຍ ຢ່າງໜັກໜ່ວງໃຫ້ແກ່ໂຮງຮຽນ, ອຸປະກອນການຮຽນ-ການສອນ, ຖະໜົນຫົນທາງ, ຂົວ ແລະ ອື່ນໆ ຕົວຢ່າງ: ຢູ່ແຂວງສະຫວັນນະເຂດ ພົບວ່າມີຫຼາຍບ້ານທີ່ຖືກຜົນກະທົບຈາກໄພພິບັດທຳມະຊາດເຊັ່ນ: ໄພນ້ຳຖ້ວມກວມເອົາ 80% ຂອງເນື້ອທີ່ທຳນາຫາກິນທັງໝົດ. ຢູ່ແຂວງເຊກອງ ແລະ ແຂວງອັດຕະປື ເກີດມີດິນເຈື່ອນໃສ່ຖະໜົນຫົນທາງ, ຂົວເປ່ເພເຮັດໃຫ້ນັກຮຽນບໍ່ສາມາດເດີນທາງໄປເຂົ້າໂຮງຮຽນໄດ້, ໂຮງຮຽນເປ່ເພ ເຮັດໃຫ້ການຮຽນ-ການສອນຕ້ອງໄດ້ຢຸດຕິຊົ່ວຄາວ.

**ຂໍ້ແນະນຳ:**

1. ເຖິງວ່າໄພພິບັດທຳມະຊາດບໍ່ແມ່ນສາເຫດຕົ້ນຕໍຂອງການປະລະການຮຽນກໍ່ຕາມ, ແຕ່ກະຊວງສຶກສາທິການ ແລະ ກິລາ ຄວນປະສານງານກັບຂະແໜງການອື່ນໆ ເພື່ອສ້າງແຜນປ້ອງກັນໄພພິບັດທຳມະຊາດ ແລະ ຮັບປະກັນວ່າສະພາບການດັ່ງກ່າວນີ້ ຈະບໍ່ເຮັດໃຫ້ ອັດຕາປະລະການຮຽນເພີ່ມຂຶ້ນໃນອະນາຄົດ.

## ຄ. ນິຍາມການປະລະ ແລະ ການເກັບກຳຂໍ້ມູນ

ການກຳນົດນິຍາມຄຳສັບຕ່າງໆ ແລະ ວິທີການເກັບກຳຂໍ້ມູນເຊັ່ນ: "ການປະລະການຮຽນ", "ໂຮງຮຽນປະຖົມບໍ່ສົມບູນ", "ການສອນຫ້ອງຄວບ" ນັ້ນບາງຄັ້ງກໍມີຂໍ້ຂັດແຍ່ງກັນທາງດ້ານຄວາມໝາຍໃນເວລານຳໃຊ້ເກັບກຳຂໍ້ມູນຂອງພາກສ່ວນຕ່າງໆ, ກຸ່ມຄົນ ແລະ ນິຕິບຸກຄົນໃນຂະແໜງການສຶກສາທີ່ແຕກຕ່າງກັນຢູ່ໃນລະດັບຊາດ ແລະ ສາກົນ.

ໃນກໍລະນີນີ້, ການໃຊ້ນິຍາມຄຳວ່າ "ການປະລະການຮຽນ" ເຂົ້າໃນການສຳຫຼວດແມ່ນ ກຳນົດເອົາຕາມຄຳນິຍາມຂອງອົງການອຸຍແນດສະໂກ ຊຶ່ງທີມງານວິໄຈກໍໄດ້ກະກຽມຢ່າງລະອຽດ ກ່ອນການລົງສຳຫຼວດຢູ່ພາກສະໜາມ ເພື່ອຮັບປະກັນວ່າ ການນຳໃຊ້ຄວາມໝາຍ ຄວາມສຳຄັນ ຂອງຄຳວ່າການປະລະການຮຽນ ແມ່ນຖືກຕ້ອງສອດຄ່ອງກັບປື້ມຄູ່ມືຕົວຊີ້ບອກຂອງການສຶກສາ (*ລາຍລະອຽດເບິ່ງເອກະສານຊ້ອນທ້າຍທີ* 2).

ການຄິດໄລ່ອັດຕາປະລະການຮຽນ ເຊິ່ງເປັນສ່ວນໜຶ່ງຂອງການວິເຄາະປະສິດທິພາບພາຍໃນຂອງສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ສໍາລັບສ້າງເປັນປະມວນສະຖິຕິປະຈໍາປີ ໃຫ້ແກ່ກະຊວງສຶກສາທິການແລະກິລາ. ການຄິດໄລ່ດັ່ງກ່າວແມ່ນໄດ້ປະຕິບັດຕາມວິທີການ[5] ຂອງສາກົນ (UNESCO) ແລະ ຄິດໄລ່ຈໍານວນນັກຮຽນທີ່ບໍ່ຄ້າງຫ້ອງ ຜູ້ທີ່ບໍ່ສາມາດເລື່ອນ ຊັ້ນຂຶ້ນສູ່ລະດັບສູງກວ່າໃນແຕ່ລະປີຮຽນຖັດໄປນັ້ນ ເປັນຈໍານວນນັກຮຽນປະລະການຮຽນ. ເພາະສະນັ້ນ, ຖ້າວ່າມີນັກຮຽນຈໍານວນ 100 ຄົນ ລົງທະບຽນເຂົ້າຮຽນຊັ້ນ ປ.1 ໃນສົກຮຽນທໍາອິດຂອງໂຮງຮຽນໃດໜຶ່ງ, ໃນຕົ້ນສົກຮຽນຖັດມາ ຖ້າວ່າມີຈໍານວນນັກຮຽນ 30 ຄົນ ຄ້າງຫ້ອງ ປ.1 ແລະ ມີນັກຮຽນ ລົງທະບຽນເຂົ້າຮຽນຢູ່ໃນຊັ້ນ ປ.2 ຈໍານວນ 50 ຄົນ ກໍໝາຍຄວາມວ່າມີຈໍານວນນັກຮຽນທັງໝົດ 20 ຄົນ ປະລະການຮຽນ ຍ້ອນວ່າພວກເຂົາເຈົ້າບໍ່ໄດ້ມາລົງທະບຽນ ສືບຕໍ່ຮຽນຢູ່ໃນຊັ້ນ ປ.2 ຂອງໂຮງຮຽນດັ່ງກ່າວ. ມາດຕະການການຄິດໄລ່ດັ່ງກ່າວນີ້ ອາດບໍ່ຄ່ອຍເໝາະສົມປານໃດ ສໍາລັບບ່ອນທີ່ມີ ການເຄື່ອນຍ້າຍພາຍໃນຂອງປະຊາກອນ ທີ່ເປັນນັກຮຽນຫຼາຍ ເຊັ່ນຕົວຢ່າງ: ຖ້າວ່າມີນັກຮຽນຈາກບ້ານອື່ນ ມາເຂົ້າຮຽນຮ່ວມກັນຢູ່ໃນສົກຮຽນຖັດມາຂອງໂຮງຮຽນດັ່ງກ່າວ, ກໍໝາຍຄວາມວ່າຈໍານວນນັກຮຽນຫ້ອງ ປ.2 ອາດມີຈໍານວນເຖິງ 150 ຄົນ ຊຶ່ງໃນຈໍານວນດັ່ງກ່າວນີ້ເອງ ທີ່ເປັນບັນຫາໃຫ້ແກ່ການການຄິດໄລ່ ຈໍານວນນັກຮຽນປະລະການຮຽນ.

ວິທີການຂອງສາກົນທີ່ເຄີຍໃຊ້ໃນການຄິດໄລ່ ອັດຕາການປະລະການຮຽນຂອງນັກຮຽນ ມັກລວມເອົາຈໍານວນນັກຮຽນ “ທີ່ຍ້າຍມາຈາກບ່ອນອື່ນ” ເຂົ້ານໍາ. ຕົວຢ່າງ: ນັກຮຽນທີ່ ລົງທະບຽນເຂົ້າຮຽນໃໝ່ໃນຊັ້ນ ປ.2 ແຕ່ບໍ່ໄດ້ເຂົ້າຮຽນໃນຊັ້ນ ປ.1 ຂອງສົກຮຽນຜ່ານມາໄດ້ຈັດເຂົ້າໃນກຸ່ມນັກຮຽນທີ່ "ຍ້າຍມາຈາກບ່ອນອື່ນ". ເຖິງແນວໃດກໍຕາມ, ຢູ່ໃນໂຮງຮຽນປະຖົມຂອງ ສປປ ລາວ ກໍຍັງບໍ່ມີວິທີການໃດໆທີ່ພິສູດໃຫ້ຮູ້ວ່າ ມີລາຍງານຂໍ້ມູນກ່ຽວກັບຈໍານວນນັກຮຽນ ທີ່ຍ້າຍມາຈາກບ່ອນອື່ນມາເຂົ້າຮຽນຢ່າງຈະແຈ້ງ ແລະ ດັ່ງນັ້ນຮ່າງເກັບກໍາສະຖິຕິການສຶກສາປະຈໍາປີ ຈຶ່ງບໍ່ມີຂໍ້ມູນຈໍານວນນັກຮຽນດັ່ງກ່າວໄວ້ສະເພາະ ເພື່ອຕິດຕາມພາຍຫຼັງ[6]. ສະນັ້ນ, ການເຄື່ອນຍ້າຍ ຂອງປະຊາກອນ ທີ່ຢູ່ໃນເກນອາຍຸເຂົ້າຮຽນ ແມ່ນມີອິດທິພົນຕໍ່ຜົນການຄິດໄລ່ ອັດຕາປະລະການຮຽນ ແລະ ຈາກເຫດຜົນດັ່ງກ່າວເຫັນວ່າ ອັດຕາປະລະຢູ່ໃນລະດັບໂຮງຮຽນ ຈຶ່ງບໍ່ເປັນໜ້າເຊື່ອຖືໄດ້ ເທົ່າທີ່ຄວນ.

ຢູ່ໃນລະດັບປະເທດ, ການຄິດໄລ່ອັດຕາປະລະການຮຽນ ແມ່ນເຊື່ອຖືໄດ້ ເພາະວ່າ ການເຄື່ອນຍ້າຍຂອງປະຊາກອນ ແມ່ນເກີດຂຶ້ນຢູ່ພາຍໃນປະເທດ[7] ເອງ. ແຕ່ວ່າ ຢູ່ໃນລະດັບແຂວງ, ການຄິດໄລ່ກໍ່ມີຄວາມໜ້າເຊື່ອຖື ຫຼຸດລົງກວ່າລະດັບປະເທດ, ເຖິງແມ່ນວ່າການເຄື່ອນຍ້າຍ ຂອງປະຊາກອນສ່ວນຫຼາຍ ເກີດຂຶ້ນລະຫວ່າງແຂວງ ຕໍ່ ແຂວງກໍຕາມ, ຍົກເວັ້ນ ກໍລະນີທີ່ ມີການຍົກຍ້າຍເຂົ້າມາໃນຕົວເມືອງໃຫຍ່ເຊັ່ນ: ຢູ່ນະຄອນຫຼວງວຽງຈັນ. ຄວາມໝາຍສໍາຄັນ ຂອງການເຄື່ອນຍ້າຍຂອງປະຊາກອນພາຍໃນຂອບເຂດຂອງແຕ່ລະເມືອງນັ້ນ ກໍຍັງມີຜົນຕໍ່ການຄິດໄລ່ ອັດຕາປະການຮຽນໃນ

[5] *ສຕສ ນໍາໃຊ້ວິທີການຄິດໄລ່ຮຸ້ນນັກຮຽນຕາມສູດຂອງອົງການອຸຍແນດສະໂກ* (UNESCO).

[6] ສຕສ ກໍາລັງສ້າງແຜນເພື່ອກວມເອົາຄໍາຖາມກ່ຽວກັບນັກຮຽນທີ່ຍ້າຍມາຈາກບ່ອນອື່ນຢູ່ສະຖິຕິການສຶກສາໃນຄັ້ງໜ້າ.

[7] ມີການໄປເຮັດວຽກຢູ່ປະເທດໄທແຕ່ເດັກນ້ອຍບໍ່ສາມາດເຂົ້າໂຮງຮຽນຢູ່ໄທດັ່ງນັ້ນເດັກຈະຖືກຈັດຢູ່ໃນເດັກປະລະການຮຽນ.

ຊັ້ນປະຖົມ, ຈາກເຫດຜົນນີ້ເອງ ຈຶ່ງສາມາດເວົ້າໄດ້ວ່າການຂາດຂໍ້ມູນກ່ຽວກັບ "ການຍ້າຍມາຈາກບ່ອນອື່ນ" ຂອງນັກຮຽນປະຖົມທີ່ຊັດເຈນນັ້ນ ກາຍເປັນບັນຫາໃຫ້ແກ່ການກຳນົດ ຄາດໝາຍຄວາມຄືບໜ້າຂອງເປົ້າໝາຍທີ 2 ຂອງສະຫັດສະວັດດ້ານການພັດທະນາໃນຂັ້ນເມືອງ.

ຢູ່ໃນລະດັບໂຮງຮຽນ, ຂໍ້ມູນການປະລະການຮຽນທີ່ເຄີຍໃຊ້ຜ່ານມາ ແມ່ນການກຳນົດເອົາ ຕົວເລກຈຳນວນນັກຮຽນ ທີ່ລົງທະບຽນເຂົ້າຮຽນ ໃນຂັ້ນຮຽນໃດໜຶ່ງ ແຕ່ນັກຮຽນດັ່ງກ່າວ ອອກໂຮງຮຽນກ່ອນມື້ປິດສົກຮຽນ. ສຳລັບໂຮງຮຽນປະຖົມບໍ່ສົມບູນ, ການໃຊ້ຄຳນິຍາມຂອງການປະລະ ການຮຽນດັ່ງກ່າວ ແມ່ນບໍ່ເໝາະສົມ. ຖ້າວ່າໂຮງຮຽນຫຼັງໜຶ່ງມີແຕ່ ຊັ້ນປ.1 ແລະ ປ.2 ເທົ່ານັ້ນ ພາຍຫຼັງທີ່ນັກຮຽນຮຽນຈົບ ຊັ້ນ ປ.2 ແລ້ວ ອາດຈະບໍ່ນັບເປັນຈຳນວນນັກຮຽນປະລະການຮຽນອີກ. ເຖິງແນວໃດກໍຕາມ, ໃນລະດັບປະເທດ ໄດ້ນັບເອົາຈຳນວນນັກຮຽນດັ່ງກ່າວ ເປັນນັກຮຽນປະລະການຮຽນ ຊຶ່ງເຫັນວ່າຖືກຕ້ອງແລ້ວ, ແຕ່ອີງຕາມເປົ້າໝາຍທີ 2 ຂອງສະຫັດສະວັດ ນັ້ນ ແມ່ນເດັກທຸກຄົນຕ້ອງໄດ້ຮຽນຈົບຫ້າຂັ້ນຮຽນຂອງຊັ້ນປະຖົມສຶກສາ.

ຈາກການລົງສຳຫລວດຢູ່ພາກສະໜາມໃນຄັ້ງນີ້ພົບວ່າ ອຳນວຍການໂຮງຮຽນປະຖົມ ບໍ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ວິທີການເກັບກຳຂໍ້ມູນສະຖິຕິໃນໂຮງຮຽນຂອງຕົນຊຶ່ງພົວພັນເຖິງຄວາມຖືກຕ້ອງ ແລະ ສອດຄ່ອງ ກັບລະບົບການເກັບກຳຂໍ້ມູນຂອງຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ). ຈາກຫຼັກຖານປຽບທຽບຂອງຂໍ້ມູນ ທີ່ມີຢູ່ໃນຫ້ອງການ ສກມ ກັບຂໍ້ມູນທີ່ມີຢູ່ໃນໂຮງຮຽນ ຍັງເຫັນວ່າ ບໍ່ເປັນລະບົບສອດຄ່ອງກັນ. ຊຶ່ງໃນນີ້, ການເຄື່ອນຍ້າຍຂອງປະຊາກອນເປັນບັນຫາໃໝ່ ຕໍ່ລະບົບການເກັບກຳຂໍ້ມູນນັກຮຽນປະລະການຮຽນ ແລະ ພະນັກງານ ສກມ ເອງກໍຍັງບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບ ວິທີການເກັບກຳຂໍ້ມູນນັກຮຽນທີ່ຍ້າຍມາຈາກບ່ອນອື່ນ. ພະນັກງານ ສກມ ກໍຍັງມີການຍົກຍ້າຍໜ້າທີ່ກັນພາຍໃນສູງ ຊຶ່ງເຮັດໃຫ້ຜູ້ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບລະບົບຄຸ້ມຄອງຖານຂໍ້ມູນແລ້ວພັດຖືກມອບໜ້າທີ່ໃໝ່ ແລະ ມອບໝາບໃຫ້ພະນັກງານ ສກມ ໃໝ່ ທີ່ບໍ່ໄດ້ຮັບການອົບຮົມມາເຮັດໜ້າທີ່ແທນ.

ຍ້ອນສາເຫດຕ່າງໆ ທີ່ໄດ້ກ່າວມານັ້ນ ຈຶ່ງມີຜົນກະທົບຫລາຍຢ່າງຕາມມາເຊັ່ນ: ການລາຍງານສະຖິຕິຈາກໂຮງຮຽນມີຄວາມຄາດເຄື່ອນ ທາງດ້ານຕົວເລກບໍ່ຊັດເຈນ, ອຳນວຍການໂຮງຮຽນປະຖົມຈຳນວນໜຶ່ງ ບໍ່ເຂົ້າໃຈຄວາມໝາຍຂອງການປະລະການຮຽນຂອງເດັກຢ່າງຖືກຕ້ອງ, ມີຄວາມສັບສົນກັນລະຫວ່າງການອອກໂຮງຮຽນຊົ່ວຄາວຂອງເດັກ ແລະ ມີຄວາມຫຍຸ້ງຍາກໃນການເກັບກຳ ຂໍ້ມູນສະຖິຕິນັກຮຽນປະລະການຮຽນ. ຫ້ອງການ ສກມ ຍັງຂາດບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດໃນການເກັບກຳຂໍ້ມູນສະຖິຕິການປະລະການຮຽນ.

**ຂໍ້ແນະນຳ:**

1. ຄວນເພີ່ມການຝຶກອົບຮົມວິທີການເກັບກຳສະຖິຕິ ໃຫ້ແກ່ພະນັກງານຈາກພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ອຳນວຍການໂຮງຮຽນ

ປະຖົມ ໃນທົ່ວປະເທດ ເພື່ອເຮັດໃຫ້ສະຖິຕິຂໍ້ມູນທີ່ເກັບກຳໄດ້ນັ້ນ ມີຄວາມໜ້າເຊື່ອຖືໄດ້ ແລະ ມີການຕິດຕາມປະເມີນຜົນຫຼັງຈາກຜ່ານການຝຶກອົບຮົມແລ້ວ.

2. ການຝຶກອົບຮົມການນຳໃຊ້ຄູ່ມື ການຄິດໄລ່ຕົວຊີ້ບອກ ຂອງສູນສະຖິຕິ-ເຕັກໂນໂລຊີຂໍ້ມູນຂ່າວສານການສຶກສາ ທີ່ມີຢູ່ແລ້ວນັ້ນຄວນລວມເອົາຄຳນິຍາມ “ອັດຕາປະລະການຮຽນ”, "ອັດຕາລອດເຫຼືອ", ແລະ “ນັກຮຽນທີ່ຍ້າຍມາຈາກບ່ອນອື່ນ” ເຂົ້ານຳ ໃນນີ້ຄວນແນະນຳວິທີການຄິດໄລ່ ແລະ ໃສ່ລະຫັດຈຳນວນ “ນັກຮຽນທີ່ຍ້າຍມາຈາກບ່ອນອື່ນ[8]” ໄວ້ໃນປື້ມດັ່ງກ່າວ.
3. ຄວນມີການຕິດຕາມກວດກາຈາກພາຍນອກ ກ່ຽວກັບການເກັບກຳຂໍ້ມູນ ເພື່ອເຮັດໃຫ້ຂໍ້ມູນ ມີຄວາມໜ້າເຊື່ອຖືກວ່າເກົ່າ; ຄວນທົບທວນຄືນເລື້ອຍໆ ກ່ຽວກັບການເກັບກຳສະຖິຕິ ຂອງນັກຮຽນໃນແຕ່ລະໄລຍະເວລາເຊັ່ນ: (ຕົ້ນສົກຮຽນ, ກາງສົກຮຽນ ແລະ ທ້າຍສົກຮຽນ); ຄວນເບິ່ງຄືນຄວາມເປັນເອກະພາບກັນ ລະຫວ່າງຫ້ອງການສຶກສາທິການ ແລະ ກິລາເມືອງ ກັບໂຮງຮຽນ ກ່ອນການສົ່ງຂໍ້ມູນໃຫ້ພະແນກສຶກສາທິການ ແລະ ກິລາແຂວງ. ໃນນີ້ ຄວນມີລະບົບຕິດຕາມບັນທຶກລະອຽດການຍົກຍ້າຍຂອງນັກຮຽນຈາກໂຮງຮຽນໜຶ່ງຫາອີກໂຮງຮຽນໜຶ່ງກ່ອນການຮຽນຈົບຫ້າຂັ້ນຮຽນຂອງຊັ້ນປະຖົມ.

[8] ສຕສ ກຳລັງສ້າງແຜນເພື່ອກວມເອົາການນັບຈຳນວນນັກຮຽນທີ່ຍ້າຍມາຈາກບ່ອນອື່ນໃນຂັ້ນປະຖົມຢູ່ໃນສະຖິຕິການສຶກສາປີ 2012/13.

**7. ແຜນປະຕິບັດງານ ກ່ຽວກັບການຫຼຸດຜ່ອນອັດຕາປະລະການຮຽນໃນຊັ້ນປະຖົມ**

**ກ. ສາຍເຫດພາຍໃນ**

ແຕ່ລະຫ້ອງການສຶກສາທິການ ແລະ ກິລາເມືອງ ຄວນມີການກໍານົດໂຮງຮຽນທີ່ ຂາດເຂີນຫ້ອງຮຽນ/ຄູ ແລະ ວາງແຜນຄວາມຕ້ອງການ ໃຫ້ໂດຍສອດຄ່ອງກັບນະໂຍບາຍ ກຸ່ມບ້ານພັດທະນາຂອງແຂວງ. ແຜນຄວາມຕ້ອງການດັ່ງກ່າວນີ້ ກໍຄວນໃຫ້ສອດຄ່ອງກັບແຜນງານຂະຫຍາຍໂຮງຮຽນ ທີ່ບໍ່ໄດ້ມາດຖານໃຫ້ກ້າວໄປສູ່ມາດຕະຖານຕໍ່າສຸດຂອງໂຮງຮຽນຄຸນນະພາບ ຂອງໂຄງການການສຶກສາເພື່ອທຸກຄົນ-ກອງທຶນເລັ່ງລັດ. ກົມອະນຸບານ ແລະ ປະຖົມສຶກສາ ແລະ ກົມສ້າງຄູ ຄວນຮ່ວມກັນທົບທວນຄືນຈໍານວນໂກຕ້າການສ້າງຄູປະຖົມ ເພື່ອຮັບປະກັນໃຫ້ມີຄູສອນຊັ້ນປະຖົມຢ່າງພຽງພໍ. ຄວນທົບທວນຄືນການສັບຊ້ອນຄູໃຫ້ໄປຕາມແຜນແມ່ບົດຂອງການສ້າງຄູ ໂດຍມີການສຶກສາເບິ່ງຕື່ມການນໍາເອົາວິຊາການສອນຫ້ອງຄວບ ແລະ ວິຊາສະຖິຕິການສຶກສາເຂົ້າສອນໃຫ້ນັກຮຽນຄູຢ່າງພຽງພໍ ລວມທັງນະໂຍບາຍ ແລະ ວິທີການສະໜັບສະໜູນ ຄູທີ່ສອນຢູ່ເຂດຫ່າງໄກສອກຫຼີກ ໃຫ້ສາມາດປະຕິບັດໄດ້. ຄວນຖອດຖອນບົດຮຽນ ກ່ຽວກັບການສ້າງຄູຊົນເຜົ່າ ແລະ ການສັບຊ້ອນຄູຊົນເຜົ່າ ໄປສອນຢູ່ເຂດຫ່າງໄກສອກຫຼີກຂອງໂຄງການການສຶກສາຂັ້ນພື້ນຖານລາວ-ອົດສະຕາລີ (LABEP). ຄວນມີການປຶກສາຫາລືແລກປ່ຽນບົດຮຽນກັບຄູ່ຮ່ວມພັດທະນາ ກ່ຽວກັບການໃຫ້ທຶນການສຶກສາແກ່ເດັກ ທີ່ມີຄວາມສ່ຽງທີ່ຈະປະລະການຮຽນ ໂດຍອີງໃສ່ບົດຮຽນອັນດີຈາກ ອົງການທີ່ບໍ່ສັງກັດລັດເຊັ່ນ: ຣູມທູຣີດ (Room to Read), ແພລນ ອິນເຕີນາເຊີນແນວ (Plan International) ແລະ ກອງທຶນພັດທະນາການສຶກສາ (EDF).

ເພື່ອປັບປຸງຄຸນນະພາບຂອງການສຶກສາໃນຊັ້ນປະຖົມ ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ຄວນຊຸກຍູ້ໃຫ້ການນໍາຂັ້ນສູງຊ່ວຍອະທິບາຍການພົວພັນກັນລະຫວ່າງ ທຶນບໍລິຫານໂຮງຮຽນ ແລະ ຜົນສໍາເລັດ ຂອງເປົ້າໝາຍທີ 2 ຂອງສະຫັດສະວັດດ້ານການພັດທະນາ. ຄວນຈັດສັນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ເພື່ອເປັນການຊຸກຍູ້ພະນັກງານຂອງຕົນລົງຕິດຕາມໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານເປັນປະຈໍາ. ພະນັກງານຫ້ອງການສຶກສາທິການແລະກິລາເມືອງ ຕ້ອງສ້າງແຜນລະບົບການຕິດຕາມ ແລະ ປະເມີນຜົນ ໃນລະດັບໂຮງຮຽນ ເພື່ອຊ່ວຍໃຫ້ຜູ້ອໍານວຍການໂຮງຮຽນ ແລະ ຄູສອນ ໄດ້ຮຽນຮູ້ຄວາມສໍາຄັນ ຂອງວິທີການບັນທຶກສະຖິຕິຕ່າງໆ. ພະນັກງານ ສກມ ຍັງມີຄວາມຕ້ອງການໃນການ ສ້າງຂີດຄວາມສາມາດ ເພື່ອເຮັດໃຫ້ພວກເຂົາເຈົ້າປະຕິບັດໜ້າທີ່ຂອງຕົນໃຫ້ດີຂຶ້ນ.

ການປຸກລະດົມຊຸມຊົນໃຫ້ມີສ່ວນຮ່ວມໃນວຽກງານສຶກສາ ຄວນມີການຈັດການຝຶກອົບຮົມກ່ຽວກັບພາລະບົດບາດ ແລະ ໜ້າທີ່ໃຫ້ຄະນະພັດທະນາການສຶກສາຂັ້ນບ້ານ ຢ່າງເປັນປະຈໍາ (ປີລະສອງຄັ້ງ ສໍາລັບຄະນະພັດທະນາການສຶກສາຂັ້ນບ້ານທີ່ຍັງບໍ່ເຂັ້ມແຂງເທົ່າທີ່ຄວນ) ພ້ອມດ້ວຍ ການຕິດຕາມ ແລະ ປະເມີນຜົນປະຈໍາປີ. ການປຸກລະດົມຊຸມຊົນ ແມ່ນລວມທັງການໂຄສະນາຂົນຂວາຍທາງດ້ານການສຶກສາຜ່ານສື່ຕ່າງໆ ໃຫ້ທົ່ວເຖິງ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບວຽກງານສຶກສາ (ອາດຈະຍົກເອົາຫົວຂໍ້ໃດໜຶ່ງ ທາງດ້ານການສຶກສາເຊັ່ນ: ຄໍາສັ່ງແນະນໍາຕ່າງໆ). ຄະນະພັດທະນາການສຶກ

ສາຂັ້ນບ້ານ ແລະ ໂຮງຮຽນ ຕ້ອງເຮັດວຽກຮ່ວມກັນກັບພໍ່ແມ່ນັກຮຽນ ເພື່ອແກ້ໄຂບັນຫາຢາເສບຕິດ (ພັດທະນາບ້ານໃຫ້ກາຍເປັນບ້ານປອດຄະດີ, ໂຮງຮຽນ ແລະ ຜູ້ຮັບຜິດຊອບກ່ຽວກັບ ໂຄງການອາຫານໂລກ ຕ້ອງໃຫ້ມີປື້ມຄູ່ມືໃນການຝຶກອົບຮົມການຕິດຕາມນັກຮຽນ ທີ່ຢູ່ໃນເກນອາຍຸເຂົ້າຮຽນ ແລະ ທົບທວນນະໂຍບາຍ ຂອງໂຄງການອາຫານໂລກ ກ່ຽວກັບມາດຕະການໃນການຮັບເບັ້ຍລ້ຽງອາຫານ. ເພື່ອຫຼີກລ້ຽງ ການເຈັບເປັນທາງດ້ານສຸຂະພາບ ກະຊວງສຶກສາທິການ ແລະ ກິລາ ຕ້ອງເຮັດວຽກຮ່ວມກັນກັບກະຊວງສາທາລະນະສຸກ ເພື່ອທົບທວນນະໂຍບາຍກ່ຽວກັບສຸຂະພາບໃນໂຮງຮຽນ. ຄະນະພັດທະນາການສຶກສາຂັ້ນບ້ານ ຕ້ອງໂຄສະນາເຜີຍແຜ່ໃຫ້ພໍ່ແມ່ນັກຮຽນຮູ້ ແລະ ເຂົ້າໃຈເຖິງຄວາມສໍາຄັນ ຂອງເກນອາຍຸເຂົ້າໂຮງຮຽນໃນຊັ້ນປະຖົມສຶກສາ.

ຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານເພື່ອເຮັດໃຫ້ການຕິດຕາມຄວາມຄືບໜ້າຂອງເປົ້າໝາຍທີ 2 ຂອງສະຫັດສະວັດດ້ານການພັດທະນາໃຫ້ດີຂຶ້ນຕື່ມ. ການສ້າງຄວາມເຂັ້ມແຂງ ຕ້ອງລວມທັງການຝຶກອົບຮົມກ່ຽວກັບການຕິດຕາມ, ການເກັບກໍາຂໍ້ມູນ ແລະ ການຄຸ້ມຄອງນັກຮຽນ ນັບແຕ່ຂັ້ນສູນກາງຮອດຂັ້ນທ້ອງຖິ່ນ ລວມທັງສືບຕໍ່ຕິດຕາມ ແລະ ປະເມີນຜົນ. ຄວນສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ສຶກສາທິການ ແລະ ກິລາເມືອງ ເພື່ອໃຫ້ພວກເຂົາຊຸກຍູ້ຄະນະພັດທະນາການສຶກສາຂັ້ນບ້ານ ສືບຕໍ່ປະຕິບັດໜ້າທີ່ຂອງຕົນໃຫ້ສໍາເລັດ. ພະນັກງານສຶກສາທິການ ແລະກິລາເມືອງ ຄວນກວດກາຈໍານວນຄະນະພັດທະນາການສຶກສາຂັ້ນບ້ານ ທີ່ຍັງບໍ່ທັນໄດ້ເຂົ້າຮ່ວມຝຶກອົບຮົມ ແລະ ຂຶ້ນແຜນຝຶກອົບຮົມໃຫ້ພວກເຂົາເຈົ້າໃນລະຫວ່າງສົກປີຮຽນ ແລ້ວ ຈາກນັ້ນຄວນມີການຕິດຕາມ ການປະຕິບັດວຽກງານຂອງພວກເຂົາເປັນປະຈໍາ.

ບັນດາກິດຈະກໍາຕ່າງໆ ຂອງໂຄງການສ້າງຂີດຄວາມສາມາດ ໃນຕໍ່ໜ້າ ຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ ຢູ່ໃນຂັ້ນໂຮງຮຽນ ແລະ ຂັ້ນສຶກສາທິການແລະກິລາເມືອງ ເພື່ອໃຫ້ພວກເຂົາເຈົ້າມີຄວາມສາມາດໃນການຕິດຕາມໂຮງຮຽນ ໃຫ້ດີຂຶ້ນກວ່າເກົ່າ. ການຈັດສັນ ງົບປະມານໃນຂັ້ນສູນກາງ ຕ້ອງຕອບສະໜອງການຝຶກອົບຮົມ ອໍານວຍການໂຮງຮຽນປະຖົມໃໝ່ ໃນການບໍລິຫານ ແລະ ຄຸ້ມຄອງ ໃຫ້ຫຼາຍຂຶ້ນ ລວມທັງການສ້າງແຜນການ ໃນການປັບປຸງການຄຸ້ມຄອງສະຖິຕິຂອງໂຮງຮຽນ.

ຫົວຂໍ້ຂອງຊຸດຝຶກອົບຮົມ ໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ ຄວນສືບຕໍ່ແກ້ໄຂບັນຫາໃນຕໍ່ໜ້າ ກ່ຽວກັບການຮຽນຈົບຊັ້ນປະຖົມຂອງເດັກ ຖ້າວ່າມີນັກຮຽນທີ່ມີອາຍຸແກ່ເກີນອາຍຸເຂົ້າຮຽນ 6 ປີ ຄະນະພັດທະນາການສຶກສາຂັ້ນບ້ານ ກໍຄວນມີວິທີການຊຸກຍູ້ໃຫ້ເຂົາເຈົ້າໃຫ້ຮຽນຈົນຈົບຊັ້ນປະຖົມ. ຄວນທົບທວນນະໂຍບາຍຂອງການສຶກສານອກໂຮງຮຽນ ໃຫ້ເຂັ້ມແຂງສອດຄ່ອງກັບການສຶກສາ ໃນໂຮງຮຽນ ເພື່ອອໍານວຍຄວາມສະດວກໃຫ້ແກ່ນັກຮຽນທີ່ມີອາຍຸເກີນ 10 ປີ ໄດ້ສືບຕໍ່ເຂົ້າຮຽນ ຢູ່ໃນສາຍການສຶກສານອກໂຮງຮຽນໄດ້.

**ຂ. ສາຍເຫດພາຍນອກ**

ຂະແໜງການສຶກສາ ຄວນຊອກຫາວິທີການປະສານງານກັບຂະແໜງການອື່ນໆຢ່າງຕັ້ງໜ້າ ເພື່ອຮ່ວມກັນແກ້ໄຂການແຕກໂຕນທາງດ້ານເສດຖະກິດ-ສັງຄົມ ລະຫວ່າງເຂດຕົວເມືອງ ແລະ

ຊັບພະຍາກອນ ໃນຊ່ວງທີ່ມີການເຕີບໂຕທາງດ້ານເສດຖະກິດ ເພື່ອແກ້ໄຂການຫຼຸດຜ່ອນຄວາມທຸກຍາກ. ຫ້ອງການສຶກສາທິການແລະກິລາເມືອງ ຄວນທົບທວນຄືນທີ່ຕັ້ງຂອງໂຮງຮຽນໃນປັດຈຸບັນ ແລະ ຄວາມຕ້ອງການໃນອະນາຄົດ ເພື່ອປັບປຸງໃຫ້ມັນສອດຄ່ອງກັບນະໂຍບາຍຂອງກຸ່ມບ້ານ. ຫ້ອງການສຶກສາທິການ ແລະ ກິລາເມືອງ ຕ້ອງໄດ້ສ້າງແຜນໃນການກຳນົດທີ່ຕັ້ງຂອງໂຮງຮຽນ ໂດຍຄຳນຶງເຖິງການຂາດເຂີນຫ້ອງຮຽນ ແລະ ຄູສອນໃນແຕ່ລະບ້ານ. ຂະແໜງການສຶກສາ ຄວນຖອດຖອນບົດຮຽນກັບຂະແໜງການທີ່ກ່ຽວຂ້ອງອື່ນໆ ເພື່ອກຳນົດການນຳໃຊ້ນະໂຍບາຍ ຂອງກຸ່ມບ້ານ ໃນການພັດທະນາການສຶກສາຈົນເຖິງປັດຈຸບັນ ແລະ ເພື່ອກຳນົດກົນໄກການສະໜັບສະໜູນເພີ່ມເຕີມ ເພື່ອຮັບປະກັນການບັນລຸເປົ້າໝາຍທີ 2 ຂອງສະຫັດສະວັດດ້ານການພັດທະນາ.

ຄະນະກຳມະການປົກປ້ອງ ແລະ ຄຸ້ມຄອງໄພພິບັດທຳມະຊາດ ຄວນເຮັດວຽກຮ່ວມກັນກັບຂະແໜງການອື່ນໆ ໃນການສ້າງແຜນຍຸດທະສາດແຫ່ງຊາດການປົກປ້ອງ ແລະ ຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດທຳມະຊາດ. ປຶກສາຫາລື ກັບໜ່ວຍງານວິຊາການຂະແໜງການສຶກສາ ເພາະວ່າຍັງມີຄວາມຕ້ອງການຄວາມຊ່ວຍເຫຼືອ ຈາກຄູ່ຮ່ວມພັດທະນາຕື່ມເພື່ອຕອບສະໜອງ ຕໍ່ຜົນກະທົບຂອງໄພພິບັດທຳມະຊາດ. ຄະນະຮັບຜິດຊອບ ຕໍ່ໄພພິບັດທຳມະຊາດ ຈະມີຄວາມສາມາດຮັບປະກັນວ່າ ແຜນຍຸດທະສາດແຫ່ງຊາດໃນການຄຸ້ມຄອງ ຄວາມສ່ຽງຕໍ່ໄພພິບັດທຳມະຊາດ ຈະສາມາດແກ້ໄຂກົນໄກຕ່າງໆຢ່າງມີປະສິດຜົນ ເພື່ອຫຼຸດຜ່ອນຄວາມເສຍຫາຍ ຕໍ່ຂະແໜງການສຶກສາ. ຄະນະຮັບຜິດຊອບສາມາດສະໜອງຄຳແນະນຳ ໃນການກຳນົດທີ່ຕັ້ງຂອງໂຮງຮຽນ ທີ່ສາມາດນຳໃຊ້ເປັນສູນອົບພະຍົບ ລວມທັງການຕິດຕັ້ງ ສິ່ງອຳນວຍຄວາມສະດວກໃນສູນດັ່ງກ່າວ.

## ຄ. ນິຍາມການປະລະ ແລະ ການເກັບກຳຂໍ້ມູນ

ສິ່ງທີ່ສຳຄັນຮີບດ່ວນທີ່ສຸດແມ່ນ ການກຳນົດນິຍາມຂອງຄຳສັບທີ່ສຳຄັນຂອງການສຶກສາ ແລະ ຊີ້ແຈງໃຫ້ຜູ້ບໍລິຫານການສຶກສາທຸກຂັ້ນຮັບຊາບນຳ ເພື່ອເຮັດໃຫ້ການເກັບກຳຂໍ້ມູນມີຄວາມຊັດເຈນຄົບຖ້ວນສາມາດນຳໄປໃຊ້ໃນວິໄຈບັນຫາຕ່າງໆທີ່ເກີດຂຶ້ນໄດ້ ແນໃສ່ຮັບໃຊ້ການວາງແຜນການໃຫ້ມີຄວາມຖືກຕ້ອງຊັດເຈນເພື່ອແກ້ໄຂບັນຫາໃຫ້ທັນການ. ນິຍາມຄຳສັບດັ່ງກ່າວນັ້ນ ຕ້ອງລວມທັງ "ນັກຮຽນທີ່ຍ້າຍມາຈາກບ່ອນອື່ນ", "ການປະລະການຮຽນ" ແລະ ອື່ນໆ. ຈາກນັ້ນ, ແບບຟອມເກັບກຳຂໍ້ມູນສະຖິຕິການສຶກສາຈຶ່ງຄວນມີຂໍ້ມູນກ່ຽວກັບຈຳນວນ "ນັກຮຽນທີ່ຍ້າຍມາຈາກບ່ອນອື່ນ" ໄວ້ນຳ ເພື່ອເຮັດໃຫ້ການຄິດໄລ່ອັດຕາການປະລະການຮຽນ ມີຄວາມຊັດເຈນຂຶ້ນຕື່ມ. ໜ້າວຽກດັ່ງກ່າວນີ້ ຕ້ອງຈັດເຂົ້າໃນແຜນປັບປຸງສະຖິຕິການສຶກສາໃນສົກຮຽນ 2012-13. ສຳລັບສະຖິຕິການສຶກສາ ສົກຮຽນ 2011-12 ຄວນເລັ່ງລັດຈັດລຽງຕົວຊີ້ບອກຫຼັກຕ່າງໆທີ່ກ່ຽວຂ້ອງກັບເປົ້າໝາຍ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ (ປະສິດທິພາບພາຍໃນ) ແລ້ວໃຫ້ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາຈັດເປັນບັນຊີຕົວຊີ້ບອກກ່ອນທ້າຍສົກຮຽນເພື່ອສັງລວມເປັນບຸລິມະສິດ ແລະ ຮັບໃຊ້ການວິເຄາະຕ່າງໆ.

ຄວນທົບທວນຄືນ ຈຳນວນພະນັກງານວິຊາການສະຖິຕິ ຂອງພະແນກສຶກສາທິການ ແລະ ກິລາແຂວງ (ສກຂ), ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ແລະ ອຳນວຍການໂຮງຮຽນ ປະຖົມໃນທົ່ວປະເທດ ທີ່ໄດ້ຮັບການຝຶກອົບຮົມໄປແລ້ວນັ້ນ ເພື່ອສືບຕໍ່ຝຶກອົບຮົມວິທີການເກັບກຳຂໍ້ມູນ ໃຫ້ເຂົາເຈົ້າສາມາດປັບປຸງຂໍ້ມູນໃຫ້ມີຄວາມໜ້າເຊື່ອຖືໄດ້. ທົບທວນຄືນແຜນຝຶກອົບຮົມຂອງສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ (ສຕສ) ພາຍໃຕ້ແຜນງານໂຄງການການສຶກສາເພື່ອທຸກຄົນ-ກອງທຶນເລັ່ງລັດ ເພື່ອຮັບປະກັນການຝຶກອົບຮົມຕື່ມໃຫ້ຜູ້ຮັບຜິດຊອບສະຖິຕິໃນຂັ້ນໂຮງຮຽນ ແລະ ພະນັກງານສະຖິຕິຂອງ ສກມ ໃຫ້ທົ່ວເຖິງ. ກວດກາການເກັບກຳຂໍ້ມູນຕົວຈິງໃນຂັ້ນ ສກຂ, ຫ້ອງການ ສກມ, ໂຮງຮຽນ ແລະ ບ້ານ ດ້ວຍວິທີການສຸ່ມຕົວຢ່າງ ແລະ ມີການຕິດຕາມ ແລະ ປະເມີນຜົນການຝຶກອົບຮົມນັ້ນ. ຖ້າເຮັດໄດ້ຄືແນວນີ້ ແມ່ນຈະຊ່ວຍໃຫ້ຫ້ອງການ ສກມ ມີຂໍ້ມູນຂອງອຳນວຍການໂຮງຮຽນ, ຂໍ້ມູນການຍົກຍ້າຍຄູ ແລະ ການທົດແທນຄູ. ນອກຈາກນັ້ນ ກົມກວດກາກໍຄວນມີການຕິດຕາມຢ່າງປົກກະຕິກ່ຽວກັບຂໍ້ມູນດັ່ງກ່າວເພື່ອຮັບປະກັນຄວາມໜ້າເຊື່ອຖືຂຶ້ນຕື່ມຂອງຂໍ້ມູນທີ່ມີຢູ່.
ພ້ອມດຽວກັນນີ້ ສຕສ ກໍຄວນມີການທົບທວນຄືນກ່ຽວກັບ ຂະບວນການເກັບກຳຂໍ້ມູນ (ໃນໄລຍະເລີ່ມຕົ້ນສົກຮຽນ, ກາງສົກຮຽນ ແລະ ໃນໄລຍະທ້າຍສົກຮຽນ), ລະບົບຕິດຕາມການເຄື່ອນຍ້າຍຂອງປະຊາກອນເດັກທີ່ຢູ່ໃນເກນອາຍຸເຂົ້າຮຽນ.

ທຸກໆແຜນປະຕິບັດງານ ແມ່ນມີຄວາມຕ້ອງການທາງດ້ານງົບປະມານ. ເປັນທີ່ຮູ້ກັນດີແລ້ວວ່າ ເພື່ອຈັດຕັ້ງປະຕິບັດຕາມຂໍ້ແນະນຳຕ່າງໆເຫຼົ່ານັ້ນ ໂດຍຜ່ານແຜນປະຕິບັດງານທີ່ວາງອອກນັ້ນຈະຕ້ອງໄດ້ມີການເພີ່ມງົບປະມານຂຶ້ນເຊັ່ນ: ງົບປະມານທີ່ເປັນເງິນເດືອນ ແລະ ບໍ່ແມ່ນເງິນເດືອນ. ຊຶ່ງຕໍ່ໄປນີ້ ແມ່ນຕ້ອງໄດ້ເອົາໃຈໃສ່ການເກັບກຳຂໍ້ມູນຢ່າງລະອຽດຊັດເຈນ ເພື່ອແນໃສ່ຮັບປະກັນການຄິດໄລ່ງົບປະມານຕາມມູນຄ່າຫົວໜ່ວຍ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນໃຫ້ຄົບຖ້ວນ.

# ພາກທີ II. ການແຈກຢາຍປຶ້ມແບບຮຽນ ແລະ ຄູ່ມືຄູ

## 1. ປະຫວັດຄວາມເປັນມາຂອງການແຈກຢາຍປຶ້ມແບບຮຽນ - ຄູ່ມືຄູ

ການສະໜອງປຶ້ມແບບຮຽນ-ຄູ່ມືຄູ ໃນຫຼາຍປີຜ່ານມາແມ່ນຜ່ານສອງຊ່ອງທາງຄື: ຜ່ານກະຊວງສຶກສາທິການ ແລະ ກິລາ ແລະ ຜ່ານການສະໜັບສະໜູນຂອງໂຄງການຕ່າງໆ. ໂຄງການທີ່ໃຫ້ການສະໜັບສະໜູນການແຈກຢາຍປຶ້ມແບບຮຽນສຳລັບຊັ້ນປະຖົມໃນທົ່ວປະເທດຫວ່າງບໍ່ດົນມານີ້ມີໂຄງການ EDP II, BEGP ແລະ EQIP II ແລະ ສຳລັບຊັ້ນມັດທະຍົມຕອນຕົ້ນ ແມ່ນໂຄງການ BESDP. ອົງການ KOICA ກໍ່ໄດ້ໃຫ້ການສະໜັບສະໜູນ ການແຈກຢາຍປຶ້ມສຳລັບຊັ້ນມັດທະຍົມເຊັ່ນດຽວກັນ ໂດຍຜ່ານກົມແຜນການແລະການຮ່ວມມື ແລະ ກົມມັດທະຍົມສຶກສາ ແຕ່ບໍ່ມີຄວາມຊັດເຈນວ່າແມ່ນຜ່ານລະບົບຂອງກົມການເງິນ/ກະຊວງສຶກສາທິການ ແລະ ກິລາ ຫຼື ບໍ່, ເບິ່ງຄືວ່າໂຄງການໄດ້ໃຫ້ການສະໜັບສະໜູນໂດຍກົງ ໂດຍຜ່ານແຜນແຈກຢາຍປຶ້ມແບບຮຽນ-ຄູ່ມືຄູຂອງກົມມັດທະຍົມສຶກສາ.

ບັນດາໂຄງການດັ່ງກ່າວ ໄດ້ມີການຄຸ້ມຄອງແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃນຫຼາຍໆວິທີທີ່ແຕກຕ່າງກັນ. ໂຄງການ BEGP ໄດ້ເຮັດການປະມູນສາກົນໃນການຈັດພິມ ແລະ ແຈກຢາຍ ຊຶ່ງໃນນີ້ໂຮງພິມທີ່ໄດ້ຊະນະການປະມູນ ເປັນຜູ້ບັນຈຸປຶ້ມດັ່ງກ່າວໃສ່ແກັດແລ້ວຈັດສົ່ງໃຫ້ແຕ່ລະໂຮງຮຽນໂດຍກົງ. ໂຄງການ BESDP ກໍ່ຜ່ານການປະມູນສາກົນເຊັ່ນດຽວກັນ ແຕ່ການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູນັ້ນຮອດແຕ່ພະແນກສຶກສາທິການ ແລະ ກິລາແຂວງເທົ່ານັ້ນ.

ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ສະໜອງປຶ້ມແບບຮຽນ-ຄູ່ມືຄູເຊັ່ນດຽວກັນ ໂດຍນຳໃຊ້ລັດວິສາຫະກິດໂຮງພິມສຶກສາ ແລະ ສາງກະຊວງສຶກສາທິການ. ພາຍໃຕ້ລະບົບດັ່ງກ່າວນີ້, ກົມຕ່າງໆທີ່ກ່ຽວຂ້ອງ ຈະເປັນຜູ້ກຳນົດຈຳນວນຄວາມຕ້ອງການປຶ້ມແບບຮຽນ-ຄູ່ມືຄູ ໂດຍນຳໃຊ້ຂໍ້ມູນຈາກສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ແລ້ວສົ່ງໃຫ້ພະແນກຄຸ້ມຄອງຊັບສິນ-ສະໜອງວັດສະດຸ/ກົມການເງິນ ເພື່ອສົ່ງບັນຊີຄວາມຕ້ອງການປຶ້ມດັ່ງກ່າວນັ້ນໄປໃຫ້ລັດວິສາຫະກິດໂຮງພິມສຶກສາເປັນຜູ້ຈັດພິມແລ້ວສົ່ງຕໍ່ໄປຍັງສາງກະຊວງສຶກສາທິການ, ຈາກນັ້ນ ສາງເປັນຜູ້ຂຶ້ນແຜນຈັດສົ່ງໄປຫາພະແນກສຶກສາທິການ ແລະ ກິລາແຂວງ (ສກຂ), ສກຂ ສົ່ງຕໍ່ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ), ສຸດທ້າຍຫ້ອງການ ສກມ ເປັນຜູ້ຈັດສົ່ງຕໍ່ໄປໃຫ້ແຕ່ລະໂຮງຮຽນປະຖົມ (ດັ່ງແຜນວາດລຸ່ມນີ້).




ໂຄງການທຳອິດ ທີ່ໃຫ້ການສະໜັບສະໜູນການແຈກຢາຍປື້ມແບບຮຽນ-ຄູ່ມືຄູສຳລັບຊັ້ນປະຖົມສຶກສາໃນທົ່ວປະເທດໃນກາງປີ 1990 ແມ່ນໂຄງການ EDP I. ນອກຈາກນີ້ ຍັງມີໂຄງການ BEGP, EQIP II ແລະ EDP II ຊຶ່ງໃນນັ້ນກະຊວງສຶກສາທິການ ແລະ ກິລາເອງ ກໍໄດ້ມີການພິມປື້ມແບບຮຽນທົດແທນຈຳນວນເຫຼັ້ມທີ່ຖືກເສຍຫາຍຕາມງົບປະມານທີ່ໄດ້ຮັບ ແຕ່ກໍຍັງມີບັນຫາການຂາດເຂີນປື້ມແບບຮຽນສືບຕໍ່ມາຈົນຮອດປັດຈຸບັນນີ້.

ພ້ອມດຽວກັນນີ້ ການທົບທວນຮ່ວມກັບຄູ່ຮ່ວມພັດທະນາຄັ້ງທຳອິດໃນເດືອນ ເມສາ ປີ 2011 ກໍ່ໄດ້ລາຍງານວ່າການຂາດເຂີນປື້ມແບບຮຽນ-ຄູ່ມືຄູ ກໍເປັນປັດໄຈໜຶ່ງທີ່ພາໃຫ້ຄຸນນະພາບຂອງການ

ສຶກສາຕ່ຳ. ອີງຕາມຂໍ້ຕົກລົງທີ 1 ຂອງບົດບັນທຶກຊ່ວຍຈຳກ່ຽວກັບການທົບທວນຮ່ວມກັນດັ່ງກ່າວໄດ້ມອບໝາຍໃຫ້ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ) ເຮັດການສຳຫຼວດການຂາດເຂີນປຶ້ມແບບຮຽນ-ຄູ່ມືຄູຄືນ. ດັ່ງນັ້ນ, ການສຳຫຼວດກ່ຽວກັບການຂາດເຂີນປຶ້ມແບບຮຽນ-ຄູ່ມືຄູດັ່ງກ່າວນີ້ ຈຶ່ງໄດ້ປະຕິບັດໃນເວລາດຽວກັນກັບການສຳຫຼວດ ແລະ ປະການເມີນຜົນແບບຮີບດ່ວນກ່ຽວກັບການປະລະການຮຽນຢູ່ໃນຊັ້ນປະຖົມສຶກສາຢູ່ໃນ 7 ແຂວງເປົ້າໝາຍ.

ການຄຸ້ມຄອງການແຈກຢາຍປຶ້ມແບບຮຽນ ແລະ ຄູ່ມືຄູ ນັບທັງຂະບວນການແຈກຢາຍເພື່ອຮັບປະກັນວ່າ ນັກຮຽນໄດ້ຮັບປຶ້ມແບບຮຽນຖືກຕ້ອງຕາມຈຳນວນທີ່ຕ້ອງການ ແລະ ຄູສອນກໍຕ້ອງໄດ້ຮັບປຶ້ມຄູ່ມືຄູຂອງຕົນຄົບຖ້ວນຕາມຈຳນວນທີ່ເໝາະສົມເຊັ່ນດຽວກັນ, ໃນນີ້ ຕ້ອງຮັບປະກັນໃຫ້ມີປຶ້ມແບບຮຽນ-ຄູ່ມືຄູທີ່ເກັບຮັກສາໄວ້ນັ້ນທົດແທນປຶ້ມທີ່ຖືກເສຍຫາຍໃນແຕ່ລະປີຢ່າງພຽງພໍ. ໃນການລົງໄປສຳຫຼວດຕົວຈິງຢູ່ພາກສະໜາມໃນຄັ້ງນີ້ ໄດ້ໃຫ້ຄວາມສຳຄັນກ່ຽວກັບການປະເມີນການຈັດຕັ້ງປະຕິບັດນະໂຍບາຍການສະໜອງປຶ້ມແບບຮຽນໃຫ້ນັກຮຽນຕາມຫ້າປະເດັນຕົ້ນຕໍຄືດັ່ງລຸ່ມນີ້:

1. ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປຶ້ມແບບຮຽນ-ຄູ່ມືຄູ,
2. ຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ,
3. ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ.
4. ການເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູ,
5. ການຄຸ້ມຄອງ ແລະ ການກວດກາ-ຕິດຕາມການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ

## 2. ຈຸດປະສົງຂອງການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນກ່ຽວກັບການແຈກຢາຍປຶ້ມແບບຮຽນ - ຄູ່ມືຄູ

ການສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນໃນຄັ້ງນີ້ ມີຈຸດປະສົງເພື່ອຊອກຫາສາເຫດທີ່ພາໃຫ້ເກີດມີການຂາດເຂີນປຶ້ມແບບຮຽນ-ຄູ່ມືຄູດັ່ງກ່າວຢູ່ໃນໂຮງຮຽນປະຖົມສຶກສາ ຊຶ່ງການຂາດເຂີນປຶ້ມແບບຮຽນ-ຄູ່ມືຄູດັ່ງກ່າວ ກໍເປັນປັດໄຈໜຶ່ງ ທີ່ພາໃຫ້ຄຸນນະພາບຂອງການສຶກສາຕ່ຳ ແລະ ເປັນສິ່ງທ້າທາຍຕົ້ນຕໍຕໍ່ການບັນລຸເປົ້າໝາຍ 2 ແລະ 3 ຂອງສະຫັດສະວັດດ້ານການພັດທະນາ.

## 3. ວິທີວິທະຍາຂອງການສຳຫຼວດ ແລະ ປະເມີນຜົນແບບຮີບດ່ວນ ກ່ຽວກັບການແຈກຢາຍປຶ້ມແບບຮຽນ - ຄູ່ມືຄູ

ການສຳຫຼວດກ່ຽວກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ແມ່ນໄດ້ໃຊ້ວິທີວິໄຈແບບຄຸນນະພາບໂດຍໄດ້ນຳໃຊ້ເຄື່ອງມືການສຳພາດແບບເຄິ່ງໂຄງສ້າງ ໃນການສຳພາດກຸ່ມເປົ້າໝາຍດຽວກັນກັບການສຳຫຼວດ ແລະ ປະການເມີນຜົນແບບຮີບດ່ວນ ກ່ຽວກັບການປະລະການຮຽນຢູ່ໃນຊັ້ນປະຖົມສຶກສາຢູ່ໃນ 7 ແຂວງເປົ້າໝາຍ.

ຄຳຖາມທີ່ກ່ຽວຂ້ອງກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ແມ່ນໄດ້ກຳນົດໄວ້ຢູ່ໃນແບບຟອມເຄື່ອງມືການສຳພາດຂອງແຕ່ລະກຸ່ມເປົ້າໝາຍດັ່ງກ່າວ ຊຶ່ງລາຍລະອຽດໃຫ້ເບິ່ງຢູ່ເອກະສານຊ້ອນທ້າຍ

ທີ 1. ສ່ວນເປົ້າໝາຍໂຮງຮຽນທີ່ທີມງານໄດ້ເຮັດການສໍາພາດນັ້ນຄັ້ງນີ້ ກໍແມ່ນເປົ້າໝາຍດຽວກັນກັບການສໍາຫຼວດ ແລະ ການປະເມີນແບບຮີບດ່ວນ ກ່ຽວກັບການປະລະການຮຽນໃນຊັ້ນປະຖົມສຶກສາ.

## 4. ຜົນຂອງການສໍາຫຼວດ ແລະ ປະເມີນຜົນແບບຮີບດ່ວນກ່ຽວກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ

### ກ. ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປຶ້ມແບບຮຽນ-ຄູ່ມືຄູ

ໃນສອງສົກຮຽນທີ່ຜ່ານມາ ການຈັດພິມປຶ້ມແບບຮຽນແມ່ນອີງໃສ່ແຜນຄວາມຕ້ອງການຂອງພະແນກສຶກສາທິການ ແລະ ກິລາແຂວງ ຊຶ່ງໄດ້ຮັບການສະໜັບສະໜູນຈາກໂຄງການຊ່ວຍເຫຼືອຕ່າງໆ. ແຕ່ວ່າໃນປະຈຸບັນ ກະຊວງສຶກສາທິການ ແລະ ກິລາ ໄດ້ມີການພິມປຶ້ມແບບຮຽນທົດແທນເພີ່ມເຕີມ ຕາມງົບປະມານຂອງລັດທີ່ມີ ໂດຍພິມຄໍາວ່າຫ້າມຂາຍໃສ່ໜ້າປົກ. ນອກຈາກນັ້ນ ລັດວິສາຫະກິດໂຮງພິມສຶກສາກໍຍັງໄດ້ພິມປຶ້ມແບບຮຽນຈໍານວນໜຶ່ງອອກຂາຍ ໃນທ້ອງຕະຫຼາດທົ່ວໄປຊຶ່ງມີຂໍ້ຄວາມພິມໄວ້ທາງຫຼັງປົກຂອງປຶ້ມດັ່ງກ່າວວ່າສະຫງວນລິຂະສິດເພື່ອຂາຍ.

ຍ້ອນການຈັດພິມປຶ້ມແບບຮຽນຕາມງົບປະມານຂອງລັດທີ່ມີຢ່າງຈໍາກັດ ຈຶ່ງເຮັດໃຫ້ຈໍານວນປຶ້ມທີ່ພິມແມ່ນບໍ່ພຽງພໍກັບຄວາມຕ້ອງການຂອງຈໍານວນນັກຮຽນ. ນອກນັ້ນ, ຍັງມີກໍລະນີປຶ້ມເຫຼືອໃນບາງເຂດແຕ່ບໍ່ພຽງພໍຢູ່ບ່ອນອື່ນ.

ໃນບາງກໍລະນີ ແຜນຄວາມຕ້ອງການປຶ້ມແບບຮຽນຂອງອໍານວຍການໂຮງຮຽນບໍ່ສອດຄ່ອງກັບຄວາມຕ້ອງການຕົວຈິງຂອງຈໍານວນນັກຮຽນ ຫຼື ສົ່ງແຜນຄວາມຕ້ອງການໃຫ້ຫ້ອງການ ສກມ ບໍ່ທັນກັບເວລາ. ດັ່ງນັ້ນ, ເພື່ອຢັ້ງຢືນຈໍານວນຕົວເລກຫຼ້າສຸດ ຫ້ອງການ ສກມ ຈຶ່ງໄດ້ຄາດຄະເນຈໍານວນປຶ້ມທີ່ຕ້ອງການໃຫ້ເລີຍ ເພາະວ່າຢ້ານກາຍກໍານົດເວລາສົ່ງແຜນຄວາມຕ້ອງການໃຫ້ພະແນກ ສກຂ. ການສໍາຫຼວດ ແລະ ການປະເມີນຜົນອັນຮີບດ່ວນໄດ້ສັງເກດເຫັນວ່າ ຮ່າງໃບສະເໜີຂໍປຶ້ມແບບຮຽນຂອງບາງໂຮງຮຽນມີຕົວເລກມົນໝົດ ເຊັ່ນ: 10, 20, 30. ນີ້ສະແດງໃຫ້ເຫັນວ່າ ຕົວເລກເຫລົ່ານັ້ນ ບໍ່ແມ່ນການຄິດໄລ່ຈາກສະພາບການຂາດປຶ້ມແບບຮຽນທີ່ແທ້ຈິງ, ບໍ່ແມ່ນການຄໍານວນຈໍານວນນັກຮຽນຕົວຈິງ, ບໍ່ໄດ້ກວດກາຈໍານວນປຶ້ມແບບຮຽນທີ່ມີຢູ່ແລ້ວ, ຈໍານວນປຶ້ມແບບຮຽນທີ່ໃຊ້ໄດ້ຢູ່, ແລະ ຈໍານວນປຶ້ມແບບຮຽນທີ່ຕ້ອງການໃໝ່. ກໍລະນີນີ້ພົບເຫັນຢູ່ທຸກໆແຂວງ ທີ່ໄດ້ລົງເກັບກໍາຂໍ້ມູນ.

ການລາຍງານຕົວເລກຄວາມຕ້ອງການປຶ້ມແບບຮຽນຈາກຫ້ອງການ ສກມ ບໍ່ຊັດເຈນ ຈຶ່ງເຮັດໃຫ້ກະຊວງສຶກສາທິການ ແລະ ກິລາ ຈັດສົ່ງປຶ້ມແບບຮຽນໃຫ້ບໍ່ຖືກຕ້ອງກັບຈໍານວນນັກຮຽນຕົວຈິງ. ປະເດັນນີ້ ກໍເປັນສາເຫດໜຶ່ງທີ່ພາໃຫ້ການແຈກຢາຍປຶ້ມແບບຮຽນ ບໍ່ຖືກຕ້ອງຕາມຄວາມການທີ່ວາງແຜນໄວ້ ສ່ວນໃຫຍ່ແມ່ນໜ້ອຍກວ່າຈໍານວນທີ່ຕ້ອງການ.

**ຂໍ້ແນະນໍາ:**

1. ກະຊວງສຶກສາທິການ ແລະ ກິລາ ຄວນສ້າງຖານຂໍ້ມູນກ່ຽວກັບຄວາມຕ້ອງການ ແລະ ການສະໜອງປຶ້ມແບບຮຽນ-ຄູ່ມືຄູ ເພື່ອໃຫ້ສາມາດໃຊ້ໃນການວາງແຜນໃນການຈັດພິມ ແລະ ການສະໜອງປຶ້ມດັ່ງກ່າວຕາມແຜນຄວາມຕ້ອງການ.

2. ຄວນມີລະບົບຂໍ້ມູນຂ່າວສານກ່ຽວກັບປຶ້ມແບບຮຽນ-ຄູ່ມືຄູ ໂດຍນຳໃຊ້ເຕັກໂນໂລຊີຂ່າວສານ (ອິນເຕີເນັດ) ໃນທຸກລະດັບຂອງການຄຸ້ມຄອງການສຶກສາ ເພື່ອໃຫ້ສາມາດຕິດຕາມກວດສອບຈຳນວນປຶ້ມແບບຮຽນ-ຄູ່ມືຄູໄດ້.

## ຂ. ຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ

ຂະບວນການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູ ແມ່ນອອກຈາກສາງຫຼັກ 3 ໄປຫາຫ້ອງການ ສກມ ໂດຍກົງ ທີ່ບໍ່ໄດ້ຜ່ານພະແນກ ສກຂ ຊຶ່ງມີພຽງແຕ່ເອກະສານລາຍງານການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູ ໃຫ້ພະແນກ ສກຂ ຈົ່ງກາເພື່ອຮັບຊາບ ແລະ ຢັ້ງຢືນນຳເທົ່ານັ້ນ. ຫຼັງຈາກນັ້ນ, ຫ້ອງການ ສກມ ກໍ່ແຈ້ງໃຫ້ໂຮງຮຽນມາຮັບເອົາປຶ້ມເອງ. ໃນບາງກໍລະນີ ກ່ອນອຳນວຍການໂຮງຮຽນປະຖົມໄປຮັບເອົາປຶ້ມຢູ່ຫ້ອງການ ສກມ ໄດ້ເອົາເງິນຈາກສະມາຄົມພໍ່ແມ່ນັກຮຽນໄປຈ່າຍຄ່າຂົນສົ່ງເພື່ອຮັບເອົາປຶ້ມແບບຮຽນ. ຖ້າວ່າຫ້ອງການ ສກມ ໃດເປັນເມືອງຂອງໂຄງການທີ່ມີແຜນຈະຈັດພິມປຶ້ມໃຫ້ ທາງໂຄງການຈະລົງໄປເອົາສະຖິຕິຈາກຫ້ອງການ ສກມ ນັ້ນ ນັບທັງການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູ ແຕ່ໂຮງພິມໄປຫາຫ້ອງການ ສກມ ດັ່ງກ່າວເລີຍ. ກ່ອນຈະຈັດສົ່ງປຶ້ມແບບຮຽນ ໂຮງພິມຈະຕິດລະຫັດໂຮງຮຽນ ແລະ ຊື່ປຶ້ມແບບຮຽນ-ຄູ່ມືຄູໃສ່ແກັດ. ບາງແກັດຕິດລະຫັດໂຮງຮຽນປະຖົມຜິດ ແລະ ຊື່ປຶ້ມແບບຮຽນ-ຄູ່ມືຄູບໍ່ຖືກ, ເຖິງວ່າບາງແກັດຈະຕິດຊື່ປຶ້ມແບບຮຽນ-ຄູ່ມືຄູຖືກຕ້ອງ ແຕ່ວ່າຈຳນວນປຶ້ມໃນແກັດພັດບໍ່ພໍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີສະພາບປຶ້ມແບບຮຽນ-ຄູ່ມືຄູເຫຼືອບໍ່ພໍຢູ່ໃນລະດັບໂຮງຮຽນ.

ໃນບາງກໍລະນີການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູຢູ່ຫ້ອງການ ສກມ ແມ່ນອີງຕາມວ່າໃຜມາກ່ອນໄດ້ກ່ອນ. ສະພາບການດັ່ງກ່າວ ເປັນປະກົດການທີ່ພົບເຫັນຢູ່ບາງໂຮງຮຽນປະຖົມທີ່ບໍ່ມີສະຖິຕິແບ່ງປັນຕາມຕົວເລກຕົວຈິງ. ບາງໂຮງຮຽນປະຖົມມາພົວພັນກັບຫ້ອງການ ສກມ ກ່ອນໝູ່ກໍ່ຈະໄດ້ປຶ້ມຈຳນວນຫລາຍກວ່າ ແລະ ເຮັດໃຫ້ປຶ້ມແບບຮຽນ-ຄູ່ມືຄູໝົດ. ສຳລັບອຳນວຍການໂຮງຮຽນປະຖົມໃດທີ່ມາຕາມຫລັງຈະໄດ້ໜ້ອຍກວ່າ ຫຼື ບໍ່ໄດ້ປຶ້ມແບບຮຽນ-ຄູ່ມືຄູເລີຍ ໃນກໍລະນີປຶ້ມແບບຮຽນ-ຄູ່ມືຄູດັ່ງກ່າວຫາກໝົດກ່ອນ.

ຈາກຜົນຂອງການສຳຫຼວດ ແລະ ປະເມີນຜົນແບບຮີບດ່ວນເຫັນວ່າ ບັນຫາທີ່ເກີດຂຶ້ນຫຼາຍກວ່າໝູ່ ແມ່ນການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູມີຄວາມຊັກຊ້າ ແລະ ຍັງບໍ່ທັນສົ່ງເຖິງໂຮງຮຽນເປົ້າໝາຍ ຫຼື ໄປເຖິງພາຍຫຼັງທີ່ໂຮງຮຽນໄດ້ເປີດສອນແລ້ວ. ນອກຈາກນີ້, ຂະບວນການຈັດພິມປຶ້ມແບບຮຽນ-ຄູ່ມືຄູຍັງຊັກຊ້າ ເພາະວ່າຜ່ານຫຼາຍຂະບວນການ.

**ຂໍ້ແນະນຳ:**

1. ພາກສ່ວນທີ່ກ່ຽວຂ້ອງໃນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ຄວນຈັດກອງປະຊຸມແລກປ່ຽນບົດຮຽນ ແລະ ມີການກຳນົດວິທີການກ່ຽວກັບການແຈກຢາຍໃຫ້ເປັນເອກະພາບ.
2. ການກະກຽມເພື່ອຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູ ໃຫ້ເຖິງໂຮງຮຽນປະຖົມເປົ້າໝາຍໂດຍຫຼີກລ້ຽງຄວາມຜິດພາດໃນເວລາແຈກຢາຍຢູ່ຂັ້ນເມືອງ ຜູ້ຮັບຜິດຊອບການຫຸ້ມຫໍ່ຢູ່ຂັ້ນສູນກາງຄວນໃສ່

ລະຫັດແຂວງ, ເມືອງ ແລະ ໂຮງຮຽນ ພ້ອມທັງນັບຈຳນວນໃນທຸກໆແກັດໃຫຍ່ ແລະ ຫໍ່ນ້ອຍໃຫ້ຖືກຕ້ອງ.

3. ເມື່ອປຶ້ມແບບຮຽນ-ຄູ່ມືຄູຖືກນຳສົ່ງເຖິງຫ້ອງການສຶກສາທິການ ແລະ ກິລາເມືອງແລ້ວ ຫ້ອງການ ສກມ ຕ້ອງກວດກາເບິ່ງຈຳນວນຊື່ປຶ້ມວ່າຖືກຕ້ອງຕາມເອກະສານໃບມອບຮັບນັ້ນ.
4. ການແບ່ງປັນປຶ້ມແບບຮຽນ-ຄູ່ມືຄູໃຫ້ໂຮງຮຽນນັ້ນ ຜູ້ຮັບຜິດຊອບການແຈກຢາຍປຶ້ມແບບຮຽນຢູ່ໃນຫ້ອງການ ສກມ ຄວນອີງໃສ່ຕົວເລກບັນຊີການແບ່ງປັນເປັນຫຼັກ ເພື່ອໃຫ້ການແຈກຢາຍນີ້ຖືກຕ້ອງຕາມແຜນການທີ່ໄດ້ຂຶ້ນໄວ້.
5. ຫ້ອງການ ສກມ ຕ້ອງຮັບປະກັນການຈັດສົ່ງປຶ້ມແບບຮຽນ-ຄູ່ມືຄູ ໄປເຖິງໂຮງຮຽນໃຫ້ທັນກັບເວລາທີ່ໄດ້ກຳນົດໄວ້.
6. ກະຊວງສຶກສາທິການ ແລະ ກິລາ ຄວນທົບທວນຄືນການຂຶ້ນແຜນງົບປະມານການພິມ, ການແຈກຢາຍ, ການຂົນສົ່ງປຶ້ມແບບຮຽນ-ຄູ່ມືຄູຈົນເຖິງໂຮງຮຽນ.

**ຄ. ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ**

ຄວາມເອົາໃຈໃສ່ຂອງຜູ້ບໍລິຫານການສຶກສາຂັ້ນເມືອງ ມີຜົນຕໍ່ການແຈກຢາຍປຶ້ມແບບຮຽນແກ່ນັກຮຽນ. ທີມງານສຳຫຼວດ ແລະ ການປະເມີນຜົນແບບຮີບດ່ວນ ໄດ້ສັງເກດຕີລາຄາສະພາບຄວາມເອົາໃຈໃສ່ຂອງຜູ້ບໍລິຫານຂັ້ນເມືອງ ຈາກການພົວພັນວຽກງານນຳບັນດາຫົວໜ້າຫ້ອງການ ສກມ ໂດຍຜ່ານການປະສານງານຂອງຫົວໜ້າຂະແໜງອະນຸບານ-ປະຖົມຂອງພະແນກ ສກຂ ລວມທັງບັນດາໂຮງຮຽນປະຖົມທີ່ກ່ຽວຂ້ອງເຫັນວ່າ ຖ້າຫາກຫົວໜ້າຫ້ອງການ ສກມ ໃດມີຫົວຄິດປະດິດສ້າງ, ບໍ່ລໍຖ້າຄຳສັ່ງຢ່າງດຽວ, ມີຄວາມກະຕືລືລົ້ນ ແລະ ມີຄວາມເປັນເຈົ້າການສູງ, ນັກຮຽນຢູ່ໂຮງຮຽນພາຍໃຕ້ຄວາມຮັບຜິດຊອບຂອງຕົນຈະມີປຶ້ມແບບຮຽນເກືອບຄົບ 1 ຊຸດຕໍ່ 1 ຄົນ. ກົງກັນຂ້າມ, ຖ້າຫາກວ່າຫົວໜ້າຫ້ອງການ ສກມ ໃດບໍ່ມີຫົວຄິດປະດິດສ້າງສູງ, ລໍຖ້າແຕ່ຄຳສັ່ງຈາກຂັ້ນເທິງ, ແລະ ຂາດຄວາມເປັນເຈົ້າການແລ້ວ ນັກຮຽນໃນໂຮງຮຽນປະຖົມຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຫ້ອງການ ສກມ ນັ້ນຈະຂາດເຂີນປຶ້ມແບບຮຽນຫລາຍ. ພະນັກງານວິຊາການຜູ້ທີ່ຮັບຜິດຊອບໃນຂັ້ນຫ້ອງການ ສກມ ບໍ່ໄດ້ລົງໄປຕິດຕາມກວດກາຄວາມຖືກຕ້ອງຂອງຈຳນວນປຶ້ມແບບຮຽນ-ຄູ່ມືຄູທີ່ມີຕົວຈິງ ຢູ່ຂັ້ນໂຮງຮຽນ ແລະ ບໍ່ໄດ້ສຶກສາເບິ່ງບັນຫາຂອງການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູຢູ່ໃນລະດັບໂຮງຮຽນ.

ໂຮງຮຽນປະຖົມສົມບູນ ເປັນຜູ້ຂຶ້ນແຜນຄວາມຕ້ອງການທາງດ້ານປຶ້ມແບບຮຽນ-ຄູ່ມືຄູ ໃຫ້ໂຮງຮຽນມູນລະປະຖົມທີ່ຂຶ້ນກັບ. ນອກຈາກນັ້ນ, ອຳນວຍການໂຮງຮຽນປະຖົມສົມບູນຍັງຖືເບົາຕໍ່ກັບການຂຶ້ນແຜນຄວາມຕ້ອງການປຶ້ມແບບຮຽນຕົວຈິງໃຫ້ໂຮງຮຽນມູນລະປະຖົມທີ່ຂຶ້ນກັບຕົນ ມີພຽງການຄາດຄະເນເອົາຈຳນວນນັກຮຽນ ແລະ ຈຳນວນປຶ້ມແບບຮຽນທີ່ຕ້ອງການ ໂດຍບໍ່ສອດຄ່ອງກັບຈຳນວນປຶ້ມແບບຮຽນທີ່ຕ້ອງການໃນຕົວຈິງ.

ບາງຫ້ອງການ ສກມ ແມ່ນມີຄວາມຫຍຸ້ງຍາກໃນການເກັບກຳຂໍ້ມູນຈາກໂຮງຮຽນປະຖົມເພື່ອມາຂຶ້ນແຜນຄວາມຕ້ອງການປຶ້ມແບບຮຽນ ໂດຍສະເພາະແມ່ນໂຮງຮຽນປະຖົມທີ່ຢູ່ໃນເຂດຊົນນະບົດ

ຫ່າງໄກສອກຫຼີກທີ່ບໍ່ມີເສັ້ນທາງເຂົ້າເຖິງ. ນອກຈາກນັ້ນ, ການເຄື່ອນຍ້າຍຂອງນັກຮຽນກໍມັກເກີດຂຶ້ນໃນລະຫວ່າງການເກັບກໍາຂໍ້ມູນເພື່ອວາງແຜນຄວາມຕ້ອງການປຶ້ມແບບຮຽນໃນແຕ່ລະປີ.

ອີກດ້ານໜຶ່ງ ພະນັກງານວິຊາການທີ່ຮັບຜິດຊອບການແຈກຢາຍປຶ້ມແບບຮຽນຢູ່ຂັ້ນຕ່າງໆໃນທ້ອງຖິ່ນ ບໍ່ເຄີຍໄດ້ຮັບການຝຶກອົບຮົມ ແລະ ບໍ່ເຂົ້າໃຈກ່ຽວກັບນະໂຍບາຍການແຈກຢາຍປຶ້ມແບບຮຽນໃຫ້ນັກຮຽນຕາມຄາດໝາຍ 1 ຄົນ ຕໍ່ 1 ຊຸດ ຊຶ່ງໃນນີ້ ລວມທັງຄວາມສາມາດໃນການເກັບກໍາຂໍ້ມູນຈໍານວນນັກຮຽນເພື່ອວາງແຜນກ່ຽວກັບ ຄວາມຕ້ອງການປຶ້ມແບບຮຽນ ແລະ ການຄຸ້ມຄອງການຄຸ້ມຄອງປຶ້ມແບບຮຽນ.

ອໍານວຍການໂຮງຮຽນ ແລະ ຄູ ຍັງຂາດທັກສະໃນການການເກັບກໍາຂໍ້ມູນ ເພື່ອຂຶ້ນແຜນຄວາມຕ້ອງການປຶ້ມແບບຮຽນ. ນອກຈາກນັ້ນ, ຍັງບໍ່ເຂົ້າໃຈລະບົບການສ້າງ ແລະ ສົ່ງແຜນຄວາມຕ້ອງການປຶ້ມແບບຮຽນ ແລະ ການຄຸ້ມຄອງປຶ້ມແບບຮຽນ ເນື່ອງຈາກວ່າພວກເຂົາເຈົ້າບໍ່ໄດ້ຮັບການຝຶກອົບຮົມໃນເລື່ອງດັ່ງກ່າວ. ສະນັ້ນ, ຈຶ່ງມີປະກົດການບາງໂຮງຮຽນສົ່ງແຜນຄວາມຕ້ອງການປຶ້ມແບບຮຽນໃນຕອນທ້າຍສົກຮຽນ ແລະ ບາງໂຮງຮຽນປະຖົມແມ່ນສົ່ງຕົ້ນສົກຮຽນ.

**ຂໍ້ແນະນໍາ**

1. ຄວນຝຶກອົບຮົມໃຫ້ແກ່ພະນັກງານທີ່ຮັບຜິດຊອບການແຈກຢາຍປຶ້ມແບບຮຽນ ໃນຂັ້ນທ້ອງຖິ່ນ (ພະນັກງານຫ້ອງການ ສກມ ແລະ ອໍານວຍການໂຮງຮຽນປະຖົມ) ກ່ຽວກັບນະໂຍບາຍການແຈກຢາຍປຶ້ມແບບຮຽນ, ການເກັບກໍາຂໍ້ມູນ, ການວາງແຜນຄວາມຕ້ອງການ, ແລະ ການຄຸ້ມຄອງປຶ້ມແບບຮຽນ-ຄູ່ມືຄູ.
2. ພະນັກງານພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຄວນລົງໄປກວດກາຄວາມຖືກຕ້ອງຂອງຈໍານວນປຶ້ມແບບຮຽນຢູ່ໃນຂັ້ນໂຮງຮຽນ, ພ້ອມທັງເກັບກໍາສະພາບບັນຫາຕ່າງໆກ່ຽວກັບການແຈກຢາຍປຶ້ມແບບຮຽນ ເພື່ອຮັບປະກັນການສະໜອງປຶ້ມແບບຮຽນໃຫ້ພຽງພໍຕາມນະໂຍບາຍ.
3. ອໍານວຍການໂຮງຮຽນປະຖົມສົມບູນ ຄວນເອົາໃຈໃສ່ຕໍ່ກັບການຂຶ້ນແຜນຄວາມຕ້ອງການປຶ້ມແບບຮຽນໃນຕົວຈິງໃຫ້ໂຮງຮຽນມູນລະປະຖົມ ທີ່ຂຶ້ນກັບຕົນດ້ວຍຄວາມຮັບຜິດຊອບສູງເພື່ອຫຼີກລ້ຽງບັນຫາການຂາດເຂີນປຶ້ມແບບຮຽນໃນໂຮງຮຽນມູນລະປະຖົມ.

## ໗. ການເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູ

ລະບົບການເກັບມ້ຽນ ແລະ ສາງເກັບມ້ຽນປຶ້ມແບບຮຽນ-ຄູ່ມືຄູສະເພາະຍັງບໍ່ທັນມີ. ເນື່ອງຈາກວ່າຫ້ອງການສຶກສາທິການ ແລະ ກິລາເມືອງຄັບແຄບ. ທີມງານການສໍາຫຼວດ ແລະ ການປະເມີນຜົນແບບຮີບດ່ວນໄດ້ສັງເກດເຫັນວ່າ ສ່ວນຫຼາຍປຶ້ມແບບຮຽນແມ່ນເກັບຮັກສາໄວ້ຕາມລະບຽງ, ຫຼື ພື້ນຫ້ອງທີ່ມີຄວາມຊຶ້ນ. ນອກນັ້ນ, ບັນຊີເຊັນຮັບ-ຈ່າຍປຶ້ມແບບຮຽນ ຍັງບໍ່ຈະແຈ້ງ ແລະ ບໍ່ສາມາດກວດກາໄດ້.

ຢູ່ໂຮງຮຽນສ່ວນຫຼາຍ ຍັງບໍ່ມີສະຖານທີ່ເກັບມ້ຽນ ໂດຍສະເພາະແມ່ນໂຮງຮຽນທີ່ຍັງບໍ່ຖາວອນ, ບໍ່ມີຕູ້ເກັບມ້ຽນ, ຫ້ອງຮຽນບໍ່ສາມາດເກັບມ້ຽນປື້ມແບບຮຽນໄດ້ ຈຶ່ງເອົາໄປມ້ຽນໄວ້ໃນຫ້ອງນ້ຳ, ບາງໂຮງຮຽນປະຖົມເກັບມ້ຽນໄວ້ເຮືອນນາຍບ້ານ, ເຮືອນຄູ, ຫຼື ວາງນຳພື້ນຫ້ອງການອຳນວຍການໂຮງຮຽນເຮັດໃຫ້ປື້ມເສຍຫາຍ, ຖືກປວກກັດ, ຖືກທຳລາຍ ຫລື ອາຍຸການນຳໃຊ້ບໍ່ໄດ້ດົນ.

ມີບາງອຳນວຍການໂຮງຮຽນ ໄດ້ຮັກສາປື້ມແບບຮຽນໄວ້ເປັນຈຳນວນຫຼາຍກວ່າການນຳເອົາມາໃຊ້ສຳລັບການຈັດການຮຽນ-ການສອນ ແລະ ນັກຮຽນກໍ່ບໍ່ໄດ້ໃຊ້ປື້ມແບບຮຽນຢ່າງພຽງພໍໃນເວລາຮຽນ ແລະ ຢູ່ບ້ານ ເນື່ອງຈາກວ່າອຳນວຍການໂຮງຮຽນປະຖົມຢ້ານປື້ມເປິເປື້ອນ ແລະ ເສຍຫາຍ. ບັນຫານີ້, ມັນສະແດງເຖິງຄວາມບໍ່ເຂົ້າໃຈເຖິງຄຸນປະໂຫຍດຂອງການນຳໃຊ້ປື້ມແບບຮຽນ ແລະ ບໍ່ມີຄວາມຮັບຜິດຊອບຕໍ່ຄຸນນະພາບຂອງການຮຽນ-ການສອນ.

**ຂໍ້ແນະນຳ**

1. ກະຊວງສຶກສາທິການ ແລະ ກິລາ ຄວນສະໜອງງົບປະມານການປຸກສ້າງສາງເກັບປື້ມແບບຮຽນໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຫ້ອງເກັບມ້ຽນປື້ມແບບຮຽນ ຫຼື ຫ້ອງສະໝຸດໃຫ້ໂຮງຮຽນປະຖົມ.
2. ຄວນຈັດຝຶກອົບຮົມໃຫ້ຄູສອນໃນໂຮງຮຽນປະຖົມກ່ຽວກັບຄວາມສຳຄັນ ແລະ ວິທີປົກປັກຮັກສາປື້ມແບບຮຽນ.

**ຈ. ການຄຸ້ມຄອງ ແລະ ການກວດກາຕິດຕາມການແຈກຢາຍປື້ມແບບຮຽນ-ຄູ່ມືຄູ**

ຍັງມີບາງຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ມີການເກັບຄ່າທຳນຽມປື້ມແບບຮຽນນຳໂຮງຮຽນ, ໃນກໍລະນີບາງໂຮງຮຽນປະຖົມບໍ່ມີຄວາມສາມາດຈ່າຍຄ່າທຳນຽມປື້ມແບບຮຽນກໍ່ເຮັດໃຫ້ປື້ມແບບຮຽນບໍ່ພຽງພໍ. ຕົວຢ່າງ: ມີບາງເມືອງໄດ້ວາງລະບຽບໄວ້ວ່າຖ້າໂຮງຮຽນປະຖົມບໍ່ມີເງິນມາຈ່າຍຄ່າທຳນຽມປື້ມແບບຮຽນ 2,000-4,000 ກີບ ຕໍ່ປື້ມແບບຮຽນໜຶ່ງຊຸດແລ້ວ ຫ້ອງການ ສກມ ຈະບໍ່ອະນຸຍາດໃຫ້ເອົາປື້ມແບບຮຽນໄປໂຮງຮຽນປະຖົມ. ໃນບາງກໍລະນີໂຮງຮຽນປະຖົມຕ້ອງໄດ້ເອົາປື້ມແບບຮຽນໄປກ່ອນແລ້ວເອົາເງິນມາຈ່າຍຕາມຫຼັງ, ແຕ່ໃນບາງກໍລະນີ ໂຮງຮຽນປະຖົມພັດເກັບເງິນນຳນັກຮຽນກ່ອນເພື່ອໄປຈ່າຍຄ່າທຳນຽມປື້ມແບບຮຽນໃຫ້ ຫ້ອງການ ສກມ. ສຳລັບການກຳນົດການເກັບຄ່າທຳນຽມທີ່ກ່າວມານັ້ນ ແມ່ນຫ້ອງການ ສກມ ເປັນຜູ້ຕົກລົງເຫັນດີກັບອຳນາດການປົກຄອງທ້ອງຖິ່ນ (ຄພສບ). ສະພາບການດັ່ງກ່າວນີ້ ແມ່ນພົບເຫັນຢູ່ບາງເມືອງຂອງກຸ່ມເປົ້າໝາຍທີ່ລົງໄປເກັບກຳຂໍ້ມູນ. ໃນການຈັດຕັ້ງປະຕິບັດຕົວຈິງຍັງມີຫຼາຍໂຮງຮຽນປະຖົມທີ່ມີການເກັບຄ່າເຊົ່າປື້ມແບບຮຽນທີ່ແຕກຕ່າງກັນຕັ້ງແຕ່ 1,000-3,000 ກີບ ຕໍ່ເຫຼັ້ມ ແລະ 5,000 ກີບ ຕໍ່ຊຸດ, ກໍລະນີນັກຮຽນເຮັດປື້ມແບບຮຽນເສຍ ຫຼື ຂາດແມ່ນໄດ້ຊື້ແທນ ຫຼື ໃຊ້ເງິນໃນຈຳນວນທີ່ແຕກຕ່າງກັນຄືຕັ້ງແຕ່ 15,000-30,000 ກີບ ຕໍ່ເຫຼັ້ມ. ນອກຈາກນີ້, ຍັງມີປະກົດການທີ່ຜູ້ປົກຄອງນັກຮຽນໃຫ້ລູກເອົາປື້ມແບບຮຽນມາສົ່ງຄືນຫຼັງຈາກໂຮງຮຽນປະກາດໃຫ້ເອົາເງິນມາຈ່າຍຄ່າເຊົ່າປື້ມແບບຮຽນດັ່ງກ່າວ.

ສະພາບການທີ່ກ່າວມາຂ້າງເທິງນີ້ ເປັນສາເຫດທີ່ພາໃຫ້ເກີດມີການຂາດເຂີນປຶ້ມແບບຮຽນຢູ່ໃນລະດັບໂຮງຮຽນ ແລະ ບາງໂຮງຮຽນປະຖົມບໍ່ມີປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູເລີຍ. ຂໍ້ກຳນົດທີ່ໃຫ້ນັກຮຽນແຕ່ລະຄົນຕ້ອງໄດ້ຈ່າຍຄ່າເຊົ່າປຶ້ມແບບຮຽນ ໄດ້ສ້າງບັນຫາໃຫ້ແກ່ເດັກທີ່ຢູ່ໃນຄອບຄົວທີ່ທຸກຍາກບໍ່ມີປຶ້ມແບບຮຽນສຳລັບການຄົ້ນຄວ້າຮ່ຳຮຽນໃນໂຮງຮຽນ ແລະ ຢູ່ບ້ານ.

ທີມງານການສຳຫຼວດ ແລະ ການປະເມີນຜົນອັນຮີບດ່ວນໄດ້ຖາມກ່ຽວກັບບັນທຶກການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູໃນສົກຮຽນທີ່ຜ່ານມາ ເຫັນວ່າບໍ່ມີຂໍ້ມູນກ່ຽວກັບ ການຈັດຮັບ ແລະ ແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ. ຍັງບໍ່ມີກົນໄກໃນການກວດກາການແຈກຢາຍປຶ້ມແບບຮຽນຕັ້ງແຕ່ຂັ້ນກະຊວງສຶກສາທິການ ແລະ ກິລາ ລົງຮອດຂັ້ນໂຮງຮຽນ. ນອກຈາກນັ້ນ, ພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ຂາດການຕິດຕາມຂໍ້ມູນກ່ຽວກັບການແຈກຢາຍປຶ້ມຂອງຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ). ມີພຽງແຕ່ໄດ້ຮັບການລາຍງານ ການແຈກຢາຍປຶ້ມແບບຮຽນຈາກຫ້ອງການ ສກມ ເທົ່ານັ້ນ ແຕ່ບໍ່ມີການໄປກວດກາຈຳນວນປຶ້ມແບບຮຽນຕົວຈິງທີ່ເມືອງໄດ້ຮັບ ແລະ ສົ່ງໄປໃຫ້ໂຮງຮຽນປະຖົມ. ຍ້ອນຂາດການຕິດຕາມ ແລະ ການບັນທຶກການແຈກຢາຍປຶ້ມແບບຮຽນໃຫ້ແຕ່ລະ ສກມ ແລະ ໂຮງຮຽນຢ່າງທົ່ວເຖິງເຮັດໃຫ້ ສກຂ ບໍ່ຮູ້ສະພາບການຂາດເຂີນປຶ້ມແບບຮຽນທີ່ແທ້ຈິງ.

**ຂໍ້ແນະນຳ**

1. ຄວນສ້າງລະບົບການຕິດຕາມການຄຸ້ມຄອງປຶ້ມແບບຮຽນ-ຄູ່ມືຄູ ແລະ ມອບໃຫ້ກົມການເງິນສົມທົບກັບກົມກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ດຳເນີນການກວດກາຕິດຕາມການຄຸ້ມຄອງ ແລະ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ເປັນຈຸດຢູ່ໃນທຸກລະດັບຕັ້ງແຕ່ໂຮງພິມ ແລະ ສາງໄປຫາໂຮງຮຽນປະຖົມສົມບູນ ແລະ ໂຮງຮຽນມູນລະປະຖົມ.
2. ພະແນກສຶກສາທິການ ແລະ ກິລາແຂວງ ຄວນນຳໃຊ້ຂະແໜງກວດກາ ແລະ ປະເມີນຜົນ ເພື່ອຕິດຕາມ ແລະ ກວດກາ ຄວາມຖືກຕ້ອງຂອງຈຳນວນປຶ້ມແບບຮຽນຮ່ວມກັບຫ້ອງການ ສກມ ທຸກໆຄັ້ງທີ່ມີການຈັດສົ່ງປຶ້ມແບບຮຽນເພື່ອຮັບປະກັນໃຫ້ປຶ້ມແບບຮຽນໄປເຖິງໂຮງຮຽນ.
3. ກະຊວງສຶກສາທິການ ແລະ ກິລາ ຄວນທົບທວນຄືນກ່ຽວກັບການເກັບຄ່າທຳນຽມເຊົ່າປຶ້ມແບບຮຽນໃນໂຮງຮຽນປະຖົມສຶກສາ.

## 5. ແຜນປະຕິບັດງານກ່ຽວກັບການແຈກຢາຍປຶ້ມແບບຮຽນ - ຄູ່ມືຄູ

### ກ. ຄວາມສອດຄ່ອງລະຫວ່າງຄວາມຕ້ອງການ ແລະ ການສະໜອງປຶ້ມແບບຮຽນ-ຄູ່ມືຄູ

ໜ່ວຍງານວິຊາການຂອງຂະແໜງການສຶກສາ (ESWG) ຄວນສະໜັບສະໜູນຊຸກຍູ້ກະຊວງການເງິນໃຫ້ມີສ່ວນຮ່ວມໃນການເພີ່ມງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ເພື່ອຮັບປະກັນການພິມປຶ້ມແບບຮຽນໃຫ້ພຽງພໍຕາມຄວາມຕ້ອງການຂອງໂຮງຮຽນປະຖົມໃນແຕ່ລະປີ. ນອກຈາກນັ້ນ ກົມການເງິນກໍຄວນເປັນເຈົ້າການໃນການປັບປຸງ ແລະ ສ້າງຄູ່ມືທີ່ຈຳເປັນໃນການແນະນຳວິທີການຂຶ້ນແຜນງົບປະມານໃນການຈັດພິມ, ການແຈກຢາຍ, ການຈັດພິມທົດແທນປຶ້ມແບບຮຽນ-ຄູ່ມືຄູ ໃຫ້ເປັນລະບົບ

ແລະ ສອດຄ່ອງກັນລະຫວ່າງແຜນຄວາມຕ້ອງການ ແລະ ການສະໜອງງົບປະມານການຈັດພິມປຶ້ມດັ່ງກ່າວໃຫ້ພຽງພໍ.

ກົມການເງິນ, ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຄວນລິເລີ່ມສ້າງລະບົບຖານຂໍ້ມູນກ່ຽວກັບຄວາມຕ້ອງການ ແລະ ການສະໜອງປຶ້ມແບບຮຽນ-ຄູ່ມືຄູ ໃຫ້ສອດຄ່ອງກັບຄວາມຕ້ອງການປຶ້ມແບບຮຽນ-ຄູ່ມືຄູຕົວຈິງຢູ່ໃນຂັ້ນໂຮງຮຽນ. ລະບົບດັ່ງກ່າວຕ້ອງມີຂັ້ນຕອນຂະບວນການຢ່າງຊັດເຈນ, ມີປະສິດທິພາບ ແລະ ສາມາດຕິດຕາມກວດກາໄດ້.

## ຂ. ຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ

ເພື່ອປັບປຸງຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ກົມການເງິນຄວນສຶກສາເບິ່ງນິຕິກຳຕ່າງໆທີ່ອອກມາກ່ອນໜ້າແລ້ວນັ້ນຄືນ ໂດຍຈັດໃຫ້ມີກອງປະຊຸມປຶກສາຫາລືທົບທວນຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແລກປ່ຽນຖອດຖອນບົດຮຽນອັນດີ ແລະ ເສີມສ້າງຄວາມສຳຄັນໃນການປະສານງານກັບຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ຂອງພາກສ່ວນຕ່າງໆທີ່ມີຢູ່ແລ້ວນັ້ນ.

ສຶກສາເບິ່ງລາຍງານ ສະພາບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ຂອງຫ້ອງການສຶກສາທິການແລະກິລາເມືອງ ແລະ ພະແນກສຶກສາທິການແລະກິລາແຂວງ ບ່ອນທີ່ມີຜົນສຳເລັດໃນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ມາກ່ອນໜ້າແລ້ວນັ້ນ.

ປັບປຸງຂະບວນການແບ່ງປັນປຶ້ມແບບຮຽນ-ຄູ່ມືຄູ, ການຫຸ້ມຫໍ່ ແລະ ການໃສ່ລະຫັດແກັດທີ່ຈະຈັດສົ່ງໄປໃຫ້ໂຮງຮຽນປະຖົມໂດຍກົງ ແລະ ເພີ່ມຄວາມເອົາໃຈໃສ່ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ ກ່ຽວກັບການປັບປຸງຂັ້ນຕອນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃຫ້ໄປຮອດໂຮງຮຽນຕາມເວລາທີ່ກຳນົດໄວ້.

ກົມການເງິນ ຕ້ອງຈັດສັນງົບປະມານບໍລິຫານໃຫ້ພຽງພໍເພື່ອໃຊ້ຈ່າຍໃນຂະບວນການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ ໄປຫາໂຮງຮຽນໂດຍບໍ່ໃຫ້ໂຮງຮຽນມາຮັບເອົາປຶ້ມດ້ວຍຕົນເອງ.

## ຄ. ຄວາມຮັບຜິດຊອບ ແລະ ຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາຂັ້ນທ້ອງຖິ່ນ

ຜູ້ບໍລິຫານການສຶກສາຂັ້ນແຂວງ ແລະ ເມືອງ ຕ້ອງເພີ່ມຄວາມຮັບຜິດຊອບຂອງຕົນຕໍ່ໜ້າທີ່ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃຫ້ບັນດາໂຮງຮຽນປະຖົມຕ່າງໆທີ່ຂຶ້ນກັບຕົນ ແນໃສ່ຄາດໝາຍໃຫ້ນັກຮຽນໄດ້ຮັບປຶ້ມແບບຮຽນ 1 ຊຸດຕໍ່ 1 ຄົນ ເທື່ອລະກ້າວ. ນອກຈາກນັ້ນ, ອຳນວຍການໂຮງຮຽນປະຖົມສົມບູນ ກໍຄວນຂຶ້ນແຜນຄວາມຕ້ອງການປຶ້ມແບບຮຽນ-ຄູ່ມືຄູ ໃຫ້ໂຮງຮຽນມູນລະປະຖົມທີ່ຂຶ້ນກັບຕົນຢ່າງຄົບຖ້ວນ.

ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການ ທີ່ຮັບຜິດຊອບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ຢູ່ໃນຂັ້ນທ້ອງຖິ່ນ ໂດຍຈັດການຝຶກອົບຮົມກ່ຽວກັບການວາງແຜນ ແລະ ການຄຸ້ມຄອງການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູໃຫ້ຕໍ່ເນື່ອງ ແລະ ທົ່ວເຖິງ.

ພະນັກງານວິຊາການທີ່ຮັບຜິດຊອບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູຢູ່ໃນຂັ້ນເມືອງ ຄວນຝຶກອົບຮົມໃຫ້ອຳນວຍການໂຮງຮຽນປະຖົມ ແລະ ຄູສອນ ໃຫ້ຮູ້ທັກສະໃນການການເກັບກຳຂໍ້ມູນປຶ້ມແບບຮຽນ-ຄູ່ມືຄູ ເພື່ອສາມາດຂຶ້ນແຜນຄວາມຕ້ອງການຢ່າງເປັນລະບົບຄົບຊຸດ ແລະ ທັນການໃນແຕ່ລະສົກຮຽນ.

ຝຶກອົບຮົມອຳນວຍການໂຮງຮຽນປະຖົມກ່ຽວກັບການຄຸ້ມຄອງປຶ້ມແບບຮຽນ-ຄູ່ມືຄູ, ການນຳໃຊ້ເງິນບໍລິຫານໂຮງຮຽນ ແລະ ມາດຕະຖານຕໍ່າສຸດຂອງໂຮງຮຽນຄຸນນະພາບ ເພື່ອໃຫ້ເຂົາເຈົ້າມີຄວາມຮັບຜິດຊອບ ແລະ ມີຄວາມຮູ້ຄວາມສາມາດປະຕິບັດນະໂຍບາຍແຫ່ງຊາດກ່ຽວກັບການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ ໃຫ້ໂຮງຮຽນຕ່າງໆທີ່ຢູ່ໃນຄວາມຄຸ້ມຄອງບໍລິຫານຂອງຕົນ ໂດຍສະເພາະແມ່ນໂຮງຮຽນມູນລະປະຖົມສຶກສາ.

## ໑. ການເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູ

ສ້າງຄູ່ມືກ່ຽວກັບການເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູ ໃຫ້ແກ່ອຳນວຍການໂຮງຮຽນປະຖົມ, ຄູ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ).

ກົມການເງິນ ແລະ ສາງຫຼັກ 3 ຄວນສ້າງແຜນໃນການຝຶກອົບຮົມວິທີການເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູດັ່ງກ່າວ ໃຫ້ໂຮງຮຽນ ແລະ ຄພສບ.

ກົມອະນຸບານ ແລະ ປະຖົມສຶກສາ ຄວນອອກຄຳສັ່ງແນະນຳຫ້າມບໍ່ໃຫ້ເກັບຄ່າທຳນຽມເຊົ່າປຶ້ມແບບຮຽນ ແຕ່ອະນຸຍາດໃຫ້ໂຮງຮຽນ ແລະ ຄພສບ ຕົກລົງກັນຢ່າງເໝາະສົມເພື່ອສ້າງລະບຽບການມັດຈຳເງິນຄ່າຢືມປຶ້ມແບບຮຽນໄປໃຊ້ຢູ່ເຮືອນຂອງນັກຮຽນ ໂດຍຜ່ານການອະນຸມັດເຫັນດີຈາກພະແນກ ສກຂ ແລະ ຫ້ອງການ ສກມ. ນອກນັ້ນ ຄວນມີວິທີການປະສານງານກັນລະຫວ່າງ ບ້ານ ແລະ ໂຮງຮຽນປະຖົມ ໃນການສ້າງບ່ອນເກັບຮັກສາກ່ອງໃສ່ປຶ້ມແບບຮຽນ ແລະ ຕູ້ໃສ່ປຶ້ມແບບຮຽນໃນໂຮງຮຽນ.

ຄວນປັບປຸງລະບົບສາງເກັບຮັກສາປຶ້ມແບບຮຽນ-ຄູ່ມືຄູ ຢູ່ ຫ້ອງການ ສກມ ແລະ ໂຮງຮຽນປະຖົມ.

## ຈ. ການຄຸ້ມຄອງ ແລະ ການກວດກາຕິດຕາມ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູ

ກົມການເງິນ ຕ້ອງສົມທົບກັບກົມກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການກວດກາ-ຕິດຕາມການຄຸ້ມຄອງ ແລະ ການແຈກຢາຍປຶ້ມແບບຮຽນ-ຄູ່ມືຄູປະຈຳປີຂອງໂຮງຮຽນປະຖົມໂດຍຜ່ານການຄຸ້ມຄອງກວດກາຕິດຕາມຮ່ວມກັນລະຫວ່າງ ພະແນກ ສກຂ ແລະ ຫ້ອງການ ສກມ. ການ

ກວດກາຕິດຕາມດັ່ງກ່າວ ຄວນເນັ້ນໃສ່ຕິດຕາມການຈັດຕັ້ງປະຕິບັດຄຳສັ່ງແນະນຳຕ່າງໆທີ່ກ່ຽວກັບການເກັບຄ່າທຳນຽມເຊົ່າປຶ້ມແບບຮຽນ.

ຈັດການຝຶກອົບຮົມໃຫ້ຄະນະພັດທະນາການສຶກສາຂັ້ນບ້ານຮູ້ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປຶ້ມແບບຮຽນໃນໂຮງຮຽນເພື່ອຊ່ວຍກວດກາຕິດຕາມ ແລະ ຊຸກຍູ້ການນຳໃຊ້ປຶ້ມແບບຮຽນຂອງເດັກໃນໂຮງຮຽນປະຖົມຢ່າງມີຄວາມຮັບຜິດຊອບຮ່ວມກັນກັບຄູສອນ ແລະ ອຳນວຍການໂຮງຮຽນ.

## ເອກະສານອ້າງອີງ


ປື້ມຄູ່ມືຕົວຊີ້ບອກຂອງການສຶກສາ ໂດຍ ທ່ານ ສົມຂັນ ດິດາຣາວົງ ຜູ້ອຳນວຍການ ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ, ກະຊວງສຶກສາທິການ ແລະ ກິລາ. ພຶດສະພາ 2008.

Asian Development Bank (ADB), (2008), ’Education and Skills: Strategies for Accelerated Learning in the Asia Pacific’.

Batbaatar, M., Bold, T., Marshall, J., Oyuntsetseg, D., Tamir, C. and Tumennast, G. (2006), ‘Children on the move: rural-urban migration and access to education in Mongolia’, CHIP Report No. 17. Save the Children UK/CHIP.

Brock, C. and Cammish, N. (1997), ‘Factors Affecting Female Participation in Education in Seven Developing Countries’, Education Research Paper No 9. London: DFID.

Brown, P. and Park, A. (2002), ‘Educationandpoverty in rural China’, Economics of Education Review, 21(6): 523-541.

Chandrasekhar, S. & A. Mukhopadhyay, (2006), ‘Primary Education as a Fundamental Right: Cost Implications’, Economic and Political Weekly, pp-3797-3804, September.

Chimombo, Joseph, (2009), ‘Changing Patterns of Access to Basic Education in Malawi: A Story of a Mixed Bag?’ in: Comparative Education, v45 n2 p297-312 May 2009. 16 pp.

Colclough, C., Rose, P. and Tembon, M. (2000), ‘Gender inequalities in primary schooling: the roles of poverty and adverse cultural practice’, International Journal of Educational Development, 20: 5–27.

Colclough, C. 1996. Education and the market: Which part of the neoliberal solution is correct? World Development 24, no. 4: 589–610.

Glick, P. and Sahn, D.E. (2000), ‘Schooling of girls and boys in a West African country: the effects of parental education, income, and household structure’, Economics of Education Review, 19: 63–87.

Hunt, F. (2008), ‘Dropping Out from School: A Cross Country Review of Literature’, Consortium for Research on Educational Access, Transitions and Equity, Research Monograph No 16.

Kadzamira, E. and Rose, P. (2003) Can free primary education meet the needs of the poor? Evidence from Malawi. International Journal of Educational Development, 23: 501-516.

Kane, E. (2004), 'Girls' Education in Africa: What Do We Know About Strategies That Work?' Washington DC: World Bank.

Lewin,K (2007) 'Improving Access, Equity and Transitions in Education: Creating a Research Agenda', *CREATE Pathways to Access Research Monograph No.1,* University of Sussex, p. 6.

Philippine Institute for Development Studies, (2008), 'Measures for Assessing Basic Education in the Philippines', Discussion Paper Series No. 2008–1.

Somerset, A. (2007), 'A Preliminary Note on Kenya Primary School Enrolment Trends over Four Decades', Consortium for Research on Educational Access, Transitions and Equity, Research Monograph No. 9.

UNESCO Institute for Statistics (UIS) and UNICEF (co-produced), 'Children out of school: measuring exclusion from primary education', Montreal, 2005, pp. 26 & 28.

## ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍທີ 1 - ແບບຟອມສຳພາດ

## ຂໍ້ແນະນຳໃນການສຳພາດພະນັກງານສຶກສາແຂວງ - ຈັດເປັນກຸ່ມ

| **ແຂວງ** | **ຊື່ ແລະ ຕຳແໜ່ງຂອງຜູ້ໃຫ້ຂໍ້ມູນ** |
|---|---|
| ພາກສະເໜີ | 1. ກ່າວຂອບໃຈຜູ້ທີ່ທ່ານຈະສຳພາດ 2. ແນະນຳຕົນເອງ<br>3. ລົມກັນຫຼິ້ນ 4. ກ່າວຈຸດປະສົງ |
| **1. ຄວາມເຂົ້າໃຈກ່ຽວກັບຂໍ້ມູນ**<br>(ກ). ຂໍໃຫ້ທ່ານເຫຼົ່າໃຫ້ຂ້າພະເຈົ້າຟັງກ່ຽວກັບ ຈຳນວນນັກຮຽນທີ່ປະລະການຮຽນ ຫຼື (ອອກໂຮງຮຽນ) ມີການປ່ຽນແປງຫຼືບໍ?<br>(ຂ) ທ່ານເຫັນວ່າປ່ຽນແປງດັ່ງກ່າວນັ້ນ ເປັນແນວໃດ? ມີຄວາມແຕກຕ່າງກັນ ໃນແຕ່ລະບ້ານ, ແລະ ອື່ນໆບໍ? | ມີການປ່ຽນແປງ ☐<br>ບໍ່ມີການປ່ຽນແປງ ☐<br>ມີຕວາມແຕກຕ່າງກັນລະຫວ່າງເພດຍິງ ແລະ ຊາຍບໍ?<br>.....................................................................<br>.....................................................................<br>ເມືອງໃດທີ່ມີຜົນກະທົບຫຼາຍທີ່ສຸດ?<br>..................................................................... |
| **2. ຄວາມຊັດເຈນ ແລະຄວາມເຊື່ອໝັ້ນຂອງຂໍ້ມູນ**<br>(ກ) ທ່ານມີຄວາມຫຍຸ້ງຍາກໃນການເກັບກຳຂໍ້ມູນ ທີ່ຊັດເຈນຈາກໂຮງຮຽນບໍ?<br>(ຂ) ຂໍໃຫ້ທ່ານເຫຼົ່າສະພາບບັນຫານັ້ນ? | |
| **3. ຄວາມແຕກຕ່າງກັນໃນແຕ່ລະເມືອງ**<br>(ກ) ເມືອງໃດທີ່ມີການປ່ຽນແປງຫຼາຍທີ່ສຸດກ່ຽວກັບ ການປະລະການຮຽນໃນ 3 ສົກຮຽນທີ່ຜ່ານມາ?<br>(ຂ) ທ່ານຄິດວ່າຍ້ອນສາເຫດໃດ? | |
| **4. ມີການປ່ຽນແປງໃດແດ່ຢູ່ໃນບັນດາເມືອງນີ້?** | ອຸດສະຫະກຳ, ການຜະລິດກະສິກຳ, ບໍ່ແຮ່, ການຍ້າຍບ້ານ ແລະ ອື່ນໆ |
| **5. ທ່ານຄິດວ່າ <u>ສາເຫດຕົ້ນຕໍ</u>ທີ່ພາໃຫ້ນັກຮຽນຈຳນວນ ດັ່ງກ່າວປະລະການຮຽນ (ອອກໂຮງຮຽນ) ແມ່ນຍ້ອນ ສາເຫດໃດ?** | **ໃຫ້ຈັດລຽງຄວາມສຳຄັນຕາມລຳດັບ**<br>1.....................................................................<br>2.....................................................................<br>..................................................................... |
| **6. ທ່ານຄິດວ່າປັດໄຈຕົ້ນຕໍອັນໃດ ທີ່ພາໃຫ້ນັກຮຽນ ຈຳນວນດັ່ງກ່າວປະລະການຮຽນ (ອອກໂຮງຮຽນ)?** | ☐ຄູບໍ່ໄດ້ມາດຕະຖານ<br>☐ປຶ້ມຕຳລາຮຽນບໍ່ພຽງພໍ<br>☐ຫຼັກສູດຍັງບໍ່ເໝາະສົມ<br>☐ບົດຮຽນບໍ່ເປັນໜ້າສົນໃຈ<br>☐ບໍ່ຮູ້ຄຸນຄ່າການສຶກສາ<br>☐ໂຮງຮຽນຢູ່ໄກບ້ານ<br>☐ເຫດຜົນອື່ນໆ |
| **7. ເງິນຄ່າລົງທະບຽນເຂົ້າຮຽນ**<br>(ກ) ທ່ານຮູ້ບໍວ່າມີໂຮງຮຽນໃດທີ່ຍັງມີການຈ່າຍຄ່າ | |

| | | |
|---|---|---|
| ທຳນຽມ ຫຼື ລົງທະບຽນໃນການຮຽນ?<br>(ຂ) ຄ່າອື່ນໆທີ່ເປັນບັນຫາໃຫ້ແກ່ຄອບຄົວເຊັ່ນ: ເຄື່ອງນຸ່ງ, ປື້ມ? | | |
| **ການແຈກຢາຍປື້ມແບບຮຽນ** | | |
| **1. ຂໍ້ມູນ**<br>-ທ່ານມີຄວາມກ່ຽວຂ້ອງກັບຂໍ້ມູນຈຳນວນປື້ມແບບຮຽນ ແລະ ຄູ່ມືຄູໃຫ້ພຽງພໍໃນລະດັບໃດ? | ຊັ້ນປະຖົມສຶກສາ | ຊັ້ນມັດທະຍົມສຶກສາ |
| **2. ອັດສ່ວນປື້ມຕໍ່ນັກຮຽນ** | - ນະໂຍບາຍແຈກຢາຍປື້ມ ແບບຮຽນ 1 ຊຸດ ຕໍ່ 1 ຄົນ ສາມາດປະຕິບັດໄດ້ແລ້ວບໍ?<br>- ຕ້ອງເຮັດແນວໃດເພື່ອໃຫ້ຖືກຕ້ອງຕາມ ຄວາມເປັນຈິງ? | |
| **3. ການຄຸ້ມຄອງ**<br>ກ. ມີຈັກເປີເຊນທ່ານເກັບໄວ້ເພື່ອທົດແທນຈຳນວນປື້ມທີ່ເສຍຫາຍ?<br>ຂ. ທ່ານຮູ້ບໍວ່າແຕ່ລະປີມີຄວາມຕ້ອງການຫຼາຍປານໃດ?<br>ຄ. ທ່ານມີການຕິດຕາມການຈັດສົ່ງບໍ? ເຮັດແນວໃດ? | <u>ຕົວຢ່າງ:</u> ໂຄງການ EDP2 ໄດ້ສົ່ງປື້ມໃຫ້ແລ້ວ, ທ່ານໄດ້ຮັບຈັກຊຸດ, ແຈກຢາຍແລ້ວຫຼາຍປານໃດ, ທ່ານເກັບໄວ້ຫຼາຍປານໃດ? ຖ້າຫາກບໍ່ພຽງພໍກັບຄວາມຕ້ອງການ ທ່ານແບ່ງປັນໃຫ້ແຕ່ລະເມືອງ ແນວໃດ? | |
| **4. ໜ້າທີ່ຮັບຜິດຊອບ**<br>(ກ) ທ່ານມີໜ່ວຍງານ ຫຼື ຄະນະຮັບຜິດຊອບໃນການຈັດສົ່ງ ປື້ມບໍ? ໜ້າທີ່ຂອງແຕ່ລະຄົນ, ແລະ ອື່ນໆ.<br>(ຂ) ເຂົາເຈົ້າເຂົ້າໃຈກ່ຽວກັບພາລະບົດບາດ ແລະ ໜ້າທີ່ຕົນເອງບໍ? ແລະ ພວກເຂົາໄດ້ຮັບການຝຶກອົບຮົມບໍ ແລະ ມີຄວາມສາມາດໃນການປະຕິບັດວຽກງານຂອງພວກເຂົາບໍ? | | |
| **5. ແຜນວາດຂອງຂະບວນການຈັດສົ່ງປື້ມຕຳລາຮຽນ**<br>(ກ) ທ່ານສາມາດພັນລະນາກ່ຽວກັບຂະບວນການສະໜອງປື້ມໃຫ້ໂຮງຮຽນ<br>(ຂ) ເລີ່ມແຕ່ຕົ້ນຈົນຮອດຂັ້ນສຸດທ້າຍ. ແມ່ນໃຜຮັບຜິດຊອບ, ເວລາຈັດຕັ້ງປະຕິບັດ | ຂັ້ນຕອນສຳລັບຊັ້ນປະຖົມ<br>1.<br>2.<br>3.<br>4.<br>................................ | ຂັ້ນຕອນສຳລັບຊັ້ນມັດທະຍົມ<br>1.<br>2.<br>3.<br>4.<br>................................. |
| **6. ສິ່ງທີ່ທ້າທາຍທີ່ສຸດ ໃນຂະບວນການຈັດສົ່ງປື້ມແມ່ນຫຍັງ?** | ..........................................................................<br>.......................................................................... | |
| **7. ທ່ານມີວິທີແກ້ໄຂແນວໃດຕໍ່ບັນຫາດັ່ງກ່າວ?** | .......................................................................... | |

## ເອກະສານຊ້ອນທ້າຍທີ 2 - ຄຳນິຍາມໃນການຄິດໄລ່ອັດຕາຕ່າງໆ[9]

ອັດຕາປະລະ:

ສັດສ່ວນຂອງນັກຮຽນທີ່ເຂົ້າຮຽນລຸ້ນໃດໜຶ່ງ ໃນຂັ້ນຮຽນໃດໜຶ່ງ ຂອງສົກຮຽນໃດໜຶ່ງ ທີ່ບໍ່ມາຮຽນຢູ່ຂັ້ນຮຽນໃໝ່ໃນສົກຮຽນຕໍ່ມາ. (ຄວາມໝາຍບໍ່ຄືກັບອັດຕາລອດເຫຼືອ)

ອັດຕາຄ້າງຫ້ອງ:

ສັດສ່ວນຂອງນັກຮຽນທີ່ເຂົ້າຮຽນລຸ້ນໃດໜຶ່ງ ໃນຂັ້ນຮຽນໃດໜຶ່ງຂອງສົກຮຽນໃດໜຶ່ງ ທີ່ສືບຕໍ່ຮຽນຢູ່ຂັ້ນເກົ່າໃນສົກຮຽນຕໍ່ມາ.

ອັດຕາລອດເຫຼືອໃນແຕ່ລະຂັ້ນ[10]:

ເປີເຊັນຄວາມຄາດຫວັງຂອງລຸ້ນນັກຮຽນ ທີ່ເຂົ້າປີທີໜຶ່ງ ຂອງຊັ້ນຮຽນໃດໜຶ່ງ ຂອງສົກຮຽນໃດໜຶ່ງ ທີ່ຈະໄປຮຽນຂັ້ນຕໍ່ໄປ.

ການຍົກຍ້າຍມາ:

ຈຳນວນນັກຮຽນທີ່ມາລົງທະບຽນເຂົ້າຮຽນໃໝ່ ໃນຂັ້ນຮຽນໃດໜຶ່ງ ແຕ່ບໍ່ແມ່ນຈຳນວນນັກຮຽນຄ້າງຫ້ອງໃນໂຮງຮຽນດັ່ງກ່າວຂອງສົກຮຽນຜ່ານມາ. ຊຶ່ງນິຍາມດັ່ງກ່າວນັ້ນ ໄດ້ອະທິບາຍເຖິງຄວາມໝາຍຂອງຄຳວ່າ ການຍົກຍ້າຍຂອງນັກຮຽນມາຈາກໂຮງຮຽນອື່ນ

9 ນິຍາມຕ່າງໆໄດ້ມາຈາກເວັບໄຊ http://glossary.uis.unesco.org/glossary/en/home ແລະ ປື້ມຄູ່ມືຕົວຊີ້ບອກຂອງການສຶກສາຊຶ່ງແປໂດຍ ທ່ານ ສົມຂັນ ດີດາຣາວົງ, ຜູ້ອຳນວຍການສູນສະຖິຕິ-ເຕັກໂນໂລຊີ ຂ່າວສານການສຶກສາ, ກະຊວງສຶກສາທິການ. ພຶດສະພາ 2008.

10 ອັດຕາຈົບຊັ້ນປະຖົມ: ອັດຕາຈົບຊັ້ນປະຖົມ ແມ່ນສັດສ່ວນການຮຽນຈົບຊັ້ນປະຖົມສຶກສາໃນສົກຮຽນຜ່ານມາ. (ຄິດໄລ່ໂດຍການເອົາຈຳນວນນັກຮຽນທັງໝົດຂັ້ນຮຽນສຸດທ້າຍ ຂອງຊັ້ນປະຖົມລົບອອກຈຳນວນນັກຮຽນຄ້າງຫ້ອງ ໃນຂັ້ນຮຽນດັ່ງກ່າວ ແລ້ວຫານໃຫ້ຈຳນວນນັກຮຽນທັງໝົດຂອງເດັກໃນເກນອາຍຸຈົບຊັ້ນປະຖົມທາງການ.) ອັດຕາຮຽນຈົບຊັ້ນນີ້ບໍ່ເໝາະສົມກັບ ສປປ ລາວ ຍ້ອນສາເຫດການເຂົ້າຮຽນເກີນເກນອາຍຸເຂົ້າຮຽນຂອງເດັກມີຫຼາຍ ແລະ ມີອັດຕາການຄ້າງຫ້ອງສູງ.

**ເອກະສານຊ້ອນທ້າຍທີ 2 (ຕໍ່) - ວິທີການຄິດໄລ່ອັດຕາ ປະລະ, ຄ້າງຫ້ອງ ແລະ ລອດເຫຼືອ**

*(ປື້ມຕົວຊີ້ບອກຂອງການສຶກສາ, ສຕສ ພຶດສະພາ 2008)*

UNESCO ໄດ້ໃຫ້ຊຸດເຄື່ອງມືທີ່ໃຊ້ຖານການຄິດໄລ່ໃນໂປຣແກມ EXCEL ເພື່ອຄິດໄລ່ອັດຕາປະລະການຮຽນ ການຄ້າງຫ້ອງ ແລະ ອັດຕາລອດເຫຼືອ ຊຶ່ງນຳໃຊ້ວິທີປະຍຸກ " ວິທີການຄິດໄລ່ຕາມລຸ້ນນັກຮຽນ". ໃນແຜນຜັງ ການປ້ອນຂໍ້ມູນຂອງການເຂົ້າຮຽນຕາມຂັ້ນ ແລະ ເພດໃນສອງສົກຮຽນຕາມລຳດັບ.

| | | ຂັ້ນ | 1 | 2 | 3 | 4 | 5 |
|---|---|---|---|---|---|---|---|
| **ລວມທັງໝົດ** | **2009** | ຍ+ຊ | 267,232 | 195,392 | 170,998 | 151,116 | 131,603 |
| | | ຍ | 125,698 | 92,339 | 80,723 | 71,473 | 62,116 |
| | | ຊ | 141,534 | 103,053 | 90,275 | 79,643 | 69,487 |
| | | ຍ+ຊ | 246,197 | 188,654 | 173,585 | 153,528 | 138,159 |
| **ລວມທັງໝົດ** | **2010** | ຍ | 116,439 | 89,551 | 82,251 | 73,271 | 65,538 |
| | | ຊ | 129,758 | 99,103 | 91,334 | 80,257 | 72,621 |
| | | ຍ+ຊ | 68,684 | 22,552 | 12,473 | 6,252 | 2,157 |
| **ຄ້າງຫ້ອງ** | | ຍ | 31,055 | 9,463 | 4,789 | 2,256 | 772 |
| | | ຊ | 37,629 | 13,089 | 7,684 | 3,996 | 1,385 |
| | | ຍ+ຊ | | | | | |
| **ການຍົກຍ້າຍມາ** | | ຍ | | | | | |
| | | ຊ | | | | | |

ເພື່ອເຮັດໃຫ້ການຄາດຄະເນບັນດາຕົວຊີ້ບອກດັ່ງກ່າວໃນລະດັບຈຸນລະພາກ (ແຂວງ ແລະ ເມືອງ), ຈຳນວນຖືກຕ້ອງຊັດເຈນ ພວກເຮົາຕ້ອງຮູ້ຈັກຈຳນວນນັກຮຽນທີ່ຍົກຍ້າຍ ມາຈາກໂຮງຮຽນອື່ນນຳ. ເຊັ່ນຕົວຢ່າງ: ນັກຮຽນບາງຄົນອາດຍ້າຍຈາກໂຮງຮຽນໜຶ່ງ ຂອງເມືອງໜຶ່ງໄປຮຽນຢູ່ໂຮງຮຽນໃໝ່ຂອງເມືອງອື່ນ ໃນໄລຍະການເກັບກຳຂໍ້ມູນຢູ່ຈຸດດັ່ງກ່າວ. ຖ້າຫາກວ່າມີຈຳນວນນັກຮຽນຍ້າຍໄປຮຽນຢູ່ເມືອງອື່ນຢ່າງຫຼວງຫຼາຍ ກໍອາດຈະເຮັດໃຫ້ເກີດມີ ຈຳນວນອັດຕາປະລະຫຼາຍ, ສ່ວນໃນເມືອງທີ່ມີຈຳນວນນັກຮຽນຍ້າຍມາກໍອາດຈະເຮັດໃຫ້ ມີຜົນທາງລົບຕໍ່ອັດຕາປະລະການຮຽນ ແລະ ມີຜົນເຮັດໃຫ້ອັດຕາລອດເຫຼືອຂອງນັກຮຽນເກີນ 100%. ໃນ ສປປ ລາວ , ຍັງບໍ່ມີຂໍ້ມູນກ່ຽວກັບການຍົກຍ້າຍມາຈາກໂຮງຮຽນອື່ນຢູ່ໃນຖານຂໍ້ມູນເທື່ອ, ເພາະສະນັ້ນ ຈຶ່ງເຮັດ ໃຫ້ມີຄວາມຫຍຸ້ງຍາກຫຼາຍໃນການວິເຄາະອັດຕາລອດເຫຼືອຮຽນຈົບຊັ້ນປະຖົມ ຢູ່ໃນຂັ້ນສຶກສາທິການ ແລະ ກິລາເມືອງ ພາຍຫຼັງການປ້ອນຂໍ້ມູນໃນແຜນຜັງ ການຄິດໄລ່ໃນໂປຣແກມ EXCEL ແລ້ວກໍຈະໄດ້ຮັບຕາຕະລາງຜົນຂອງການຄຳນວນຕ່າງໆ ອອກມາຄືກັບຕາຕະລາງທີ່ສະແດງເຖິງການປ່ຽນແປງ ທາງດ້ານປະສິດທິພາບພາຍໃນ ດັ່ງລຸ່ມນີ້:

| ຊາຍ + ຍິງ | Grade 1 | Grade 2 | Grade 3 | Grade 4 | Grade 5 |
|---|---|---|---|---|---|
| ອັດຕາເລື່ອນຊັ້ນ | 62.2% | 82.5% | 86.1% | 90.0% | 98.4% |
| ອັດຕາຄ້າງຫ້ອງ | 25.7% | 11.5% | 7.3% | 4.1% | 1.6% |
| ອັດຕາຄ້າງຫ້ອງ | 12.1% | 6.0% | 6.6% | 5.9% | 0.0% |
| ອັດຕາລອດເຫຼືອ | 100% | 83.7% | 78.0% | 72.4% | 68.0% |
| ຈຳນວນນັກຮຽນແຕ່ລະປີ | 1,346 | 945 | 841 | 755 | 691 |
| ຕົວຄູນປະສິດທິພາບພາໃນ | - | - | - | 69.9% | 74.2% |

<u>ໝາຍເຫດ:</u> ຕາຕະລາງຈຳນວນນັກຮຽນໄດ້ຖືກຄິດໄລ່ແຍກຕາມເພດຊາຍແລະຍິງອອກມາແບບອັດຕະໂນມັດ.

ຕາຕະລາງລຸ່ມນີ້ ສະແດງໃຫ້ເຫັນເຖິງ ຜົນຂອງການຄຳນວນອັດຕາປະລະ, ອັດຕາຄ້າງຫ້ອງ ແລະ ອັດຕາລອດເຫຼືອ ໃນແຕ່ລະຂັ້ນຮຽນຂອງຊັ້ນປະຖົມສຶກສາ. ໄປແກມດັ່ງກ່າວຍັງໄດ້ບອກເຖິງ ຄຳອະທິບາຍຕ່າງໆໄວ້ດັ່ງລຸ່ມນີ້.



**ເອກະສານຊ້ອນທ້າຍທີ 3 - ການທົບທວນວັນນະກຳທີ່ກ່ຽວຂ້ອງກັບການປະລະການຮຽນ**

ການຊ່ວຍເຫຼືອ[11] ທາງດ້ານວິຊາການໃຫ້ແກ່ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ) ໃນການທົບທວນວັນນະກຳຈາກແຫຼ່ງຂໍ້ມູນການຄົ້ນຄວ້າວິໄຈການສຶກສາ (ERF) ຂອງອົງການຊ່ວຍເຫຼືອສາກົນດ້ານການພັດທະນາອົດສະຕາລີ (AusAID) ໄດ້ໃຫ້ຂໍ້ມູນຫຼັກຖານຫຼາຍຢ່າງທີ່ພົວພັນເຖິງສາເຫດ ທີ່ພາໃຫ້ມີການປະລະການຮຽນຂອງນັກຮຽນຊັ້ນປະຖົມ ຢູ່ໃນບັນດາປະເທດກຳລັງພັດທະນາຕ່າງໆດັ່ງນີ້:

- ປັດໄຈທາງດ້ານເສດຖະກິດລວມທັງມູນຄ່າໃຊ້ຈ່າຍໃນການສຶກສາ;
- ຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ;
- ປັດໄຈທີ່ພົວພັນເຖິງຄຸນລັກສະນະຂອງຄົວເຮືອນ ແລະ
- ປັດໄຈທີ່ພົວພັນກ່ຽວກັບເດັກ.
- ນະໂຍບາຍຕໍ່ກັບຄວາມກ້າວໜ້າຂອງນັກຮຽນຕ່ຳ ແລະ ການອອກໂຮງຮຽນ

**ກ. ປັດໄຈທາງດ້ານເສດຖະກິດລວມທັງມູນຄ່າໃຊ້ຈ່າຍໃນການສຶກສາ**

ສະຖານະພາບທາງດ້ານເສດຖະກິດສັງຄົມຕ່ຳ ແມ່ນສາເຫດໜຶ່ງທີ່ພາໃຫ້ຜົນໄດ້ຮັບທາງດ້ານການສຶກສາຕ່ຳ ລວມທັງຜົນສຳເລັດທາງການຮຽນຕ່ຳ. ອຸປະສັກທຳອິດ ທີ່ມີຕໍ່ການເຂົ້າຮຽນ ແລະ ການມາໂຮງຮຽນປົກກະຕິຂອງນັກຮຽນແມ່ນຄ່າທຳນຽມເຂົ້າຮຽນ. ການເຂົ້າຮຽນເພີ່ມຂຶ້ນຢ່າງຫຼວງຫຼາຍຕິດຕາມມາດ້ວຍການຍົກເລີກຄ່າທຳນຽມ ສິ່ງນີ້ເອງທີ່ສະແດງໃຫ້ເຫັນວ່າ ປັດໄຈທາງດ້ານເສດຖະກິດເປັນອຸປະສັກຕົ້ນຕໍ ຕໍ່ການສຶກສາຂອງຫຼາຍໆປະເທດ. ຕົວຢ່າງ: ຢູ່ປະເທດເຄນຢາ ການລົບລ້າງຄ່າທຳນຽມໃນປີ 1974 ເຮັດໃຫ້ຈຳນວນນັກຮຽນປະຖົມ ເພີ່ມຂຶ້ນສອງເທົ່າໃນລະຫວ່າງປີ 1973 ແລະ 1974 (Somerset, 2007). ແຕ່ທ່ານ Chimombo (2009) ສັງເກດເຫັນວ່າ ການເພີ່ມຄ່າທຳນຽມໃນປີ 1982 ຢູ່ປະເທດ Malawi ເຮັດໃຫ້ການເຂົ້າຮຽນຫຼຸດລົງເຊິ່ງສັງເກດໄດ້ວ່າ ການເພີ່ມຄ່າທຳນຽມໃນການເຂົ້າຮຽນຂຶ້ນ ຊຶ່ງມີຜົນກະທົບຢ່າງລະອຽດອ່ອນຕໍ່ຄອບຄົວທຸກຍາກ.

ເຖິງວ່າຄ່າທຳນຽມການເຂົ້າຮຽນຕ່ຳທີ່ສຸດ ທ່ານ Colclough (1996) ໄດ້ສະແດງໃຫ້ເຫັນວ່າຄ່າໃຊ້ຈ່າຍໃນການເຂົ້າຮຽນປະຖົມສຶກສາ ມີຄວາມສຳຄັນຕໍ່ງົບປະມານຂອງຄອບຄົວ ແລະ ການເພີ່ມຄ່າໃຊ້ຈ່າຍໃນການເຂົ້າຮຽນນ້ອຍໆໃຫ້ແກ່ຄົວຄອບມີຜົນກະທົບຢ່າງຮ້າຍແຮງ ຕໍ່ການມາລົງທະບຽນເຂົ້າຮຽນທັງໝົດ. ຢູ່ປະເທດ Malawi ອ້າງອີງຈາກຜົນການຄົ້ນຄວ້າວິໄຈຂອງ ທ່ານ Chimombo (2009) ພົບວ່າການບໍ່ສາມາດຈ່າຍຄ່າທຳນຽມເຂົ້າຮຽນ ແມ່ນເປັນເຫດຜົນທີ່ສຳຄັນທີ່ເຮັດໃຫ້ເດັກບໍ່ເຂົ້າໂຮງຮຽນ ແລະ ປະລະການຮຽນ ຊຶ່ງໃນນີ້ລວມທັງການສຶກສາຄົ້ນຄວ້າຂອງ ທ່ານ Hyde ແລະ ທ່ານ Kadzamira.s (1994) ໄດ້ຊີ້ໃຫ້ເຫັນວ່າ ບ່ອນໃດທີ່ມີການກຳນົດຄືນໃໝ່ກ່ຽວກັບຄ່າທຳນຽມໃຫ້ພໍ່ແມ່ຂອງເດັກຍິງ ທີ່ບໍ່ມາໂຮງຮຽນ, ມາເຂົ້າໂຮງຮຽນຊ້າ ແລະ ປະລະການຮຽນ ກໍມີຜົນເໝືອນກັນ.

[11] ບັນດາເອກະສານ ແລະ ສິ່ງພິມຕ່າງໆຈາກຖານຂໍ້ມູນຂອງຫໍສະມຸດ ACER Cunningham. ອ້າງອີງໄວ້ໃນເອກະສານຊ້ອນທ້າຍຂອງບົດລາຍງານນີ້.

ເຖິງວ່າລັດຖະບານ ໄດ້ລົບລ້າງຄ່າທຳນຽມໂຮງຮຽນ, ປັດໄຈທາງດ້ານເສດຖະກິດ ກໍ່ຍັງເປັນອຸປະສັກທີ່ມີລັກສະນະສູງສົມຄວນຕໍ່ກັບການເຂົ້າຮຽນ ແລະ ອອກໂຮງຮຽນ. ສຳລັບຄອບຄົວທີ່ທຸກຍາກວ່າໝູ່ ແມ່ນມີການຍົກເວັ້ນຄ່າທຳນຽມ ໂດຍສະເພາະແມ່ນເວລາຈ່າຍເປັນເງິນສົດ. ຕົວຢ່າງ Chimombo (2009) ໄດ້ພິສູດໃຫ້ເຫັນວ່າການຂາດເຂີນເຄື່ອງນຸ່ງຮົ່ມ ແລະ ການຂາດເຂີນທາງດ້ານການເງິນເພື່ອຊື້ອຸປະກອນການຮຽນເປັນເຫດຜົນທີ່ເດັກບໍ່ເຂົ້າໂຮງຮຽນ ແລະ ເດັກຍິງກໍ່ບໍ່ຄ່ອຍມາຮ່ວມກິດຈະກຳໃນຫ້ອງຮຽນ. Chandrashekhar and Mukhopadhyay (2006) ກໍ່ເຫັນໃນລັກສະນະດຽວກັນວ່າ ການເພີ່ມຄ່າເຂົ້າຮຽນປະຖົມປະຈຳປີເທື່ອລະໜ້ອຍ ເຮັດໃຫ້ຫຼຸດຜ່ອນຄວາມເປັນໄປໄດ້ຂອງເດັກນ້ອຍຢູ່ປະເທດອິນເດຍທີ່ດຳລົງຊີວິດຢູ່ເຂດຊົນນະບົດໄປເຂົ້າໂຮງຮຽນຫຼຸດລົງ 3% ແລະການຈ່າຍຄ່າເຂົ້າຮຽນປະຖົມດັ່ງກ່າວນີ້ ຍັງໄດ້ກະທົບຕໍ່ເດັກຈາກຊົນຊັ້ນທຸກຍາກ ແລະ ຂາດເຂີນຢ່າງຫຼວງຫຼາຍ.

ການເພີ່ມຄ່າເຂົ້າຮຽນໂດຍກົງ ເຮັດໃຫ້ຫຼາຍຄອບຄົວທີ່ມີລາຍຮັບຕໍ່າຕ້ອງໄດ້ອີງໃສ່ແຮງງານຂອງເດັກຜູ້ທີ່ມີອາຍຸສູງກວ່າ ເພື່ອເຮັດໃຫ້ພວກເຂົາເຈົ້າຍັງສາມາດສືບຕໍ່ຮຽນຢູ່ໃນໂຮງຮຽນຕື່ມຫຼາຍກວ່າສອງຫາສາມປີ (ສະຖາບັນຄົ້ນຄວ້າເພື່ອການພັດທະນາຂອງປະເທດຟິລິບປິນ, 2008).

## **ຂ. ຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ**

ຄຸນນະພາບຂອງລະບົບການສຶກສາ ມີຜົນກະທົບຢ່າງໃຫຍ່ຫຼວງ ແລະ ມີຄວາມສຳຄັນ ຕໍ່ການຮຽນຂອງນັກຮຽນ ລວມທັງຄວາມກ້າວໜ້າ ແລະ ການປະລະການຮຽນຂອງພວກເຂົາ. ຄຸນນະພາບຕໍ່າກະທົບຕໍ່ການປະລະການຮຽນຂອງນັກຮຽນ. ນັກຮຽນອາດປະລະການຮຽນ ຍ້ອນເປັນເດັກທີ່ມີຄວາມຕ້ອງການພິເສດເຂົ້າຮຽນໂດຍບໍ່ໄດ້ຮັບການຊ່ວຍເຫຼືອໃນການຮຽນແບບເດັກພິເສດ ເຮັດໃຫ້ເສັງຕົກ, ຄ້າງຫ້ອງ ແລະ ອອກໂຮງຮຽນໃນທີ່ສຸດ (Lewin, 2007). ທ່ານ Kingdon (2001) ໄດ້ຄົ້ນພົບວ່າການປ່ຽນແປງທາງດ້ານຄຸນນະພາບໃນຫຼາຍໂຮງຮຽນຢູ່ປະເທດອິນເດຍ ມີຜົນກະທົບທີ່ສຳຄັນ ຕໍ່ປີຮຽນຂອງການເຂົ້າຮຽນຢູ່ຊັ້ນປະຖົມ ລວມທັງຄຸນນະພາບຂອງຫ້ອງຮຽນ, ຄຸນນະພາບຂອງການສິດສອນຕໍ່າ ແລະ ການຂາດສອນຂອງຄູ, ຄຸນນະພາບຂອງອຸປະກອນການສອນ ແລະ ຫຼັກສູດຕໍ່າ ແລະ ຫ້ອງຮຽນແອອັດຫຼາຍ. ການສຶກສາຄົ້ນຄວ້າຂອງ Glewwe ແລະ Jacoby ຢູ່ໃນໂຄງການການສຶກສາວິໄຈຂອງປະເທດ Ghana (1994 ແລະ 1995 ອ້າງອີງໃນ Hunt, 2007) ພົບວ່າ ຈຳນວນປີຮຽນຈົບຂອງນັກຮຽນສາມາດເພີ່ມຂຶ້ນຈາກ 2 ປີ ຫາ 2.5 ປີ ໄດ້ໂດຍການເພີ່ມປະສົບການຂອງຄູຂຶ້ນ, ການສ້ອມແປງຫຼັງຄາຮົ່ວ, ການສະໜອງກະດານດຳໃຫ້ໂຮງຮຽນ ຫຼື ຫຼຸດຜ່ອນເວລາໃນການເດີນທາງໄປໂຮງຮຽນ. ພວກເຂົາໄດ້ໃຊ້ຊຸດຂໍ້ມູນດຽວກັນ ເພື່ອຊອກຫາຄຸນນະພາບຂອງການຮຽນມີຜົນກະທົບທີ່ສຳຄັນ ເຮັດໃຫ້ມີການຊັກຊ້າໃນການເຂົ້າຮຽນ.

ພາສາທີ່ນຳໃຊ້ໃນການສິດສອນ ກໍ່ມີອິດທິພົນສຳຄັນຕໍ່ກັບອັດຕາການຄ້າງຫ້ອງ ແລະ ການປະລະການຮຽນເຊັ່ນດຽວກັນ. ໂດຍສະເພາະແມ່ນ ການສຶກສາຄົ້ນຄວ້າຈຳນວນໜຶ່ງພົບວ່າ ອັດຕາ

ການຄ້າງຫ້ອງ ແລະ ອັດຕາປະລະການຮຽນເພີ່ມຂຶ້ນ ໃນເມື່ອນັກຮຽນຖືກສອນໂດຍໃຊ້ພາສາທີ່ບໍ່ແມ່ນພາສາແມ່ຂອງພວກເຂົາເຈົ້າ (Hunt, 2008).

ຄຸນນະພາບຂອງການສຶກສາຕ່ຳ ໄດ້ເຮັດໃຫ້ຫຼາຍໂຮງຮຽນໄດ້ຮັບຜົນກະທົບທາງດ້ານລົບ ຕໍ່ການຮຽນ ແລະ ຄວາມກ້າວໜ້າທາງການຮຽນຂອງນັກຮຽນ ຊຶ່ງມີສ່ວນພົວພັນຢ່າງໃຫຍ່ຫຼວງ ຕໍ່ການປະລະການຮຽນຂອງນັກຮຽນ.

ພ້ອມດຽວກັນນັ້ນ ບັນດາປັດໄຈເຫຼົ່ານີ້ ສາມາດລວມເຂົ້າກັນເພື່ອສ້າງຄວາມເຂົ້າໃຈວ່າ ການສຶກສາຂັ້ນພື້ນຖານອາດຈະບໍ່ກ່ຽວຂ້ອງກັນ ເພາະວ່າສິ່ງທີ່ເດັກນ້ອຍຮຽນໃນໂຮງຮຽນບໍ່ສອດຄ່ອງກັບຊີວິດປະຈຳວັນ ( ສະຖາບັນຄົ້ນຄວ້າເພື່ອການພັດທະນາຂອງປະເທດພິລິບປິນ, 2008 ). ຕົວຢ່າງ: ຢູ່ໃນບົດຄົ້ນຄວ້າວິໄຈຂອງທ່ານ Pryor ແລະ Ampiah ຢູ່ບ້ານໜຶ່ງຂອງເຂດຊົນນະບົດໃນປະເທດ Ghana ໄດ້ໃຫ້ຂໍ້ສັງເກດວ່າ:

> " ຊາວບ້ານຫຼາຍຄົນພິຈາລະນາວ່າ ການສຶກສາຢູ່ບ້ານ Akurase ບໍ່ຄຸ້ມຄ່າ ເພາະວ່າ...ການສຶກສາຂາດຄຸນນະພາບທີ່ພຽງພໍ ເພື່ອຮັບປະກັນການລົງທຶນຂອງເວລາ, ພະລັງງານ ແລະ ຊັບພະຍາກອນທາງດ້ານເສດຖະກິດ " (2003: ໜ້າ 200, ອ້າງອີງໃນ Hunt, 2008).

**ຄ. ປັດໄຈທີ່ພົວພັນເຖິງຄຸນລັກສະນະຂອງຄົວເຮືອນ ແລະ ທັດສະນະຄະຕິຕໍ່ການສຶກສາ**

ການສະທ້ອນໃຫ້ເຫັນຄວາມສຳຄັນ ຂອງອຸປະສັກທາງດ້ານເສດຖະກິດໃນການສຶກສາ, ຈາກການຄົ້ນຄວ້າວິໄຈແບບທົດລອງໄດ້ໃຫ້ຄຳແນະນຳໄວ້ວ່າ ເດັກນ້ອຍຈາກຄອບຄົວທີ່ມີຖານະດີຈະມາໂຮງຮຽນຫຼາຍກວ່າເດັກນ້ອຍຈາກຄອບຄົວທຸກຍາກ, ໃນຂະນະດຽວກັນນັ້ນ ເດັກຈາກຄອບຄົວທຸກຍາກບໍ່ຢາກມາໂຮງຮຽນ ຫຼື ອອກໂຮງຮຽນພາຍຫຼັງມີການເຂົ້າຮຽນມາແລ້ວ. ຕົວຢ່າງ: ການຄົ້ນຄວ້າວິໄຈຂອງ ທ່ານ Brown ແລະ ທ່ານ Park.s (2002) ຢູ່ເຂດຊົນນະບົດຂອງປະເທດຈີນ ໄດ້ຄາດຄະເນໄວ້ວ່າ ເດັກນ້ອຍທີ່ທຸກຍາກ ແລະ ເດັກທີ່ມີອຸປະສັກທາງດ້ານການເງິນມີໂອກາດໃນປະລະການຮຽນໃນຊັ້ນປະຖົມຫຼາຍກວ່າເດັກຜູ້ອື່ນໆ ສາມເທົ່າ. ທ່ານ Colclough ແລະ ທ່ານອື່ນໆ (2000) ໄດ້ອະທິບາຍການພົວພັນລະຫວ່າງຄວາມຮັ່ງມີ ແລະ ການເຂົ້າໂຮງຮຽນໄວ້ດັ່ງນີ້:

> "...ໃນຈຳນວນເດັກທີ່ບໍ່ເຂົ້າໂຮງຮຽນ ຄ່າສະເລ່ຍດັດສະນີຄວາມຮັ່ງມີ ສຳລັບການປະລະການຮຽນ ໂດຍທົ່ວໄປແລ້ວ ແມ່ນສູງກວ່າ ຜູ້ທີ່ບໍ່ເຄີຍໄດ້ເຂົ້າໂຮງຮຽນ...ເດັກທີ່ໄດ້ເຂົ້າໂຮງຮຽນແລ້ວ ໂດຍສະເລ່ຍແມ່ນ ມາຈາກຄອບຄົວທີ່ມີຖານະດີກວ່າ ຜູ້ທີ່ປະລະການຮຽນ, ໃນທາງກົງກັນຂ້າມ, ຈາກຄອບຄົວທີ່ເຄີຍມີຖານະຮັ່ງມີຫຼາຍກວ່າ ເດັກໃນເກນອາຍຸເຂົ້າຮຽນທີ່ບໍ່ເຄີຍໄດ້ລົງທະບຽນເຂົ້າຮຽນຈັກເທື່ອ " (ທ່ານ Colclough ແລະ ທ່ານອື່ນໆ, 2000:ໜ້າ16).

ນອກຈາກແຫຼ່ງຊັບພະຍາກອນຈາກຄົວເຮືອນແລ້ວ, ການຄົ້ນຄວ້າວິໄຈໄດ້ໃຫ້ຄຳແນະນຳວ່າ ຄວາມເຊື່ອໝັ້ນຕໍ່ການສຶກສາເປັນພາກສ່ວນໜຶ່ງທີ່ມີຄວາມສຳຄັນ ຕໍ່ການໄດ້ຮັບການສຶກສາໃນໄລຍະຍາວຂອງເດັກນ້ອຍ (Hunt, 2008). ຜົນກະທົບທາງດ້ານທັດສະນະຄະຕິດັ່ງກ່າວ ມີສ່ວນພົວພັນກັບບົດບາດຍິງ-ຊາຍ, ໃນນັ້ນເດັກຊາຍໄດ້ຮັບບຸລິມະສິດທາງການສຶກສາຫຼາຍກວ່າເດັກຍິງ. ທ່ານ Kadzamira ແລະ ທ່ານ Rose (2003) ຊີ້ໃຫ້ເຫັນວ່າ ເມື່ອມູນຄ່າໃຊ້ຈ່າຍໃນການເຂົ້າຮຽນສູງໂພດສຳລັບຄົວເຮືອນຢູ່ Malawi, ເດັກຍິງທີ່ມາຈາກຄອບຄົວທີ່ທຸກຍາກທີ່ສຸດແມ່ນມາໂຮງຮຽນໜ້ອຍກວ່າໝູ່. ໃນທາງກົງກັນຂ້າມ, ຈາກການຄົ້ນຄວ້າວິໄຈຂອງ ທ່ານ Glick ແລະ ທ່ານ Sahn.s (2000) ຢູ່ປະເທດ Guinea ຊີ້ໃຫ້ເຫັນວ່າ ໃນເມື່ອລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ ການລົງທຶນໃສ່ການສຶກສາສຳລັບເດັກຍິງກໍ່ເພີ່ມຂຶ້ນ ໂດຍບໍ່ມີຜົນກະທົບໃດໆຕໍ່ກັບເດັກຊາຍ. ການຄົ້ນຄວ້າວິໄຈຂອງ ທ່ານ Brown ແລະ ທ່ານ Park.s (2002) ຢູ່ໃນເຂດຊົນນະບົດຂອງປະເທດຈີນຍັງຊີ້ໃຫ້ເຫັນວ່າ ການບໍ່ມີຄວາມສາມາດ ຈ່າຍຄ່າທຳນຽມໃຫ້ໂຮງຮຽນ ເປັນສາເຫດທີ່ພາໃຫ້ເດັກຍິງຕັດສິນໃຈອອກໂຮງຮຽນ 47% ແຕ່ເດັກຊາຍມີພຽງແຕ່ 33% ເທົ່ານັ້ນ. ການຈ່າຍຄ່າທຳນຽມສູງຢູ່ໃນຊັ້ນມັດທະຍົມ ກໍ່ເປັນສາເຫດເຮັດໃຫ້ເດັກຍິງອອກໂຮງຮຽນ 50% ສ່ວນວ່າເດັກຊາຍມີພຽງແຕ່ 8% ເທົ່ານັ້ນ.

ໃນຂະນະທີ່ການສຶກສາຄົ້ນຄວ້າຈຳນວນໜຶ່ງເນັ້ນໃຫ້ເຫັນວ່າ ຄວາມບໍ່ເຕັມໃຈຂອງພໍ່ແມ່ ແລະ ສະມາຊິກໃນຄອບຄົວ ໃນການສົ່ງເສີມການສຶກສາຂອງເດັກ, ການຄົ້ນຄວ້າວິໄຈສ່ວນຫຼາຍໄດ້ໃຫ້ຄຳແນະນຳວ່າ ການຕັດສິນໃຈຂອງພໍ່ແມ່ແມ່ນອີງໃສ່ ຄວາມຄາດຫວັງຈາກສິ່ງຕອບແທນຈາກການສຶກສາຢ່າງມີເຫດຜົນ. ສຳລັບຄອບຄົວຊາວນາທີ່ພໍແຕ່ກຸ້ມກິນ ບໍ່ເຄີຍຄິດວ່າການສຶກສາ ຈະສາມາດຕອບສະໜອງຄວາມຫວັງໃນອະນາຄົດໃຫ້ພຽງພໍໄດ້ ຈາກການໃຊ້ຈ່າຍຕ່າງໆເຂົ້າໃນການສຶກສາ ນັບທັງຄ່າໃຊ້ຈ່າຍທາງກົງ ແລະ ຄ່າໃຊ້ຈ່າຍທີ່ເປັນແຮງງານ (Hunt, 2008).

## ໑. ປັດໄຈທີ່ກ່ຽວຂ້ອງກັບເດັກ

ຜົນການຮຽນຂອງນັກຮຽນຕໍ່າ ເປັນຕົວກຳນົດທີ່ສຳຄັນທີ່ເຮັດໃຫ້ເດັກບໍ່ສາມາດເລື່ອນຂຶ້ນຫ້ອງໄດ້ໃນແຕ່ລະຂັ້ນແລ້ວກໍ່ອອກໂຮງຮຽນໃນທີ່ສຸດ. ຄວາມສະຫຼາດໂດຍທຳມະຊາດຂອງນັກຮຽນມີຜົນກະທົບຕໍ່ຜົນການຮຽນຂອງນັກຮຽນ. ນອກຈາກນັ້ນ, ການປະສົບປະສານຂອງປັດໄຈທາງດ້ານເສດຖະກິດ, ຄຸນນະພາບຂອງໂຮງຮຽນ ແລະ ຄຸນລັກສະນະຂອງຄົວເຮືອນ ແລະ ການປະສົບປະສານທາງດ້ານສຸຂະພາບ[12] ມີຜົນກະທົບຕໍ່ຜົນການຮຽນຂອງນັກຮຽນຈຳນວນຫຼາຍ (Hunt, 2008).

ການຕັດສິນໃຈຂອງພໍ່ແມ່ ແລະ/ຫຼື ເດັກໃນການອອກໂຮງຮຽນພາຍຫຼັງທີ່ເຂົ້າໂຮງຮຽນແລ້ວ ພົບເຫັນຫຼາຍທີ່ສຸດ ແມ່ນເປັນເຫດການນ້ອຍໆທີ່ແຕກຕ່າງກັນ ບໍ່ແມ່ນເຫດການສະເພາະອັນໃດອັນໜຶ່ງ. ບັນຫາຕົ້ນຕໍແມ່ນ ນັກຮຽນມີບັນຫາກ່ຽວກັບການຮຽນຂອງພວກເຂົາ ຊຶ່ງເຮັດໃຫ້ລຳບາກແກ່ພວກເຂົາທີ່ຈະຮຽນໃຫ້ທັນໝູ່. ໂດຍສະເພາະແລ້ວ, ການຂາດຄວາມກ້າວໜ້າໃນແຕ່ລະຂັ້ນຮຽນ ເຮັດໃຫ້ພໍ່

[12] ມີຫຼາຍກຸ່ມທີ່ມີບັນຫາທາງດ້ານສຸຂະພາບທີ່ກະທົບຕໍ່ການເຂົ້າຮຽນ, ການມາໂຮງຮຽນ ແລະ ຜົນການຮຽນຂອງນັກຮຽນລວມທັງການຂາດສານອາຫານ, ພິການ, ການເຈັບເປັນ, ການຖືພາ, ແລະ ຄວາມຮັບຜິດຊອບໃນການເບິ່ງແຍງຖ້າມີພີ່ນ້ອງເຈັບເປັນ.

ແມ່ຜູ້ປົກຄອງ ແລະ ເດັກ ທີ່ຈະຕັ້ງຄຳຖາມວ່າ ເຂົາຈະສືບຕໍ່ຮຽນ ຫຼື ບໍ່ ຊຶ່ງມີການພົວພັນຢ່າງສະໜິດແໜ້ນເຖິງການຄ້າງຫ້ອງ ແລະ ປະລະການຮຽນ, ໃນໄລຍະສັ້ນ (ໃນເມື່ອຕ້ອງການໃຫ້ເດັກຄ້າງຫ້ອງ ເຂົາອາດຈະອອກໂຮງຮຽນ) ແລະ ໃນໄລຍະຍາວ (ໃນເມື່ອນັກຮຽນຄ້າງຫ້ອງໃນທີ່ສຸດ ກໍ່ມັກຈະອອກໂຮງຮຽນ).

ການໃຫ້ບຸລິມະສິດທາງການສຶກສາຂອງຄອບຄົວຕໍ່ກັບເດັກຍິງ ແລະ ເດັກຊາຍ ສະທ້ອນໃຫ້ເຫັນວ່າ ບັນຫາການໃຫ້ບຸລິມະສິດແກ່ເດັກຍິງມີໜ້ອຍກວ່າເດັກຊາຍ. ຕົວຢ່າງ: ການສຳຫຼວດຂອງທ່ານ Brock ແລະ ທ່ານ Cammish (1997) ຢູ່ ປະເທດ Sierra Leone ແລະ ປະເທດ Vanuatu ພົບວ່າ ເດັກຍິງທີ່ຄ້າງຫ້ອງສ່ວນຫຼາຍແມ່ນອອກໂຮງຮຽນ ແຕ່ວ່າເດັກຊາຍສ່ວນຫຼາຍມັກມາຮຽນຄືນ. ທ່ານ Kane (2004, ຂຽນຢູ່ໃນ Hunt, 2008) ໄດ້ອະທິບາຍວ່າ ເດັກຊາຍສ່ວນຫຼາຍແມ່ນຮຽນຄືນຫຼາຍກວ່າເດັກຍິງ ກໍ່ເພາະວ່າເດັກຊາຍໄດ້ຮັບຄວາມເອົາໃຈໃສ່ຫຼາຍກວ່າເດັກຍິງ.

ໂດຍທົ່ວໄປແລ້ວ ເດັກທີ່ມີຜົນການຮຽນຕ່ຳກວ່າຜູ້ອື່ນ ຕ້ອງໄດ້ຮຽນຄືນ ແລະ ອອກໂຮງຮຽນໃນທັນທີທັນໃດໂລດ ຫຼື ໃນທີ່ສຸດກໍ່ອອກໂຮງຮຽນກ່ອນຮຽນຈົບຫຼັກສູດ.

### ຈ. ນະໂຍບາຍຕໍ່ກັບຄວາມກ້າວໜ້າຂອງນັກຮຽນ ແລະ ການອອກໂຮງຮຽນ

ຂະນະທີ່ລຳດັບປັດໄຈອື່ນໆມີຄວາມສຳຄັນຢ່າງຈະແຈ້ງ, ການກຳນົດຂີດໝາຍຄວາມກ້າວໜ້າຂອງນັກຮຽນໃນໂຮງຮຽນນັ້ນ ແມ່ນໜ້າທີ່ຂອງຜູ້ບໍລິຫານຄຸ້ມຄອງລະບົບການສຶກສາ ເພື່ອຈັດຄວາມດຸ່ນດ່ຽງໃນການຂະຫຍາຍໂອກາດໃນການເຂົ້າຮຽນໃຫ້ສອດຄ່ອງກັບຄຸນນະພາບຂອງການສຶກສາ. ຢູ່ໃນການທົບທວນບັນຫາ ແລະ ຍຸດທະສາດຂອງຂະແໜງການສຶກສາ ໃນຂົງເຂດອາຊີປາຊີຟິກ ປີ 2008, ທະນາຄານພັດທະນາອາຊີ ໄດ້ເລັ່ງໃສ່ການສັງເກດການຂະຫຍາຍໂອກາດການເຂົ້າຮຽນ (ໃຫ້ເດັກໄດ້ເຂົ້າໂຮງຮຽນ) ຢູ່ໃນຫຼາຍໆປະເທດ ດ້ວຍການໃຊ້ມາດຕະການຮັກສາບໍ່ໃຫ້ເດັກອອກໂຮງຮຽນ. ຜົນສຸດທ້າຍແລ້ວທະນາຄານພັດທະນາອາຊີໄດ້ໃຫ້ຂໍ້ສັງເກດວ່າ:

> " ບັນດາປະເທດ [ບາງປະເທດ], ເສັ້ນທາງໃນການບັນລຸເປົ້າໝາຍການສຶກສາປະຖົມແບບທົ່ວເຖິງແມ່ນການຈັດບຸລິມະສິດໃນການສ້າງໂຮງຮຽນໃຫ້ຫຼາຍຂຶ້ນ ແລະ ຈ້າງຄູສອນໃຫ້ຫຼາຍຂຶ້ນກວ່າການເລັ່ງໃສ່ຄຸນນະພາບຂອງການຮຽນ. ຜົນໄດ້ຮັບດັ່ງກ່າວນີ້ບໍ່ໜ້າເພິ່ງພໍໃຈ. ເຖິງວ່າການເຂົ້າຮຽນໃນເບື້ອງຕົ້ນເພີ່ມຂຶ້ນແຕ່ຫຼັງຈາກນັ້ນກໍ່ຫຼຸດໜ້ອຍຖອຍລົງ ເຊິ່ງເປັນຜົນກະທົບໃຫ້ແກ່ການເສຍຊັບພະຍາກອນທີ່ເຮັດໜ້າທີ່ສອນນັກຮຽນໃນໄລຍະສັ້ນ ຈາກນັ້ນເຂົາກໍ່ກາຍເປັນຄົນກືກໜັງສືຄືນ" (ADB, 2008, ໜ້າທີ 10).

ດັ່ງທີ່ໄດ້ກ່າວມາແລ້ວ ຈາກທະນາຄານພັດທະນາອາຊີ, ການລົບລ້າງຄ່າທຳນຽມມີຜົນກະທົບໂດຍກົງຕໍ່ກັບຄຸນນະພາບຂອງການສຶກສາໃນລະດັບໂຮງຮຽນ ເພາະວ່າການຈັດການຮຽນ-ການສອນໃນລະດັບໂຮງຮຽນ ຕ້ອງໄດ້ປະເຊີນໜ້າກັບການເຂົ້າຮຽນຢູ່ໃນຂັ້ນເລີ່ມຕົ້ນເປັນຈຳນວນຫຼວງຫຼາຍ. ຕາມທຳມະດາແລ້ວ ບັນດາລະບົບການສຶກສາຕ່າງໆໄດ້ເລືອກໃຊ້ຍຸດທະສາດເພື່ອຈັດຕັ້ງປະຕິບັດກັບ

ຈຳນວນນັກຮຽນທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍຊຶ່ງມີຜົນກະທົບຕາມມາຕໍ່ການປະລະການຮຽນເພີ່ມຂຶ້ນ ແລະ ອັດຕາການຮຽນຈົບຊັ້ນຫຼຸດລົງ. ບັນດາຍຸດທະສາດດັ່ງກ່າວມີຄື:

- ການບັນຈຸຄູທີ່ບໍ່ໄດ້ຜ່ານການຝຶກອົບຮົມເພີ່ມຂຶ້ນ;
- ການຂະຫຍາຍຂະໜາດຂອງຫ້ອງຮຽນ[13];
- ຫັນປ່ຽນຊັບພະຍາກອນຈາກຂັ້ນສູງລົງມາເລັ່ງໃສ່ການສຶກສາໃນຂັ້ນພື້ນຖານທີ່ມີການເຂົ້າຮຽນເພີ່ມຂຶ້ນ ແລະ;
- ການນຳໃຊ້ວິທີເກັບຄ່າທຳນຽມໃນຫຼາຍວິທີເພື່ອຈັດຕັ້ງປະຕິບັດກັບຈຳນວນນັກຮຽນ[14] ທີ່ເພີ່ມຂຶ້ນ.

ບັນຫາດັ່ງກ່າວນີ້ ແມ່ນພົບເຫັນຢູ່ປະເທດ Kenya. ການລຶບລ້າງຄ່າທຳນຽມຢູ່ປະເທດ Kenya ໃນປີ 1974 ເຮັດໃຫ້ຈຳນວນນັກຮຽນໃນຊັ້ນປະຖົມເພີ່ມຂຶ້ນຫຼາຍກວ່າສອງເທົ່າໃນລະຫວ່າງປີ 1973 ແລະ1974, ເຊິ່ງສ້າງຄວາມກົດດັນໃຫ້ແກ່ໂຮງຮຽນປະຖົມເຊັ່ນ: ການຝຶກອົບຮົມຄູສອນ, ການຂາດເຂີນອຸປະກອນການຮຽນ ແລະ ຫ້ອງຮຽນ (Somerset, 2007). ເພື່ອແກ້ໄຂ ການຂາດເຂີນຄູສອນ ລັດຖະບານປະເທດ Kenyan ໄດ້ບັນຈຸຄູສອນ ທີ່ບໍ່ໄດ້ຮັບການຝຶກອົບຮົມ ເປັນຈຳນວນຫຼວງຫຼາຍ ເຊິ່ງເພີ່ມອັດຕາສ່ວນຂອງຄູສອນປະຖົມທັງໝົດຈາກ 22% ໃນປີ 1973 ເປັນ 37% ພາຍໃນປີ 1976. ຄຸນນະພາບຂອງການສຶກສາ ໃນເວລານັ້ນໄດ້ຊຸດໂຊມລົງຢ່າງໄວວາ.

ຍ້ອນເຫດຜົນດັ່ງກ່າວນີ້ ເຮັດໃຫ້ການເຂົ້າຮຽນໃນຂັ້ນປ.1 ເພີ່ມຂຶ້ນຢ່າງຫຼວງລາຍໃນປີ 1974 ພ້ອມດຽວກັນນັ້ນອັດຕາປະລະການຮຽນໃນຮຸ້ນນັກຮຽນປະຖົມປີທີ 1 ຜ່ານລະບົບຂອງໂຮງຮຽນ ກໍ່ເພີ່ມຂຶ້ນຢ່າງໄວວາ. ເມື່ອນັກຮຽນປ.1 ທີ່ເຂົ້າຮຽນໃນປີ 1974 ຮຽນຮອດປ. 5 ໃນປີ 1978 ກໍເຫັນວ່າມີຈຳນວນຫຼຸດລົງຈາກ 956,800 ຄົນ ຫາ 433,700 ຄົນເທົ່ານັ້ນ ເຊິ່ງອັດຕາປະລະການຮຽນສະສົມໃນສີ່ປີ ແມ່ນ 54.7% (Somerset, 2007).

ໃນລັກສະນະດຽວກັນນີ້ ການລຶບລ້າງຄ່າທຳນຽມຢູ່ປະເທດ Malawi ໃນປີ 1994–95 ໄດ້ຫຼຸດຜ່ອນຄ່າໃຊ້ຈ່າຍໃນການເຂົ້າຮຽນຂອງເດັກໂດຍກົງຕໍ່ພໍ່ແມ່ນັກຮຽນລົງ ແລະ ມີຜົນດີໃຫ້ແກ່ການເຂົ້າຮຽນເພີ່ມຂຶ້ນຢ່າງທັນທີທັນໃດ. ເຖິງແມ່ນວ່າມີການປັບປຸງການເຂົ້າຮຽນກໍຕາມ ແຕ່ອັດຕາປະລະການຮຽນ ແລະ ອັດຕາການຮຽນຈົບຊັ້ນກໍຍັງບໍ່ທັນສາມາດປັງປຸງໄດ້ຢ່າງເປັນປົກກະຕິ ຍ້ອນແນວນັ້ນ

---

[13] ດັ່ງທີ່ໄດ້ອະທິບາຍໂດຍທ່ານ Somerset (2007) ໃນການດັດແກ້ນະໂຍບາຍກ່ຽວກັບຄ່າຮຽນຢູ່ປະເທດເຄນຢາ ໃນປີ 1979 ເຊິ່ງເປັນຜົນໃຫ້ການເຂົ້າຮຽນທັງໝົດເພີ່ມຂຶ້ນ 703,000 (ຈາກ 2,994,900 ໃນປີ 1978 ຫາ 3,698,200 ໃນປີ 1979). ແຕ່ມີການບັນຈຸຄູພິ່ມພຽງແຕ່ 2,436 ເທົ່ານັ້ນ (90,391 ຫາ 92,827), ສະນັ້ນ ອັດຕາສ່ວນນັ້ກຮຽນຕໍ່ຄູເພີ່ມຂຶ້ນຢ່າງຫຼວງຫຼາຍ ຈາກ 33.13 ເປັນ 39.84. ໃນປີຕໍ່ມາການບັນຈຸຄຸເພີ່ມຂຶ້ນ ແຕ່ ອັດຕາສ່ວນນັກຮຽນຕໍ່ຄູພັດຍັງບໍ່ຫຼຸດ 35 ຈົນຮອດປີ 1985.

[14] ຕົວຢ່າງ Somerset (2007) ອະທິບາຍວິທີທີ່ທາງໂຮງຮຽນຢູ່ປະເທດເຄນຢາຮັບຜິດຊອບໃນການກໍ່ສ້າງຫ້ອງຮຽນ, ຫ້ອງການໃຫ້, ເຮືອນໃຫ້ຄູ ແລະ ການສ້ອມແປງຕຶກຕ່າງໆໃນຊຸມປີ 1970. ເພື່ອຕອບສະໜອງຄວາມຕ້ອງການໃນການເພີ່ມສິ່ງອຳນວຍຄວາມສະດວກທາງໂຮງຮຽນເປັນຜົນມາຈາກການລຶບລ້າງ, ການຕອບສະໜອງໂຮງຮຽນໂດຍເພີ່ມຫ້ອງຮຽນໝູນວຽນ, ສ່ວນໃຫຍ່ແມ່ນລະດັບສູງກວ່າຄ່າຮຽນເກົ່າ

ການເຂົ້າຮຽນໃນຂັ້ນຕ່ຳກວ່າ ຈຶ່ງບໍ່ໄດ້ຮັບການເອົາໃຈໃສ່ຢ່າງສະໝ່ຳສະເໝີ ແລະ ສົ່ງຜົນໃຫ້ແກ່ອັດຕາປະລະການຮຽນເພີ່ມຂຶ້ນ (Chimombo, 2009).

ຫຼັກຖານອື່ນໆ ຈາກເອກະສານຕ່າງໆທີ່ກ່ຽວຂ້ອງກັບ ການປະລະການຮຽນທີ່ເພີ່ມຂຶ້ນ ແມ່ນຍ້ອນການນຳໃຊ້ມາດຕະຖານສຳລັບການຄ້າງຫ້ອງ ສູງໂພດ. ເມື່ອບັງຄັບໃຫ້ນັກຮຽນຮຽນຄືນ ເຊິ່ງເປັນມາດຕະການໜຶ່ງ ທີ່ເຮັດໃຫ້ນັກຮຽນ "ອອກໂຮງຮຽນ" ໂດຍນຳໃຊ້ນະໂຍບາຍທີ່ເຄັ່ງຄັດ ແລະມາດຕະຖານຄຸ້ມຄອງການຄ້າງຫ້ອງ ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ກັບການປະລະການຮຽນ ຢູ່ໃນຫຼາຍໆປະເທດ. Somerset (2007) ອະທິບາຍວ່າ ຜົນຂອງການສອບເສັງຂຶ້ນປີທີ 7 ໃນແຕ່ລະໂຮງຮຽນຢູ່ປະເທດ Kenya ເຮັດໃຫ້ມີການຄ້າງຫ້ອງຢູ່ປີທີ 6 ເພີ່ມຂຶ້ນຢ່າງຫຼວງຫຼາຍ ເພາະວ່າແຕ່ລະໂຮງຮຽນແມ່ນເລັງໃສ່ ຄຸນນະພາບຂອງການສຶກສາ ຢູ່ໃນປີທີ 7. ໃນຕົວຈິງແລ້ວ, ໂຮງຮຽນໄດ້ເລີ່ມລຸດຜ່ອນການສົ່ງເສີມນັກຮຽນອ່ອນ ທີ່ຜ່ານການສອບເສັງເອົາໃບປະກາດສະນິຍະບັດຈົບຊັ້ນປະຖົມລະດັບຊາດເພື່ອຮັກສາພາບພົດຂອງໂຮງຮຽນ ໝາຍຄວາມວ່ານັກຮຽນອ່ອນຕ້ອງຖືກບັງຄັບໃຫ້ຮຽນຄືນຢູ່ໃນປີທີ 6 ຫຼື ບໍ່ດັ່ງນັ້ນກໍ່ໃຫ້ອອກໂຮງຮຽນໄປເລີຍ.

ເຊັ່ນດຽວກັນນີ້, ພໍ່ແມ່ນັກຮຽນທີ່ຖືກສຳພາດກ່ຽວກັບການປະລະການຮຽນ ຂອງລູກພວກເຂົາຢູ່ປະເທດ Mongolia ໂດຍ Batbaatar, et al, (2006) ໄດ້ໃຫ້ຄຳແນະນຳວ່າ ຍ້ອນມີການສົ່ງເສີມໃຫ້ໂຮງຮຽນປະຕິບັດໃຫ້ໄດ້ຕະຖານການຮຽນສູງ, ດັ່ງນັ້ນ ນັກຮຽນອ່ອນແມ່ນ ຖືກອະນຸຍາດໃຫ້ອອກໂຮງຮຽນ ຫຼື ສົ່ງເສີມໃຫ້ອອກໂຮງຮຽນ.

ທະນາຄານພັດທະນາອາຊີ (2008) ໄດ້ສັງເກດວ່າ ໃນຊຸມປີທີ່ຜ່ານມາແມ່ນສາມາດຮຽນຮູ້ກ່ຽວກັບຄວາມຮູ້ສຶກ ໃນການສົ່ງເສີມໃຫ້ "ອອກໂຮງຮຽນ" ໂດຍຜ່ານການຮຽນຄືນ ແລະ ມາດຕະຖານທີ່ບໍ່ສາມາດໃຊ້ໄດ້. ທະນາຄານພັດທະນາອາຊີໄດ້ອ້າງອີງເຖິງຕົວຢ່າງຂອງປະເທດ Bangladesh ບ່ອນທີ່ມີອັດຕາການຄ້າງຫ້ອງປ.1 ເທົ່ານັ້ນຫຼຸດລົງຈາກ 45% ຫາ 6% ຢູ່ໃນໄລຍະສິບປີທີ່ຜ່ານໂດຍມີການປ່ຽນແປງທັດສະນະຄະຕິໃນການບໍລິຫານ ແລະ ນະໂຍບາຍຕ່າງໆ. ມີພຽງແຕ່ 4 ປະເທດໃນເອເຊຍເທົ່ານັ້ນທີ່ໄດ້ລາຍງານວ່າມີການຄ້າງຫ້ອງສູງກວ່າ 9% (ທຸກຂັ້ນຮຽນ), ຊຶ່ງໃນນັ້ນ ສປປ ລາວ ກໍ່ແມ່ນໜຶ່ງໃນສີ່ປະເທດດັ່ງກ່າວ ທີ່ມີການຄ້າງຫ້ອງສູງເຖິງ 20% (ADB, 2008).

### ສ. ສະຫຼຸບຜົນການທົບທວນວັນນະກຳທີ່ກ່ຽວຂ້ອງກັບການປະລະການຮຽນ

ສະຫຼຸບລວມແລ້ວ ແມ່ນມີຫຼາຍສາເຫດທີ່ພາໃຫ້ການຂະຫຍາຍໂອກາດການເຂົ້າຮຽນ ແລະການສືບຕໍ່ຮຽນຢູ່ໃນໂຮງຮຽນປະຖົມ ຢູ່ໃນບັນດາປະເທດທີ່ກຳລັງພັດທະນາບໍ່ສາມາດປະຕິບັດໄດ້ຫຼາຍເທົ່າທີ່ຄວນ. ຜ່ານຈາກການທົບທວນຈາກເອກະສານຕ່າງໆ ໂດຍສັງເຂບ ໄດ້ພິສູດໃຫ້ເຫັນວ່າ ມີຫຼາຍກໍລະນີທີ່ມີການປ່ຽນແປງທາງດ້ານນະໂຍບາຍ ຢູ່ໃນບັນດາປະເທດທີ່ກຳລັງພັດທະນາ ມີຜົນໂດຍກົງຕໍ່ການເຂົ້າຮຽນເພີ່ມຂຶ້ນຢ່າງໝັ້ນຄົງ ແລະ ພົວພັນກັບ ອັດຕາລອດເຫຼືອ ຮຽນຈົບຊັ້ນປະຖົມທີ່ຫຼຸດລົງລວມທັງການປະລະການຮຽນຂອງເດັກທີ່ເພີ່ມຂຶ້ນ. ໃນກໍລະນີ້ ຍັງຢືນໄດ້ຈາກຕົວຢ່າງການລົບລ້າງຄ່າ

ທຳນຽມຢູ່ປະເທດ Kenya ແລະ ປະເທດ Malawi ຊຶ່ງມີຜົນເຮັດໃຫ້ຄຸນນະພາບການສຶກສາຫຼຸດລົງໃນເມື່ອໂຮງຮຽນຕ້ອງປະເຊີນໜ້າກັບການລົງທະບຽນເຂົ້າຮຽນຂອງນັກຮຽນໃນຈຳນວນຫຼວງຫຼາຍ.

ໃນກໍລະນີອື່ນໆ ແມ່ນການນຳໃຊ້ມາດຕະຖານທີ່ເຄັ່ງຄັດ ເພື່ອຕິດຕາມຄວາມກ້າວໜ້າຂອງນັກຮຽນ ແມ່ນມີຜົນກະທົບຢ່າງຫຼວງຫຼາຍ ກັບການສືບຕໍ່ຮຽນຢູ່ໃນໂຮງຮຽນຂອງເດັກ ແລະ ເຮັດໃຫ້ມີຄວາມກົດດັນເພີ່ມຂຶ້ນຕໍ່ເດັກໃນການອອກໂຮງຮຽນ.

**ເອກະສານຊ້ອນທ້າຍທີ 4 - ລາຍຊື່ຜູ້ທີ່ມີສ່ວນຮ່ວມໃນການສຳຫຼວດແລະປະເມີນຜົນແບບຮີບດ່ວນ**

**I. ຄະນະຮັບຜິດຊອບ**

| | |
|---|---|
| 1. ທ່ານ ລີຕູ້ ບົວປາວ | ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການແລະກິລາ |
| 2. ທ່ານ ແສງສົມພອນ ວິລະວຸດ | ຫົວໜ້າກົມແຜນການ |
| 3. ທ່ານ ຈະເລີນ ສຸວົງ | ຫົວໜ້າກົມອະນຸບານ ແລະ ປະຖົມສຶກສາ |
| 4. ທ່ານ ຣສ. ດຣ. ພັນ ຈຳປາທອງ | ຜ.ອ ສູນຄົ້ນຄວ້າຍຸດທະສາດແລະວິໄຈການສຶກສາ (ສຍວ) |
| 5. ທ່ານ ສົມຂັນ ດີດາຣາວົງ | ຜ.ອ ສູນສະຖິຕິເຕັກໂນໂລຊີຂ່າວສານການສຶກສາ (ສຕສ) |

**II. ທີມງານວິຊາການ**

| | |
|---|---|
| 1. ທ່ານ ສົມບູນ ມາສຸວັນ | ຮອງຫົວໜ້າກົມອະນຸບານ ແລະ ປະຖົມສຶກສາ |
| 2. ທ່ານ ຣສ.ດຣ ໂພສີ ຈັນມີ່ງ | ຮອງຫົວໜ້າຫ້ອງການຄົ້ນຄວ້າວິທະຍາສາດ, (ມຊ) |
| 3. ທ່ານ ກາດຳ ວົງເດືອນ | ຫົວໜ້າພະແນກວິໄຈການສຶກສາ (ສຍວ) |
| 4. ທ່ານ ແສງແກ້ວ ແພງຊະນະ | ວິຊາການ (ສຍວ) |
| 5. ທ່ານ ສົມພາວັນ ຈັນທະລາດ | ວິຊາການ (ສຍວ) |
| 6. ທ່ານ ນ.ເມທິນ ພັນລັກ | ວິຊາການ (ສຍວ) |
| 7. ທ່ານ ນ.ດາລາສະຫວັນ ຈັນທະລິເດດ | ວິຊາການ (ສຍວ) |
| 8. ທ່ານ ບຸນປອນ ແກ້ວແພງຫຼ້າ | ວິຊາການ ກົມແຜນການ |
| 9. ທ່ານ ນ.ວັນມະນີ ວັນນະສີ | ຮອງຫົວໜ້າພະແນກບໍລິຫານວິຊາການ (ຄສສ, ມຊ) |
| 10. ທ່ານ ນ.ດາວັນ ໄຊຍະສິງ | ວິຊາການ ກົມອະນຸບານ ແລະ ປະຖົມສຶກສາ |
| 11. ທ່ານ ສຸກສາຄອນ ສຸລິວົງ | ວິຊາການ (ສຕສ) |
| 12. ທ່ານ ນ.ຄຳເຄື່ອນ ວັນນະສຸກ | ຫົວໜ້າຫ້ອງການຕິດຕາມແລະປະເມີນຜົນ, ກົມກວດກາ |
| 13. ທ່ານ ນ.ຈິດດາວອນ ບູລົມ | ວິຊາການ ກົມກວດກາ. |

**III. ຄະນະທີ່ປຶກສາ**

| | |
|---|---|
| 1.ທ່ານ Mike Lally | ທີ່ປຶກສາອະວຸໂສຂະແໜງການສຶກສາ |
| 2.ທ່ານ ນ. Julie Chinnery | ທີ່ປຶກສາພາຍໃນ |
| 3.ທ່ານ ນ. Hetty Cislowski | ຊ່ຽວຊານການຄົ້ນຄວ້າວິໄຈ (ERF) |

**IV. ໜ່ວຍງານທີ່ຮັບຜິດຊອບ**

ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ (ສຍວ).